## ສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ

# ຄູ່ມືການນຳເຂົ້າ ແລະ ສົ່ງອອກ

*Version 1.0*

*ມິຖຸນາ 2012*

*http://laotradeportal.gov.la*

ກົມການນຳເຂົ້າ ແລະ ສົ່ງອອກ
ກະຊວງອຸດສາຫະກຳ ແລະ ການຄ້າ
ຖະໜົນ ໂພນໄຊ ບ້ານໂພນໄຊ ເມືອງໄຊເສດຖາ
ນະຄອນຫລວງວຽງຈັນ
ສ ປ ປ ລາວ

**ສາລະບານ**

ສາລະບານ ....... Error! Bookmark not defined.
ການນໍາເຂົ້າ ແລະ ການສົ່ງອອກ ....... 1
*ການນໍາເຂົ້າທາງການຄ້າ* ....... 2
ສິນຄ້າຜ່ານ ....... Error! Bookmark not defined.
ການນໍາເຂົ້າສິນຄ້າການກະເສດ, ສັດ, ຢາ ແລະອາຫານ ....... 11
ຜະລິດຕະພັນກະສິກໍາ ....... 11
ສັດ ແລະ ປາ ....... 12
ຢາ ....... 12
ອາຫານ ....... 12
ການຍົກເວັ້ນພາສີ ....... 16
ຂໍ້ຕົກລົງການຄ້າເສລີ (FTA) ....... 16
ຂະບວນການ ....... 22
ການແຈ້ງພາສີສໍາລັບການນໍາເຂົ້າ (ທົ່ວໄປ) ....... 26
Note 1 ....... 28
Note 2 ....... 28
Note 3 ....... 28
Note 4 ....... 28
Note 5 ....... 28
Note 6 ....... 28
ການແຈ້ງພາສີສໍາລັບການນໍາເຂົ້າ (Asycuda) ....... 29
Note 1 ....... 31
Note 2 ....... 31
Note 3 ....... 31
Note 4 ....... 31
Note 5 ....... 31
Note 6 ....... 32
Note 7 ....... 32

ການແຈ້ງພາສີສໍາລັບການສົ່ງອອກ (ທົ່ວໄປ) ... 32
Note 1 ... 34
Note 2 ... 34
Note 3 ... 34
Note 4 ... 34
Note 5 ... 34
Note 6 ... 34
Note 7 ... 35
ການແຈ້ງພາສີສໍາລັບການສົ່ງອອກ (Asycuda) ... 36
Note 1 ... 38
Note 2 ... 38
Note 3 ... 38
Note 4 ... 38
Note 5 ... 38
Note 6 ... 38
Note 7 ... 39
Note 8 ... 39
ຜ່ານແດນ ... 40
Note 1 ... 42
Note 2 ... 42
Note 3 ... 42
Note 4 ... 42
Note 5 ... 42
ຂັ້ນຕອນການຈົດທະບຽນ ແລະ ສະເໜີຂໍນໍາເຂົ້າຢາ ... 43
Note 1 ... 45
Note 2 ... 45
Note 3 ... 45
Note 4 ... 45
ການຈົດທະບຽນອາຫານ (ເສີມ) ... 46

Note 1 .......... 48
Note 2 .......... 48
Note 3 .......... 48
Note 4 .......... 48
ການນຳເຂົ້າອາຫານ.......... 49
Note 1 .......... 50
Note 2 .......... 50
Note 3 .......... 50
Note 4 .......... 50
Note 5 .......... 50
Note 6 .......... 50
ການນຳເຂົ້າສິນຄ້າກະສິກຳ .......... 51
Note 1 .......... 53
Note 2 .......... 53
Note 3 .......... 53
Note 4 .......... 53
Note 5 .......... 53
Note 6 .......... 53
Note 7 .......... 53
ການນຳເຂົ້າຜະລິດຕະພັນກະສິກຳ - ພືດ ແກ່ນ ໝາກໄມ້ ຜັກ.......... 54
Note 1 .......... 56
Note 2 .......... 56
Note 3 .......... 56
Note 4 .......... 56
Note 5 .......... 56
Note 6 .......... 56
Note 7 .......... 56
ການນຳເຂົ້າສັດ .......... 57
Note 1 .......... 58

Note 2 ..................................................................................................... 58

Note 3 ..................................................................................................... 58

Note 4 ..................................................................................................... 58

Note 5 ..................................................................................................... 58

ການນໍາເຂົ້າປາ ..................................................................................................... 59

Note 1 ..................................................................................................... 61

Note 2 ..................................................................................................... 61

Note 3 ..................................................................................................... 61

Note 4 ..................................................................................................... 61

Note 5 ..................................................................................................... 61

## ການນໍາເຂົ້າ ແລະ ສົ່ງອອກ

ຖ້າທ່ານແມ່ນຜູ້ນໍາເຂົ້າ ຫຼື ຜູ້ສົ່ງອອກ ຫຼື ນັກເດີນທາງທີ່ເດີນທາງເຂົ້າ ຫຼື ອອກຈາກປະເທດລາວ ໜ້າເວັບເຫຼົ່ານີ້ຈະຊ່ວຍທ່ານເຂົ້າໃຈສິ່ງທີ່ທ່ານຈໍາເປັນຕ້ອງເຮັດ ເພື່ອນໍາເຂົ້າ ແລະ ສົ່ງອອກ ສິນຄ້າ ຫຼື ສິ່ງຂອງອື່ນໆ.

ຖ້າທ່ານຕ້ອງການຮູ້ວິທີ **ນໍາເຂົ້າ** ສິນຄ້າທາງການຄ້າ ເຂົ້າມາໃນປະເທດລາວ ກະລຸນາກວດເບິ່ງໃນສ່ວນຂອງ***ການນໍາເຂົ້າທາງການຄ້າ***.

ຖ້າທ່ານຕ້ອງການຮູ້ວິທີ **ສົ່ງອອກ** ສິນຄ້າທາງການຄ້າຈາກປະເທດລາວ ກະລຸນາກວດເບິ່ງໃນສ່ວນຂອງ***ການສົ່ງອອກທາງການຄ້າ***.

ຖ້າທ່ານມີຈຸດປະສົງຂົນສົ່ງສິນຄ້າຂ້າມດ່ານສາກົນຜ່ານດິນແດນຂອງປະເທດລາວ (**ຂົນສົ່ງຜ່ານ**) ກະລຸນາກວດເບິ່ງໃນສ່ວນຂອງ***ສິນຄ້າຜ່ານແດນ***.

ຖ້າທ່ານແມ່ນ **ນັກເດີນທາງ** ທີ່ກໍາລັງມາຮອດ ຫຼື ອອກຈາກເດີ່ນບິນ ຫຼື ຂ້າມດ່ານຊາຍແດນທາງບົກໃດໜຶ່ງ ກະລຸນາກວດເບິ່ງໃນສ່ວນຂອງ **ນັກເດີນທາງ** .

ດ້ວຍເຫດຜົນດ້ານສາທາລະນະສຸກ, ການນໍາເຂົ້າສິນຄ້າກະສິກໍາສະເພາະ, ສັດລ້ຽງ, ປາ, ຢາ ແລະ ອາຫານຕ້ອງໄດ້ປະຕິບັດຕາມລະບຽບການຕ່າງໆທີ່ກໍານົດໃຫ້ມີເອກະສານສະເພາະເພື່ອແຈ້ງຕໍ່ ແລະ ໄດ້ຮັບອະນຸມັດຈາກໜ່ວຍງານທີ່ຮັບຜິດຊອບບັງຄັບໃຊ້ກົດລະບຽບທີ່ກ່ຽວຂ້ອງ ແລະ ພັນທະສະເພາະທີ່ຕ້ອງປະຕິບັດຕາມ. ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບການນໍາເຂົ້າສິນຄ້າປະເພດເຫຼົ່ານີ້ ກະລຸນາກວດສອບຈາກເນື້ອໃນທີ່ກ່ຽວຂ້ອງໃນຄູ່ມືນີ້ໄດ້.

ຖ້າທ່ານແມ່ນ **ຕົວແທນແລ່ນເອກະສານ** ຫຼື **ຕົວແທນຂົນສົ່ງ** ທີ່ຮັບຜິດຊອບພາຫະນະ ຫຼື ຍານຍົນທີ່ນໍາໃຊ້ໃນການລໍາລຽງການຂົນສົ່ງທາງການຄ້າ ທ່ານຍັງມີພັນທະສະເພາະໃນເລື່ອງຂໍ້ກໍານົດດ້ານກົດລະບຽບນໍາບັນດາໜ່ວຍງານທີ່ກ່ຽວຂ້ອງ. ກະລຸນາກວດສອບຈາກເນື້ອໃນທີ່ກ່ຽວຂ້ອງໃນຄູ່ມືນີ້ ເພື່ອຊອກຮູ້ເພີ່ມເຕີມ.

ການນໍາເຂົ້າ ແລະ ການສົ່ງອອກສິນຄ້າແມ່ນຢູ່ພາຍໃຕ້ການຄວບຄຸມຂອງກົດໝາຍ ແລະ ກົດລະບຽບຈໍານວນໜຶ່ງ. ສິ່ງເຫຼົ່ານີ້ມີຢູ່ໃນໜ້າ *ບົດຄວາມກົດໝາຍ* ຂອງເວັບໄຊນີ້. ກະລຸນາກວດສອບຈາກເນື້ອໃນທີ່ກ່ຽວຂ້ອງໃນຄູ່ມືນີ້ໄດ້ ເພື່ອຄົ້ນຫາ ແລະ ເບິ່ງເອກະສານກົດໝາຍທີ່ກ່ຽວຂ້ອງທັງໝົດ.

ທຸກການລະເມີດກົດໝາຍ ຫຼື ກົດລະບຽບພາສີຈະປະກອບເປັນຄວາມຜິດທີ່ອາດຈະກໍ່ໃຫ້ເກີດການປັບໃໝ ຫຼື ການດໍາເນີນຄະດີທາງກົດໝາຍ ອີງຕາມລະດັບຄວາມຮຸນແຮງຂອງການກະທໍາຜິດ. ກະລຸນາກວດສອບຈາກເນື້ອໃນທີ່ກ່ຽວຂ້ອງໃນຄູ່ມືນີ້ໄດ້ເພື່ອເບິ່ງສັງລວມຄວາມຜິດ ແລະ ການລົງໂທດ ເຊັ່ນດຽວກັນກັບຂໍ້ມູນກ່ຽວກັບການອຸທອນ ແລະ ການຕົກລົງແກ້ໄຂ.

## *ການນຳເຂົ້າທາງການຄ້າ*

### ການລົງທະບຽນ

ຖ້າທ່ານແມ່ນຜູ້ນຳເຂົ້າທີ່ຕ້ອງການນຳເຂົ້າສິນຄ້າທາງການຄ້າເຂົ້າມາໃນປະເທດລາວ, ກ່ອນອື່ນໝົດ ທ່ານຄວນເປັນບໍລິສັດທີ່ໄດ້ຈົດທະບຽນນຳ *ກະຊວງອຸດສາຫະກຳ ແລະ ການຄ້າ, ຫ້ອງການທະບຽນວິສະຫະກິດ.*

### ສິນຄ້າເກືອດຫ້າມ

ກ່ອນທີ່ຈະນຳເຂົ້າສິນຄ້າເຂົ້າມາໃນປະເທດລາວ ທ່ານຄວນຮັບປະກັນວ່າສິນຄ້າເຫຼົ່ານັ້ນບໍ່ນອນຢູ່ໃນປະເພດສິນຄ້າຕ້ອງຫ້າມ. ສິນຄ້າຕ້ອງຫ້າມບໍ່ສາມາດຖືກນຳເຂົ້າ, ສົ່ງອອກ, ຂົນສົ່ງຜ່ານ, ຂາຍ ຫຼື ຈໍລະຈອນຢູ່ໃນປະເທດລາວ. ສິນຄ້າຕ້ອງຫ້າມປະກອບມີ ອາວຸດ, ຢາເສບຕິດ, ສານທີ່ອອກລິດຕໍ່ຈິດປະສາດ ແລະ ສານເຄມີທີ່ເປັນອັນຕະລາຍ. ທ່ານຄວນເບິ່ງກົດໝາຍ ແລະ ກົດລະບຽບສະເພາະທີ່ຄວບຄຸມເອົາຂໍ້ຫ້າມເຫຼົ່ານີ້. ສິນຄ້າທີ່ຫ້າມນຳເຂົ້າມີໃນ *ແຈ້ງການເລກທີ 0973, ບົດຊ້ອນທ້າຍ 1.*

ຖ້າມີຄວາມສົງໃສ ທ່ານຄວນຂໍຄຳແນະນຳຈາກ*ກົມພາສີ* ຫຼື ຈາກ *ກົມນຳເຂົ້າ ແລະ ສົ່ງອອກ* (DIMEX) ຂອງ *ກະຊວງອຸດສາຫະກຳ ແລະ ການຄ້າ.*

### ໃບອະນຸຍາດນຳເຂົ້າ

ສຳລັບ ສິນຄ້າສະເພາະບາງປະເພດ ມັນຈຳເປັນຕ້ອງໄດ້ຮັບໃບອະນຸຍາດນຳເຂົ້າຈາກ DIMEX. ຂຶ້ນກັບສິນຄ້ານັ້ນໆ, ໃບອະນຸຍາດສາມາດເປັນແບບອັດຕະໂນມັດ ຫຼື ບໍ່ອັດຕະໂນມັດ. ກົດລະບຽບ ກ່ຽວກັບ ການອອກໃບອະນຸຍາດແມ່ນຢູ່ໃນ ແຈ້ງການເລກທີ0076 ແລະ ທ່ານສາມາດ ເບິ່ງລາຍການສິນຄ້າທີ່ຈຳເປັນຕ້ອງມີໃບອະນຸຍາດໄດ້ໃນ*ບົດຊ້ອນທ້າຍ*ຂອງແຈ້ງການນັ້ນ ເຊັ່ນດຽວກັນກັບເອກະສານອ້າງອີງທີ່ຈຳເປັນຕ້ອງມີ.

ຖ້າສິນຄ້າບໍ່ຈຳເປັນຕ້ອງມີໃບອະນຸຍາດ ຫຼື ໃບຢັ້ງຢືນສຸຂານາໄມສັດ/ພືດ ຫຼື ການກວດກາດ້ານເຕັກນິກສະເພາະໃດໜຶ່ງ, ທ່ານສາມາດດຳເນີນການນຳເຂົ້າສິນຄ້ານັ້ນອອກໄດ້ເລີຍ ໂດຍການສົ່ງໃບແຈ້ງການນຳເຂົ້າໂດຍກົງຫາດ່ານພາສີ.

ກະລຸນາກວດສອບຈາກເນື້ອໃນທີ່ກ່ຽວຂ້ອງໃນຄູ່ມືນີ້ເພື່ອເບິ່ງລະບຽບການສຳລັບການຂໍເອົາໃບອະນຸຍາດນຳເຂົ້າ ຫຼື ສົ່ງອອກ.

### ຂໍ້ກຳນົດດ້ານສຸຂານາໄມສັດ ແລະ ພືດ

ຖ້າສິນຄ້າທີ່ທ່ານຕ້ອງການນຳເຂົ້າແມ່ນຕ້ອງໄດ້ຜ່ານການກວດກາສຸຂານາໄມພືດແລະສັດ ທ່ານກໍ່ຈຳເປັນຕ້ອງປະຕິບັດຕາມກົດລະບຽບພິເສດທີ່ກ່ຽວຂ້ອງກັບສິນຄ້າເຫຼົ່ານັ້ນ. ທ່ານສາມາດເບິ່ງໃນເວັບໄຊນີ້ວ່າມີສິນຄ້າໃດແດ່ທີ່ຕ້ອງໄດ້ປະຕິບັດຕາມຂໍ້ກຳນົດເຫຼົ່ານີ້ ໂດຍການນຳໃຊ້ຕົວຊ່ວຍການຄົ້ນຫາ ໃນໜ້າ *ການຄົ້ນຫາຜະລິດຕະພັນ.*

ໂດຍປົກກະຕິແລ້ວ, ທ່ານອາດຈະຈຳເປັນຕ້ອງໄດ້ຮັບໃບອະນຸຍາດຈາກ *ກະຊວງກະສິກຳ ແລະ ປ່າໄມ້* ທັງຈາກ *ກົມລ້ຽງສັດ* ຫຼື ຈາກ *ກົມກັກກັນພືດ* ເຊິ່ງຂຶ້ນກັບວ່າທ່ານຈະນຳເຂົ້າຫຍັງ. ເນື້ອໃນລະອຽດຂອງລະບຽບການ ແລະ ເອກະສານທີ່ຕ້ອງການສາມາດເບິ່ງໄດ້ໃນໜ້າ *ລະບຽບການ* ຂອງເວັບໄຊນີ້.

ສປປ ລາວ ໄດ້ສ້າງຕັ້ງ *ຈຸດສອບຖາມ SPS* ຕາມການກຳນົດຂອງ *ຂໍ້ຕົກລົງວ່າດ້ວຍ SPS* ຂອງອົງການການຄ້າໂລກ [WTO]. ທ່ານສາມາດຕິດຕໍ່ຫາ *ຈຸດສອບຖາມ SPS* ໄດ້ຖ້າທ່ານມີຄຳຖາມໃດໆກ່ຽວກັບຂໍ້ກຳກົດດ້ານສຸຂານາໄມສັດ ແລະພືດ. ທ່ານສາມາດເບິ່ງລາຍລະອຽດການຕິດຕໍ່ຫາ *ຈຸດສອບຖາມ SPS ໄດ້.*

### ຂໍ້ກຳນົດດ້ານເຕັກນິກ

ສຳລັບສິນຄ້າບາງປະເພດ ມັນອາດຈະຈຳເປັນຕ້ອງໄດ້ມີໃບອະນຸຍາດທີ່ຢັ້ງຢືນວ່າສິນຄ້າເຫຼົ່ານີ້ຕອບສະໜອງໄດ້ຕາມມາດຕະຖານດ້ານເຕັກນິກສະເພາະ. ກົດລະບຽບດ້ານເຕັກນິກເຫຼົ່ານີ້ແມ່ນ *ກະຊວງວິທະຍາສາດ ແລະ ເທັກໂນໂລຊີ* ເປັນຜູ້ຄຸ້ມຄອງ.

ທ່ານສາມາດເບິ່ງໃນເວັບໄຊນີ້ວ່າສິນຄ້າໃດແດ່ຕ້ອງໄດ້ປະຕິບັດຕາມຂໍ້ກຳນົດເຫຼົ່ານີ້ ໂດຍການນຳໃຊ້ຕົວຊ່ວຍໃນການຄົ້ນຫາໃນໜ້າ *ການຄົ້ນຫາຜະລິດຕະພັນ.* ເນື້ອໃນລະອຽດຂອງລະບຽບການ ແລະ ເອກະສານທີ່ຕ້ອງການສາມາດເບິ່ງໄດ້ໃນໜ້າ *ລະບຽບການ* ຂອງເວັບໄຊນີ້.

ສປປ ລາວ ໄດ້ສ້າງຕັ້ງ *ຈຸດສອບຖາມ TBT* ຕາມການກຳນົດຂອງ *ຂໍ້ຕົກລົງວ່າດ້ວຍ TBT* ຂອງອົງການການຄ້າໂລກ [WTO]. ທ່ານສາມາດຕິດຕໍ່ຫາ *ຈຸດສອບຖາມ TBT* ໄດ້ ຖ້າທ່ານຄຳຖາມໃດໆກ່ຽວກັບມາດຕະຖານດ້ານເຕັກນິກ. ທ່ານສາມາດເບິ່ງລາຍລະອຽດການຕິດຕໍ່ຫາ *ຈຸດສອບຖາມ TBT ໄດ້ ທີ່ນີ້.*

### ການແຈ້ງພາສີນຳເຂົ້າ

ທຸກສິນຄ້າທີ່ນຳເຂົ້າມາໃນປະເທດລາວຕ້ອງໄດ້ແຈ້ງພາສີ ແລະ ເສຍພາສີຕາມລະບຽບການ ເວັ້ນເສຍແຕ່ວ່າພວກມັນຢູ່ພາຍໃຕ້ປະເພດທີ່ໄດ້ຮັບການຍົກເວັ້ນພາສີ ຫຼື ງົດເກັບພາສີ.

ໃບແຈ້ງພາສີຖືກເຮັດໂດຍການສົ່ງແບບຟອມ ACDD ທີ່ເຮັດສຳເລັດ ແລະ ເຊັນຊື່ຢ່າງຖືກຕ້ອງ ພ້ອມກັບເອກະສານອ້າງອີງຢ່າງນ້ອຍສຸດແມ່ນປະກອບມີດັ່ງຕໍ່ໄປນີ້:

- ໃບຮຽກເກັບເງິນ ຫຼື ສັນຍາຂາຍສິນຄ້າຈາກຜູ້ສະໜອງສິນຄ້າ
- ເອກະສານການຂົນສົ່ງ ເຊັ່ນວ່າໃບສົ່ງສິນຄ້າທາງທະເລ (Bill of Lading) ຫຼື ໃບສົ່ງສິນຄ້າທາງອາກາດ (Air Way Bill)
- ລາຍການຫຸ້ມຫໍ່ [Packing] List (ຖ້າມີ)
- ໃບຢັ້ງຢືນຕົ້ນທາງ. ທ່ານຄວນຈະໄດ້ຮັບໃບຢັ້ງຢືນນີ້ຈາກຜູ້ສົ່ງອອກສິນຄ້າຂອງທ່ານ.
- ໃບອະນຸຍາດ ຫຼື ໃບອະນຸມັດການນຳເຂົ້າທີ່ໄດ້ຮັບຈາກກະຊວງອື່ນ ເຊິ່ງຂຶ້ນກັບປະເພດສິນຄ້າທີ່ທ່ານກຳລັງນຳເຂົ້າ

ການແຈ້ງພາສີສາມາດສົ່ງຢູ່ຫ້ອງການພາສີເຂດທ້ອງຖິ່ນຂອງທ່ານ. *ຄລິກ ທີ່ນີ້* ເພື່ອເບິ່ງລາຍຊື່ຫ້ອງການພາສີທັງໝົດບ່ອນທີ່ທ່ານສາມາດສົ່ງໃບແຈ້ງພາສີ ແລະ ຊຳລະພາສີສຳລັບສິນຄ້າຂອງທ່ານ.

ໃບແຈ້ງພາສີຕ້ອງໄດ້ສົ່ງພາຍໃນ 15 ວັນນັບຈາກວັນທີຍື່ນເອກະສານການຂົນສົ່ງນຳດ່ານພາສີ (ຕົວຢ່າງ ໃບລາຍການສິນຄ້າ) ທີ່ແຈ້ງບອກໃຫ້ດ່ານພາສີຮູ້ວັນທີທີ່ສິນຄ້າເດີນທາງມາຮອດ (ເບິ່ງ *ການຂົນສົ່ງ*).

ໃນປະຈຸບັນ, ຢູ່ດ່ານຊາຍແດນທ່ານາແລ້ງເທົ່ານັ້ນ, ທຸກໃບແຈ້ງພາສີຕ້ອງໄດ້ສົ່ງຜ່ານທາງລະບົບຄຸ້ມຄອງການແຈ້ງພາສີແບບອັດຕະໂນມັດ Asycuda. ເພື່ອເບິ່ງລະບຽບຂັ້ນຕອນສຳລັບການສົ່ງໃບແຈ້ງພາສີຜ່ານລະບົບ Asycuda. ໃນອະນາຄົດ, ລະບົບ Asycuda ຈະຂະຫຍາຍການນຳໃຊ້ໄປທຸກດ່ານຊາຍແດນອື່ນໃນທົ່ວປະເທດ. ຈົນກວ່າຮອດເວລານັ້ນ, ຢູ່ດ່ານຊາຍແດນເຫຼົ່ານີ້ ແມ່ນນຳໃຊ້ລະບຽບຂັ້ນຕອນປົກກະຕິ. ກະລຸນາກວດສອບຈາກເນື້ອໃນທີ່ກ່ຽວຂ້ອງໃນຄູ່ມືນີ້ ເພື່ອເບິ່ງລະບຽບການປົກກະຕິ.

ການປັບໃໝລົງໂທດສະເພາະອາດຈະນຳໃຊ້ ຖ້າທ່ານບໍ່ຍື່ນການແຈ້ງພາສີໃຫ້ທັນເວລາ (*ກົດໝາຍວ່າດ້ວຍພາສີ, ມາດຕາ 22*).

### ການແຈ້ງພາສີລ່ວງໜ້າ

ເພື່ອອຳນວຍຄວາມສະດວກໃຫ້ແກ່ຂັ້ນຕອນການຊຳລະພາສີນຳເຂົ້າ ທ່ານສາມາດຍື່ນການແຈ້ງພາສີກ່ອນທີ່ສິນຄ້າຈະມາຮອດ. ເຊິ່ງທ່ານສາມາດເຮັດໄດ້ກ່ອນພາຍໃນ 7 ວັນລັດຖະການກ່ອນມື້ທີ່ສິນຄ້າຂອງທ່ານຈະມາຮອດ ໂດຍປະຕິບັດຕາມລະບຽບຂັ້ນຕອນດຽວກັນກັບການແຈ້ງພາສີຕາມແບບປົກກະຕິ. ທ່ານສາມາດຈ່າຍພາສີນຳເຂົ້າໃນເວລາສິນຄ້າມາຮອດ.

### ນາຍໜ້າແຈ້ງພາສີ

ທ່ານອາດຈະວ່າຈ້າງນາຍໜ້າແຈ້ງພາສີ(ຊິບປີ້ງ)ເພື່ອແລ່ນເອກະສານການແຈ້ງພາສີນຳເຂົ້າແທນທ່ານ. ສຳລັບຂໍ້ມູນກ່ຽວກັບນາຍໜ້າ.

### ການແຍກປະເພດ ແລະ ມູນຄ່າ

ສິນຄ້ານຳເຂົ້າຕ້ອງຈ່າຍພາສີຕາມເປີເຊັນຂອງມູນຄ່າພາສີທີ່ແຈ້ງໄວ້ຂອງພວກມັນ. ອັດຕາພາສີຕໍ່ກັບສິນຄ້ານຳເຂົ້າມາໃນປະເທດລາວແມ່ນແຕກຕ່າງກັນ ອີງຕາມປະເພດສິນຄ້າ ແລະ ປະເທດຕົ້ນກຳເນີດສິນຄ້າ.

ສິນຄ້າຖືກແຍກປະເພດ ໂດຍນຳໃຊ້*ລະຫັດລະບົບພິກັດອັດຕາພາສີ [Harmonized System (HS)]* 8 ຕົວເລກເຊິ່ງຖືກຄຸ້ມຄອງ ແລະ, ເປັນແຕ່ໄລຍະ, ປັບປຸງ ໂດຍອົງການພາສີໂລກ (WCO). ການແຍກປະເພດອັດຕາພາສີຂອງລາວສອດຄ່ອງກັບມາດຕະຖານ AHTN ຂອງອາຊຽນ (ລະບົບຈຳແນກອັດຕາພາສີຂອງອາຊຽນ ຫຼື *ASEAN Harmonized Tariff Nomenclature*).

ທ່ານສາມາດເບິ່ງການແຍກປະເພດພາສີ ແລະ ອັດຕາພາສີຂອງລາວໃນແບບຄົບຖ້ວນໄດ້ໃນເວັບໄຊນີ້ ດ້ວຍຕົວຊ່ວຍ *ການຄົ້ນຫາຜະລິດຕະພັນ*.

ມັນແມ່ນຄວາມຮັບຜິດຊອບຂອງທ່ານໃນການແຈ້ງປະເພດ, ຕົ້ນທາງ, ມູນຄ່າ ແລະ ປະລິມານທີ່ຖືກຕ້ອງຂອງສິນຄ້າທີ່ທ່ານກຳລັງນຳເຂົ້າມາ. ຖ້າມີຂໍ້ສົງໃສ ກະລຸນາ ຂໍຄຳແນະນຳຈາກກົມພາສີ.

ພື້ນຖານສຳລັບການຄິດໄລ່ພາສີແມ່ນມູນຄ່າຊື້ຂາຍຕົວຈິງຂອງສິນຄ້າ (ອີງຕາມຫຼັກຖານທີ່ເປັນໃບຮຽກເກັບເງິນທາງການຄ້າ ຫຼື ເອກະສານສັນຍາຊື້ຂາຍອື່ນ). ຖ້າມູນຄ່າຂອງສິນຄ້າບໍ່ສາມາດກຳນົດໄດ້ໂດຍວິທີການນີ້ ທາງດ່ານພາສີຈະພະຍາຍາມກຳນົດມູນຄ່າຂອງສິນຄ້າ ໂດຍນຳໃຊ້ 5 ວິທີການອື່ນ ໂດຍສອດຄ່ອງກັບ *ມາດຕາ 7 ຂອງຂໍ້ຕົກລົງທົ່ວໄປວ່າດ້ວຍອັດຕາພາສີ ແລະ ການຄ້າ* (GATT 1947).

## ການຊໍາລະພາສີ

ເມື່ອໃດທີ່ໃບແຈ້ງພາສີໄດ້ຖືກຍື່ນ ແລະ ຍອມຮັບເອົາໂດຍດ່ານພາສີ, ຜູ້ນໍາເຂົ້າຈໍາເປັນຕ້ອງຈ່າຍພາສີ. ຢູ່ດ່ານຊາຍແດນໃຫຍ່ໆ ທ່ານຈະສາມາດເຮັດການຊໍາລະພາສີໄດ້ຢູ່ທະນາຄານທີ່ຢູ່ໃນບໍລິເວນນັ້ນ. ຍື່ນໃບຮັບເງິນການຊໍາລະພາສີຂອງທ່ານໃຫ້ດ່ານພາສີ ເພື່ອຮັບເອົາໃບຢັ້ງຢືນການຊໍາລະພາສີຂອງທ່ານ. ຢູ່ບາງດ່ານຊາຍແດນ ການຊໍາລະພາສີແມ່ນຈໍາເປັນຕ້ອງຈ່າຍເປັນເງິນສົດເທົ່ານັ້ນ ແລະ ທ່ານສາມາດຊໍາລະພາສີຂອງທ່ານນໍາພະນັກງານເງິນສົດຂອງດ່ານພາສີ.

## ສິນຄ້າທີ່ນໍາເຂົ້າພາຍໃຕ້ລະບອບສາງເກັບສິນຄ້າ

ສິນຄ້າສາມາດນໍາເຂົ້າມາໃນປະເທດລາວພາຍໃຕ້ *ລະບອບສາງເກັບສິນຄ້າ* ຖ້າທ່ານບໍ່ມີຈຸດປະສົງປ່ອຍພວກມັນອອກຈໍາໜ່າຍໃນປະເທດລາວໃນທັນທີ. ພາສີຈະຖືກງົດເກັບສໍາລັບໄລຍະເວລາທີ່ສິນຄ້າຖືກພັກໄວ້ໃນສາງເກັບສິນຄ້າ ແລະຈະຕ້ອງຈ່າຍພາສີເມື່ອສິນຄ້າຖືກປ່ອຍອອກສູ່ການຈໍລະຈອນໃນຕະຫຼາດ.

ທ່ານຕ້ອງໄດ້ສົ່ງໃບແຈ້ງພາສີນໍາເຂົ້າພາຍໃຕ້ *ລະບອບສາງເກັບສິນຄ້າ* ໃນເວລາທີ່ທ່ານນໍາສິນຄ້າເຂົ້າສາງສິນຄ້າ ແລະ ໃບແຈ້ງພາສີນໍາເຂົ້າປົກກະຕິ ໃນເວລາທີ່ທ່ານຕ້ອງນໍາພວກມັນອອກຈໍາໜ່າຍ.

ສາງເກັບສິນຄ້າມີຫຼາຍປະເພດແຕກຕ່າງກັນ. ກະລຸນາ ເບິ່ງ *ມາດຕາ 38 ຂອງກົດໝາຍວ່າດ້ວຍພາສີ.*

ສາງເກັບສິນຄ້າຕ້ອງໄດ້ຮັບອະນຸມັດຈາກກະຊວງການເງິນ. ເພື່ອຊອກຮູ້ເພີ່ມເຕີມກ່ຽວກັບວິທີຈົດທະບຽນ ແລະ ຄຸ້ມຄອງນໍາໃຊ້ສາງເກັບສິນຄ້າທີ່ໄດ້ອະນຸຍາດ.

## ການນໍາເຂົ້າຊົ່ວຄາວ

ສິນຄ້າສາມາດຖືກນໍາເຂົ້າມາພາຍໃຕ້ *ລະບອບການນໍາເຂົ້າຊົ່ວຄາວ* ພາຍໃຕ້ສະພາບການຕໍ່ໄປນີ້:

- ສິນຄ້າທີ່ຈໍາເປັນເພື່ອນໍາມາຜະລິດເປັນສິນຄ້າ, ປຸງແຕ່ງ, ປະກອບເປັນຜະລິດຕະພັນ, ປັບປຸງສະພາບ ຫຼື ສ້ອມແປງ ເຊິ່ງໃນຕໍ່ມາຈະຖືກນໍາອອກຄືນ ("ລະບອບການນໍາເຂົ້າຊົ່ວຄາວເພື່ອຜະລິດແລະສົ່ງອອກຕໍ່ໄປ")

- ພາຫະນະທີ່ນໍາເຂົ້າມາເພື່ອຈຸດປະສົງຮັບໃຊ້ໂຄງການ ຫຼື ເພື່ອການທ່ອງທ່ຽວ ຫຼື ການມາວຽກທາງທຸລະກິດພວກມັນຈະຖືກນໍາອອກໄປຄືນ ຕາມໄລຍະເວລາທີ່ກໍານົດໃຫ້

- ວັດສະດຸຕ່າງໆທີ່ຕ້ອງການສໍາລັບຈຸດປະສົງຂອງການຮັບໃຊ້ໂຄງການ

- ວັດສະດຸຕ່າງໆທີ່ນໍາເຂົ້າມາຮັບໃຊ້ງານວາງສະແດງສິນຄ້າ, ການສຶກສາ ແລະ ການທົດລອງທາງວິທະຍາສາດ

ສໍາລັບການນໍາເຂົ້າປະເພດເຫຼົ່ານີ້ ທ່ານຕ້ອງສົ່ງໃບແຈ້ງພາສີພາຍໃຕ້ *ລະບອບການນໍາເຂົ້າຊົ່ວຄາວ*. ການນໍາເຂົ້າເຫຼົ່ານີ້ຈະບໍ່ຖືກເກັບພາສີ.

ໃນທຸກກໍລະນີຂ້າງເທິງ ເອກະສານ ຫຼື ໃບອະນຸຍາດສະເພາະຕ້ອງໄດ້ຮັບຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງ ແລະ ຕ້ອງແຈ້ງເອກະສານດັ່ງກ່າວໃຫ້ດ່ານພາສີ. ກ່ອນທີ່ຈະນໍາເຂົ້າສິນຄ້າພາຍໃຕ້ລະບອບພາສີນີ້ ກະລຸນາ ຕິດຕໍ່ຫາດ່ານພາສີ ເພື່ອຂໍຄໍາແນະນໍາກ່ຽວກັບວ່າເອກະສານໃດແດ່ທີ່ຈໍາເປັນຕ້ອງມີສໍາລັບສະພາບການສະເພາະຂອງທ່ານ.

ເພື່ອນຳພາຫະນະເຂົ້າມາໃນປະເທດເພື່ອຈຸດປະສົງການຢ້ຽມຢາມຊົ່ວຄາວ ທ່ານຈຳເປັນຕ້ອງແຈ້ງພາສີພາຍໃຕ້ລະບອບການນຳເຂົ້າຊົ່ວຄາວຫາດ່ານພາສີຢູ່ຈຸດຂ້າມຊາຍແດນ. ທ່ານຕ້ອງແຈ້ງໃບທະບຽນທີ່ບໍ່ໝົດອາຍຸສຳລັບພາຫະນະນັ້ນ. ພາຫະນະທີ່ນຳເຂົ້າມາພາຍໃຕ້ລະບອບພາສີນີ້ຕ້ອງຖືກນຳອອກຄືນພາຍໃນຂອບເຂດເວລາທີ່ກຳນົດໃຫ້ ຫຼື ບໍ່ດັ່ງນັ້ນ ກໍ່ຈະຖືກປັບໃໝ.

ສຳລັບສິນຄ້າທີ່ນຳເຂົ້າມາເພື່ອຈຸດປະສົງຮັບໃຊ້ງານວາງສະແດງ ແມ່ນຕ້ອງໄດ້ຈ່າຍເງິນມັດຈຳໃຫ້ແກ່ດ່ານພາສີ ເຊິ່ງຈະຖືກສົ່ງຄືນເມື່ອສິນຄ້າດັ່ງກ່າວຖືກນຳອອກໄປຄືນ.

**ການຍົກເວັ້ນ**

ການຍົກເວັ້ນພາສີ ແລະ ພັນທະອື່ນ ແມ່ນມີໃຫ້ສຳລັບພາລະກິດທາງການທູດ, ສຳລັບສິນຄ້າທີ່ນຳເຂົ້າມາພາຍໃຕ້ລະບອບການສົ່ງເສີມການລົງທຶນຂອງລັດຖະບານ ຫຼື ສຳລັບເຂດເສດຖະກິດສະເພາະໃດໜຶ່ງ ແລະ ສຳລັບສິນຄ້າອື່ນທີ່ຖືກນຳເຂົ້າພາຍໃຕ້ສະພາບການສະເພາະໃດໜຶ່ງ. ກະລຸນາກວດສອບຈາກເນື້ອໃນທີ່ກ່ຽວຂ້ອງໃນຄູ່ມືນີ້ ເພື່ອເບິ່ງລາຍການສິນຄ້າທີ່ມີສິດໄດ້ຮັບການຍົກເວັ້ນ.

ກະລຸນາ ຕິດຕໍ່ຫາດ່ານພາສີ ເພື່ອຊອກຮູ້ສິ່ງທີ່ຈຳເປັນຕ້ອງມີເພື່ອໃຫ້ໄດ້ຮັບການຍົກເວັ້ນເຫຼົ່ານີ້.

ສິ່ງຂອງສ່ວນຕົວຂອງຜູ້ໂດຍສານທີ່ເດີນທາງເຂົ້າມາໃນປະເທດລາວກໍ່ໄດ້ຮັບການຍົກເວັ້ນພາສີເຊັ່ນກັນ. ສຳລັບຂີດຈຳກັດສະເພາະຕໍ່ກັບສິນຄ້າເຫຼົ່ານີ້ ກະລຸນາ ເບິ່ງໃນຂໍ້ *ຜູ້ໂດຍສານ* ໃນເວັບໄຊນີ້.

## ການສົ່ງອອກສິນຄ້າ

ໜ້ານີ້ອະທິບາຍຂໍ້ກໍານົດຕ່າງໆສໍາລັບການສົ່ງອອກສິນຄ້າຈາກປະເທດລາວ ອີງຕາມກົດໝາຍຂອງ ສປປ ລາວ. ໃນເວລາສົ່ງອອກສິນຄ້າໄປປະເທດໃດໜຶ່ງ ທ່ານຄວນຮູ້ຈັກຂໍ້ກໍານົດສະເພາະຕ່າງໆທີ່ກໍານົດອອກໂດຍກົດໝາຍຂອງປະເທດນັ້ນ. ສະນັ້ນ ທ່ານຄວນຊອກຄໍາແນະນໍາຈາກສະຖານທູດ ຫຼື ຈາກໜ່ວຍງານທີ່ກ່ຽວຂ້ອງຂອງປະເທດນັ້ນ ເພື່ອຮັບປະກັນໃຫ້ທ່ານປະຕິບັດຕາມທຸກພັນທະຂອງທ່ານ.

## ການລົງທະບຽນ

ຖ້າທ່ານແມ່ນຜູ້ນໍາເຂົ້າທີ່ຕ້ອງການສົ່ງອອກສິນຄ້າຈາກປະເທດລາວ ກ່ອນອື່ນໝົດ ທ່ານຄວນເປັນບໍລິສັດທີ່ຈົດທະບຽນນໍາ *ກະຊວງອຸດສາຫະກໍາ ແລະ ການຄ້າ, ຫ້ອງການທະບຽນວິສະຫະກິດ*.

## ສິນຄ້າຕ້ອງຫ້າມ

ກ່ອນທີ່ຈະສົ່ງອອກສິນຄ້າຈາກປະເທດລາວ ທ່ານຄວນຮັບປະກັນວ່າສິນຄ້າເຫຼົ່ານັ້ນບໍ່ນອນຢູ່ໃນປະເພດສິນຄ້າຕ້ອງຫ້າມ . ສິນຄ້າຕ້ອງຫ້າມບໍ່ສາມາດຖືກນໍາເຂົ້າ, ສົ່ງອອກ, ຂົນສົ່ງຜ່ານ, ຂາຍ ຫຼື ຈໍລະຈອນຢູ່ໃນປະເທດລາວ (ກົດໝາຍວ່າດ້ວຍພາສີ ປີ *2011, ມາດຕາ 31*). ສິນຄ້າຕ້ອງຫ້າມປະກອບມີ ອາວຸດ, ຢາເສບຕິດ, ສານທີ່ອອກລິດຕໍ່ຈິດປະສາດ ແລະ ສານເຄມີທີ່ເປັນອັນຕະລາຍ. ທ່ານຄວນເບິ່ງກົດໝາຍ ແລະ ກົດລະບຽບສະເພາະທີ່ຄວບຄຸມເອົາຂໍ້ຫ້າມເຫຼົ່ານີ້. ສິນຄ້າທີ່ຫ້າມສົ່ງອອກມີໃນ *ແຈ້ງການເລກທີ 0973, ບົດຊ້ອນທ້າຍ 1*.

ຖ້າມີຄວາມສົງໃສ ທ່ານຄວນຂໍຄໍາແນະນໍາຈາກ*ກົມພາສີ* ຫຼື ຈາກ *ກົມນໍາເຂົ້າ ແລະ ສົ່ງອອກ* (DIMEX) ຂອງ *ກະຊວງອຸດສາຫະກໍາ ແລະ ການຄ້າ*.

## ໃບອະນຸຍາດສົ່ງອອກ

ສໍາລັບສິນຄ້າສະເພາະບາງປະເພດ ມັນຈໍາເປັນຕ້ອງໄດ້ຮັບໃບອະນຸຍາດຈາກ DIMEX. ຂຶ້ນກັບສິນຄ້ານັ້ນໆ, ໃບອະນຸຍາດສາມາດເປັນແບບອັດຕະໂນມັດ ຫຼື ບໍ່ອັດຕະໂນມັດ. ກົດລະບຽບກ່ຽວກັບການອອກໃບອະນຸຍາດແມ່ນຢູ່ໃນ *ແຈ້ງການເລກທີ 0076* ແລະ ທ່ານສາມາດເບິ່ງລາຍການສິນຄ້າທີ່ຈໍາເປັນຕ້ອງມີໃບອະນຸຍາດໄດ້ໃນ *ບົດຊ້ອນທ້າຍ* ຂອງແຈ້ງການນັ້ນ ເຊັ່ນດຽວກັນກັບເອກະສານອ້າງອີງທີ່ຈໍາເປັນຕ້ອງມີ.

ຖ້າສິນຄ້າບໍ່ຈໍາເປັນຕ້ອງມີໃບອະນຸຍາດ ຫຼື ໃບຢັ້ງຢືນສຸຂານາໄມສັດ/ພືດ ຫຼື ການກວດກາດ້ານເຕັກນິກໃດໜຶ່ງ, ທ່ານສາມາດດໍາເນີນການສົ່ງອອກສິນຄ້ານັ້ນໄດ້ເລີຍ ໂດຍການສົ່ງໃບແຈ້ງສົ່ງອອກໂດຍກົງຫາດ່ານພາສີ.

## ໃບຢັ້ງຢືນຕົ້ນທາງ

ໃນເວລາທີ່ທ່ານສົ່ງອອກສິນຄ້າ ໂດຍປົກກະຕິແລ້ວ ເຈົ້າໜ້າທີ່ໃນປະເທດນໍາເຂົ້າຈະຮຽກຮ້ອງໃຫ້ທ່ານມີ *ໃບຢັ້ງຢືນຕົ້ນທາງ*. ສໍາລັບປະເທດທີ່ມີສິດທິພິເສດດ້ານພາສີກັບລາວ ຫຼື ອາຊຽນ ທ່ານສາມາດໄດ້ຮັບໃບຢັ້ງຢືນຕົ້ນທາງຈາກ *ກະຊວງອຸດສາຫະກໍາ ແລະ ການຄ້າ, ພະແນກອອກໃບຢັ້ງຢືນຕົ້ນທາງ*. ສໍາລັບທຸກປະເທດອື່ນ, ໃບຢັ້ງຢືນຕົ້ນທາງຖືກອອກໃຫ້ໂດຍ *ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ*.

## ຂໍ້ກຳນົດດ້ານສຸຂານາໄມສັດ ແລະ ພືດ

ຖ້າສິນຄ້າທີ່ທ່ານຕ້ອງການສົ່ງອອກແມ່ນຕ້ອງໄດ້ຜ່ານການກວດກາສຸຂານາໄມພືດແລະສັດ ທ່ານກໍ່ຈຳເປັນຕ້ອງປະຕິບັດຕາມກົດລະບຽບພິເສດທີ່ກ່ຽວຂ້ອງກັບສິນຄ້າເຫຼົ່ານັ້ນ. ທ່ານສາມາດເບິ່ງໃນເວັບໄຊນີ້ວ່າມີສິນຄ້າໃດແດ່ທີ່ຕ້ອງໄດ້ປະຕິບັດຕາມຂໍ້ກຳນົດເຫຼົ່ານີ້ ໂດຍການນຳໃຊ້ຕົວຊ່ວຍການຄົ້ນຫາ ໃນໜ້າ *ການຄົ້ນຫາຜະລິດຕະພັນ*.

ທ່ານອາດຈະຈຳເປັນຕ້ອງໄດ້ຮັບໃບອະນຸຍາດຈາກ *ກະຊວງກະສິກຳ ແລະ ປ່າໄມ້* ທັງຈາກ *ກົມລ້ຽງສັດ* ຫຼື ຈາກ *ກົມກັກກັນພືດ* ເຊິ່ງຂຶ້ນກັບວ່າທ່ານຈະສົ່ງອອກຫຍັງ. ເນື້ອໃນລະອຽດຂອງລະບຽບການ ແລະ ເອກະສານທີ່ຕ້ອງການສາມາດເບິ່ງໄດ້ໃນໜ້າ *ລະບຽບການ* ຂອງເວັບໄຊນີ້.

ສປປ ລາວ ໄດ້ສ້າງຕັ້ງ *ຈຸດສອບຖາມ SPS* ຕາມການກຳນົດຂອງ *ຂໍ້ຕົກລົງວ່າດ້ວຍ SPS* ຂອງອົງການການຄ້າໂລກ [WTO]. ທ່ານສາມາດຕິດຕໍ່ຫາ *ຈຸດສອບຖາມ SPS* ໄດ້ຖ້າທ່ານມີຄຳຖາມໃດໆກ່ຽວກັບຂໍ້ກຳກົດດ້ານສຸຂານາໄມສັດ ແລະພືດ. ທ່ານສາມາດເບິ່ງລາຍລະອຽດການຕິດຕໍ່ຫາ *ຈຸດສອບຖາມ SPS ໄດ້.*

## ຂໍ້ກຳນົດດ້ານເຕັກນິກ

ສຳລັບສິນຄ້າບາງປະເພດ ມັນອາດຈະຈຳເປັນຕ້ອງໄດ້ມີໃບອະນຸຍາດທີ່ຢັ້ງຢືນວ່າສິນຄ້າເຫຼົ່ານີ້ຕອບສະໜອງໄດ້ຕາມມາດຕະຖານດ້ານເຕັກນິກສະເພາະ. ກົດລະບຽບດ້ານເຕັກນິກເຫຼົ່ານີ້ແມ່ນ *ກະຊວງວິທະຍາສາດ ແລະ ເທັກໂນໂລຊີ* ເປັນຜູ້ຄຸ້ມຄອງ.

ທ່ານສາມາດເບິ່ງໃນເວັບໄຊນີ້ວ່າສິນຄ້າໃດແດ່ຕ້ອງໄດ້ປະຕິບັດຕາມຂໍ້ກຳນົດເຫຼົ່ານີ້ ໂດຍການນຳໃຊ້ຕົວຊ່ວຍໃນການຄົ້ນຫາໃນໜ້າ *ການຄົ້ນຫາຜະລິດຕະພັນ.* ເນື້ອໃນລະອຽດຂອງລະບຽບການ ແລະ ເອກະສານທີ່ຕ້ອງການສາມາດເບິ່ງໄດ້ໃນໜ້າ *ລະບຽບການ* ຂອງເວັບໄຊນີ້.

ສປປ ລາວ ໄດ້ສ້າງຕັ້ງ *ຈຸດສອບຖາມ TBT* ຕາມການກຳນົດຂອງ *ຂໍ້ຕົກລົງວ່າດ້ວຍ SPS* ຂອງອົງການການຄ້າໂລກ [WTO]. ທ່ານສາມາດຕິດຕໍ່ຫາ *ຈຸດສອບຖາມ TBT* ໄດ້ ຖ້າທ່ານມີຄຳຖາມໃດໆກ່ຽວກັບມາດຕະຖານດ້ານເຕັກນິກ. ທ່ານສາມາດເບິ່ງລາຍລະອຽດການຕິດຕໍ່ຫາ *ຈຸດສອບຖາມ TBT ໄດ້.*

## ການແຈ້ງພາສີສົ່ງອອກ

ທຸກສິນຄ້າທີ່ສົ່ງອອກຈາກລາວຕ້ອງໄດ້ແຈ້ງຫາດ່ານພາສີ.

ໃບແຈ້ງພາສີການສົ່ງອອກຖືກເຮັດໂດຍການສົ່ງແບບຟອມ ACDD ທີ່ເຮັດສຳເລັດ ແລະ ເຊັນຊື່ຢ່າງຖືກຕ້ອງ ພ້ອມກັບເອກະສານອ້າງອີງຢ່າງນ້ອຍສຸດດັ່ງຕໍ່ໄປນີ້:

- ໃບຮຽກເກັບເງິນ ຫຼື ສັນຍາຂາຍສິນຄ້າຈາກຜູ້ສະໜອງສິນຄ້າ
- ເອກະສານການຂົນສົ່ງ ເຊັ່ນວ່າໃບສົ່ງສິນຄ້າທາງທະເລ (Bill of Lading) ຫຼື ໃບສົ່ງສິນຄ້າທາງອາກາດ (Air Way Bill)
- ລາຍການຫຸ້ມຫໍ່ [Packing] List (ຖ້າມີ)
- ໃບຢັ້ງຢືນຕົ້ນທາງ
- ໃບອະນຸຍາດ ຫຼື ໃບອະນຸມັດທີ່ໄດ້ຮັບຈາກກະຊວງອື່ນ ເຊິ່ງຂຶ້ນກັບປະເພດສິນຄ້າທີ່ທ່ານກຳລັງສົ່ງອອກ

ການແຈ້ງພາສີສາມາດສົ່ງຢູ່ຫ້ອງການພາສີເຂດທ້ອງຖິ່ນຂອງທ່ານ. *ຄລິກ ທີ່ນີ້* ເພື່ອເບິ່ງລາຍຊື່ຫ້ອງການພາສີທັງໝົດບ່ອນທີ່ທ່ານສາມາດສົ່ງໃບແຈ້ງພາສີ ແລະ ຊຳລະພາສີສຳລັບສິນຄ້າຂອງທ່ານ.

ໃບແຈ້ງພາສີຕ້ອງໄດ້ສົ່ງພາຍໃນ 15 ວັນນັບຈາກວັນທີຍື່ນເອກະສານການຂົນສົ່ງນຳດ່ານພາສີ (ຕົວຢ່າງ ໃບລາຍການສິນຄ້າ) ທີ່ແຈ້ງບອກໃຫ້ດ່ານພາສີຮູ້ວັນທີທີ່ສິນຄ້າເດີນທາງມາຮອດ (ເບິ່ງ *ການຂົນສົ່ງ*).

ໃນປະຈຸບັນ, ຢູ່ດ່ານຊາຍແດນທ່ານາແລ້ງເທົ່ານັ້ນ, ທຸກໃບແຈ້ງພາສີຕ້ອງໄດ້ສົ່ງຜ່ານທາງລະບົບຄຸ້ມຄອງການແຈ້ງພາສີແບບອັດຕະໂນມັດ *Asycuda*.

### ນາຍໜ້າແຈ້ງພາສີ

ທ່ານອາດຈະວ່າຈ້າງນາຍໜ້າແຈ້ງພາສີ(ຊິບປິງ)ເພື່ອແລ່ນເອກະສານການສົ່ງອອກແທນທ່ານ. ສຳລັບຂໍ້ມູນກ່ຽວກັບນາຍໜ້າ *ຄລິກ ທີ່ນີ້*.

### ການຊຳລະພາສີ

ເມື່ອໃບແຈ້ງພາສີໄດ້ຖືກສົ່ງຫາ ແລະ ຍອມຮັບໂດຍດ່ານພາສີແລ້ວ, ທ່ານຈະຖືກກຳນົດໃຫ້ຈ່າຍທຸກພາສີທີ່ກ່ຽວຂ້ອງ.

### ການສົ່ງອອກຊົ່ວຄາວ

ສິນຄ້າທີ່ຖືກສົ່ງອອກຊົ່ວຄາວຈາກປະເທດລາວເພື່ອຈຸດປະສົງການວາງສະແດງສິນຄ້າ, ການທົດລອງ, ການຄົ້ນຄວ້າວິໄຈ ແລະອື່ນໆ. ແລະ ສິນຄ້ານັ້ນຈະຖືກນຳກັບຄືນເຂົ້າມາໃນປະເທດໃນເວລາຕໍ່ມາ ຕ້ອງໄດ້ແຈ້ງໃຫ້ດ່ານພາສີຮັບຊາບໃນແບບວິທີປົກກະຕິ.

ສຳລັບສິນຄ້າຄວບຄຸມສະເພາະບາງປະເພດ, ການອະນຸມັດກ່ອນລ່ວງໜ້າແມ່ນຈຳເປັນຕ້ອງມີ (ເບິ່ງ <u>*ໃບອະນຸຍາດສົ່ງອອກ*</u> ຂ້າງເທິງ).

ສິນຄ້າທີ່ສົ່ງອອກພາຍໃຕ້ລະບອບການສົ່ງອອກຊົ່ວຄາວແມ່ນຖືກງົດຈາກການເສຍພາສີ ແລະ ພັນທະອື່ນ.

ໃບແຈ້ງພາສີຕ້ອງສົ່ງໃນເວລາສິນຄ້າດັ່ງກ່າວຖືກນຳກັບເຂົ້າມາ.

### ການຍົກເວັ້ນພາສີສຳລັບການສົ່ງອອກ

ເພື່ອສົ່ງເສີມການສົ່ງອອກສິນຄ້າບາງປະເພດ, ລວມມີສິນຄ້າກະສິກຳສ່ວນໃຫຍ່, ສິນຄ້າທີ່ໄດ້ຈາກຊັບພະຍາກອນທຳມະຊາດ ຫຼື ສິນຄ້າທີ່ຜະລິດຈາກໂຮງງານ, ສິນຄ້າເຫຼົ່ານີ້ໄດ້ຮັບການຍົກເວັ້ນຈາກການຈ່າຍພາສີສົ່ງອອກ. ແນວໃດກໍ່ຕາມ, ພາສີສົ່ງອອກແມ່ນຕ້ອງຈ່າຍຕໍ່ກັບສິນຄ້າສະເພາະບາງປະເພດ. ອັດຕາພາສີຂາເຂົ້າຂາອອກທີ່ນຳໃຊ້ກັບຜະລິດຕະພັນເຫຼົ່ານີ້ແມ່ນເປັນລາຍການຢູ່ໃນຫົວຂໍ້ການແຍກປະເພດສິນຄ້າ HS ທີ່ກ່ຽວຂ້ອງ. ທ່ານສາມາດຊອກຮູ້ວ່າພາສີນຳໃຊ້ກັບສິນຄ້າສະເພາະໃດໜຶ່ງຫຼືບໍ່ນັ້ນໄດ້ ໂດຍການໃຊ້ຕົວຊ່ວຍ *ການຄົ້ນຫາຜະລິດຕະພັນ* ເທິງເວັບໄຊນີ້. ຖ້າມີຂໍ້ສົງໃສ, ທ່ານຄວນຂໍຄຳແນະນຳຈາກ *ກົມພາສີ* ຫຼື ຈາກ *ກົມນຳເຂົ້າ ແລະສົ່ງອອກ* (DIMEX) ຂອງ *ກະຊວງອຸດສາຫະກຳ ແລະ ການຄ້າ*.

**ສິນຄ້າຜ່ານ**

ຖ້າທ່ານມີຈຸດປະສົງຂົນສົ່ງສິນຄ້າຈາກດ່ານສາກົນໜຶ່ງໄປອີກປະເທດໜຶ່ງໂດຍຜ່ານດິນແດນຂອງປະເທດລາວ ທ່ານຕ້ອງແຈ້ງສິນຄ້ານັ້ນໃຫ້ດ່ານພາສີຮັບຮູ້ ໂດຍປະຕິບັດຕາມ *ລະບຽບການຂົນສົ່ງຜ່ານ.*

ໃບແຈ້ງການນຳເຂົ້າພາຍໃຕ້ລະບອບຂົນສົ່ງຜ່ານ ຕ້ອງໄດ້ສົ່ງໃຫ້ດ່ານພາສີໃນເວລາສິນຄ້າມາຮອດຊາຍແດນລາວ. ເອກະສານຕໍ່ໄປນີ້ຕ້ອງໄດ້ຄັດຕິດມານຳໃບແຈ້ງສິນຄ້າ:

- ໃບຮຽກເກັບເງິນທາງການຄ້າ ຫຼື ສັນຍາການຂາຍ
- ໃບສົ່ງສິນຄ້າທາງທະເລ ຫຼື ໃບສົ່ງສິນຄ້າທາງອາກາດ
- ລາຍການຫຸ້ມຫໍ່

ສິນຄ້າຂົນສົ່ງຜ່ານແມ່ນບໍ່ໄດ້ເສຍພາສີ ແຕ່ຜູ້ແຈ້ງຕ້ອງໄດ້ສະໜອງສິ່ງຄ້ຳປະກັນ ໃນຮູບແບບເປັນໃບເຊັກ ຫຼື ໜັງສືຄ້ຳປະກັນທີ່ອອກໃຫ້ໂດຍທະນາຄານ ຫຼື ສະຖາບັນການເງິນ ໃນມູນຄ່າທີ່ເທົ່າກັບມູນຄ່າພາສີ ຫຼື ພັນທະອື່ນ.

ສິນຄ້າທີ່ຂົນສົ່ງຜ່ານຕ້ອງໄປຕາມເສັ້ນທາງທີ່ດ່ານພາສີກຳນົດໃຫ້.

ເມື່ອມາຮອດດ່ານຊາຍແດນຂາອອກ ໃບແຈ້ງການສົ່ງອອກພາຍໃຕ້ລະບອບການຂົນສົ່ງຜ່ານ ຕ້ອງໄດ້ສົ່ງໃຫ້ດ່ານພາສີ.

ຖ້າທຸກສິ່ງຢ່າງຮຽບຮ້ອຍດີ, ດ່ານພາສີຈະອະນຸຍາດໃຫ້ສິນຄ້າອອກຈາກດິນແດນປະເທດລາວໄດ້ ແລະ ໜັງສືຄ້ຳປະກັນຈະໝົດກຳນົດ. ຖ້າການຄ້ຳປະ ກັນແມ່ນເປັນໃບເຊັກ ມັນກໍ່ຈະຖືກສົ່ງຄືນຫາຜູ້ແຈ້ງສິນຄ້າ.

**ເຂົ້າປະເທດລາວ**

ຖ້າທ່ານເປັນນັກທ່ອງທ່ຽວ ຫຼື ເປັນຜູ້ໂດຍສານ ທີ່ເຂົ້າມາທາງເດີນບິນສາກົນໃດໜຶ່ງຂອງປະເທດລາວ ຫຼື ຂ້າມຊາຍແດນ, ທ່ານອາດນຳເອົາສິ່ງຂອງສ່ວນຕົວໃດໜຶ່ງ ເຂົ້າມາປະເທດລາວ ທີ່ບໍ່ເກີນຈຳນວນທີ່ອະນຸຍາດໃຫ້. ຈຳນວນເຫລົ່ານີ້ ມີດັ່ງລຸ່ມນີ້:

| | |
|---|---|
| ເຫຼົ້າທຸກປະເພດ | ບໍ່ເກີນ 2 ລິດ |
| ເບຍທຸກປະເພດ | ບໍ່ເກີນ 5 ລິດ |
| ວາຍທຸກປະເພດ | ບໍ່ເກີນ 3 ລິດ |
| ຢາສູບທຸກປະເພດ | ບໍ່ເກີນ 1 ຕຸດ (200 ກອກ) |
| ຊີກາທຸກປະເພດ | ບໍ່ເກີນ 50 ຊີກາ |
| ໃບຢາສູບ | ບໍ່ເກີນ 250 ກຼາມ |
| ນ້ຳຫອມ ຫຼື ນ້ຳມັນຫອມ | ບໍ່ເກີນໜຶ່ງລາຍການ |
| ວັດຖຸມີຄ່າ | [ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ] |
| ສະກຸນເງິນຕ່າງປະເທດ | [ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ] |

ນອກຈາກນັ້ນ ທ່ານຕ້ອງປະຕິບັດຕາມ ບັນດາລະບຽບການ ແລະ ຂໍ້ກຳນົດທຸກໆຢ່າງ ກ່ຽວກັບ ການນຳເຂົ້າ ສະກຸນເງິນຕ່າງປະເທດ ຫຼື ສະກຸນເງິນລາວ, ວັດຖຸມີຄ່າ, ວັດຖຸບູຮານ ແລະ ວັດຖຸທີ່ ກ່ຽວກັບ ວັດທະນະທຳ ແລະ ສິນຄ້າທີ່ມີການຈຳກັດ ແລະ ຫວງຫ້າມ(ເກືອດຫ້າມ).

ທ່ານບໍ່ຈຳເປັນຕ້ອງຕື່ມແບບຟອມແຈ້ງສິນຄ້າ ແລະ ທ່ານສາມາດເລືອກທີ່ຈະຍ່າງຜ່ານປ່ອງສີຟ້າ 'ບໍ່ມີຫຍັງແຈ້ງ'. ຖ້າທ່ານມີສິນຄ້າທີ່ເກີນຂໍ້ກຳນົດຂ້າງເທິງນັ້ນ ຫຼື ສິນຄ້າທີ່ມີການຈຳກັດ ແລະ ຫວງຫ້າມ, ທ່ານຄວນຍ່າງຜ່ານປ່ອງສີແດງ 'ມີເຄື່ອງແຈ້ງ' ແລະ ແຈ້ງສິນຄ້າໃນເວລາທີ່ພະນັກງານພາສີຖາມ.

**ອອກປະເທດລາວ**

ຖ້າທ່ານເປັນນັກທ່ອງທ່ຽວ ຫຼື ເປັນຜູ້ໂດຍສານ ທີ່ອອກຈາກປະເທດລາວທາງເດີນບິນສາກົນໃດໜຶ່ງຂອງປະເທດລາວ ຫຼື ຂ້າມຊາຍແດນ, ທ່ານບໍ່ຈຳເປັນຕ້ອງຕື່ມແບບຟອມພາສີໃດໜຶ່ງ ນອກຈາກແຕ່ວ່າ ທ່ານມີຈຸດປະສົງຈະນຳສິນຄ້າອອກ ຊຶ່ງເປັນສິນຄ້າທີ່ມີການຈຳກັດ ຫຼື ຫວງຫ້າມ. ໃນກໍລະນີນີ້ ທ່ານຕ້ອງປະຕິບັດຕາມ ລະບຽບຫຼັກການທົ່ວໄປ ທີ່ອອກໂດຍກະຊວງອຸດສາຫະກຳ ແລະ ການຄ້າ ຊຶ່ງຂຶ້ນກັບແຕ່ລະປະເພດສິນຄ້າ. ໃຫ້ເບິ່ງ *ແຈ້ງການເລກທີ 0973, ເອກະສານຕິດ 1* ເພື່ອເບິ່ງລາຍການສິນຄ້າຫວງຫ້າມ ແລະ ໃຫ້ເບິ່ງ *ແຈ້ງການເລກທີ 0076* ເພື່ອເບິ່ງລາຍການສິນຄ້າ ທີ່ຕ້ອງໄດ້ຮັບໃບອະນຸຍາດສົ່ງອອກ. ຖ້າທ່ານມີຂໍ້ສົງໃສ ໃຫ້ລາຍງານຕໍ່ກັບເຈົ້າໜ້າທີ່ພາສີ ທີ່ຢູ່ໃນຊາຍແດນທີ່ກ່ຽວຂ້ອງ.

**ການນຳເຂົ້າສິນຄ້າການກະເສດ, ສັດ, ຢາ ແລະອາຫານ**

ໃນການນຳເຂົ້າຜະລິດຕະພັນເຫຼົ່ານີ້ ໂດຍທົ່ວໄປແລ້ວຕ້ອງໄດ້ຮັບອະນຸຍາດລວງໜ້າກ່ອນການນຳເຂົ້າ ເພື່ອເປັນການຮັບປະກັນວ່າຜະລິດຕະພັນເຫຼົ່ານີ ບໍ່ເປັນອັນຕະລາຍຕໍ່ກັບສຸຂະພາບຂອງຄົນ ສັດ ແລະພືດ.
ໃນເວັບໄຊຍ໌ນີ້ເຮົາພະຍາຍາມໃຫ້ຂໍ້ມູນວ່າມີສິນຄ້າຫຼືຜະລິດຕະພັນໃດແດ່ທີ່ຈຳເປັນຕ້ອງຜ່ານ ເງື່ອນໄຂຂໍ້ກຳນົດຕ່າງໆ. ເຖິງຢ່າງໃດກໍດີ ສະຖານະການອາດມີການປ່ຽນແປງໄປໃນແຕ່ລະໄລຍະ ໂດຍອີງໃສ່ສະພາບການແລະເງື່ອນໄຂ ທີ່ ປ່ຽນແປງ ໄປໃນປະເທດສົ່ງອອກ (ຕົວຢ່າງເຊັ່ນ ການເກີດພະຍາດລະບາດ). ດັ່ງນັ້ນ ທ່ານຈຶ່ງຄວນກວດກາຄືນກັບ ໜ່ວຍງານ ທີ່ກ່ຽວຂ້ອງເປັນແຕ່ລະໄລຍະເພື່ອໃຫ້ ທ່ານສາມາດປະຕິບັດຕາມລະບຽບການລ່າສຸດໃນເວລານັ້ນໆ.

**ຜະລິດຕະພັນກະສິກຳ**

ຫາກທ່ານຕ້ອງການນຳເຂົ້າສິນຄ້າກະສິກຳສະເພາະໃດໜຶ່ງ (ເຊັ່ນ ຢາປາບສັດຕູພືດ) ທ່ານຄວນສະເໜີຂໍ ໃບອະນຸຍາດນຳເຂົ້າຈາກກົມປູກຝັງ ກະຊວງກະສິກຳແລະປ່າໄມ້.

ເພື່ອກວດເບິ່ງຂັ້ນຕອນທີ່ແນະນຳ.

ຫາກທ່ານຕ້ອງການນຳເຂົ້າຕົ້ນໄມ້ ແນວພັນ ໝາກໄມ້ ຫຼື ຜັກ ເພື່ອເປັນແນວພັນ ຫຼື ເພື່ອການບໍລິໂພກ ທ່ານຕ້ອງໄດ້ສະເໜີຂໍໃບອະນຸຍາດນຳເຂົ້າຈາກ ກົມປູກຝັງ ກະຊວງກະສິກຳແລະປ່າໄມ້.

ເພື່ອກວດເບິ່ງຂັ້ນຕອນທີ່ແນະນຳ.

## ສັດ ແລະ ປາ

ຫາກທ່ານຕ້ອງການນຳເຂົ້າສັດທ່ານຕ້ອງໄດ້ສະເໜີຂໍໃບຢັ້ງຢືນດ້ານເຕັກນິກຈາກກົດລ້ຽງສັດ ແລະການປະມົງ ກະຊວງກະສິກຳ ແລະ ປ່າໄມ້.

ເພື່ອກວດເບິ່ງຂັ້ນຕອນທີ່ແນະນຳສຳຫຼັບການນຳເຂົ້າສັດ.

ເພື່ອກວດເບິ່ງຂັ້ນຕອນທີ່ແນະນຳສຳຫຼັບການນຳເຂົ້າປາເປັນ ແລະ ປາແຊ່ແຂງ.

## ຢາ

ຫາກທ່ານຕ້ອງການນຳເຂົ້າຢາສຳຫຼັບການປິ່ນປົວ ທ່ານຄວນໄດ້ຮັບໃບອະນຸຍາດນຳເຂົ້າຈາກກົມອາຫານແລະຢາ ກະຊວງສາທາລະນະສຸກ. ກ່ອນການນຳເຂົ້າ ທ່ານຕ້ອງໄດ້ຂຶ້ນທະບຽນຢາກັບກົມດັ່ງກ່າວກ່ອນ.

ຜະລິດຕະພັນທີ່ຕົກຢູ່ໃນກຸ່ມຂອງຢາແມ່ນໄດ້ລະບຸໄວ້ໃນ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນ ການແພດ. ເພື່ອກວດເບິ່ງກົດໝາຍສະບັບນີ້. ເພື່ອກວດເບິ່ງຂັ້ນຕອນການຂຶ້ນທະບຽນ ແລະການນຳເຂົ້າຢາ.

## ອາຫານ

ຫາກທ່ານຕ້ອງການນຳເຂົ້າອາຫານເພື່ອການບໍລິໂພກຂອງຄົນຫຼືສັດ
ທ່ານຕ້ອງໄດ້ສະເໜີຂໍໃບອະນຸຍາດນຳເຂົ້າຈາກກົມອາຫານແລະຢາ ກະຊວງສາທາລະນະສຸກກ່ອນ.

ເພື່ອກວດເບິ່ງຂັ້ນຕອນການນຳເຂົ້າອາຫານ. ຫາກອາຫານທີ່ທ່ານຈະນຳເຂົ້ານັ້ນຈັດເປັນອາຫານເສີມ ທ່ານຕ້ອງ ໄດ້ໃບຢັ້ງຢືນການຂຶ້ນ ທະບຽນກ່ອນການນຳເຂົ້າ. ເພື່ອກວດກາຂັ້ນຕອນການນຳເຂົ້າຜະລິດຕະພັນປະເພດອາຫານເສີມ.

## ການຂົນສົ່ງສິນຄ້າ

ຜູ້ນຳເຂົ້າສິນຄ້າ ຫຼື ບໍລິສັດຕົວແທນຮັບຈັດສົ່ງສິນຄ້າ ທີ່ຮັບຜິດຊອບຂົນສົ່ງສິນຄ້າ ທີ່ຈະນຳເຂົ້າ, ສົ່ງອອກ ຫຼື ຂ້າມຜ່ານ ຕ້ອງຍື່ນເອກະສານຂົນສົ່ງ ໃຫ້ພາສີ ພາຍໃນເວລາ 24 ຊົ່ວໂມງ ພາຍຫຼັງທີ່ສິນຄ້າມາຮອດແລ້ວ ໂດຍຕ້ອງແຈ້ງພາສີຢູ່ທີ່ດ່ານທີ່ກ່ຽວຂ້ອງ. ບັນດາເອກະສານຂົນສົ່ງ ແມ່ນເອກະສານທາງດ້ານການຄ້າ ທີ່ອະທິບາຍເນື້ອໃນຂອງສິນຄ້າທີ່ພວມຖືກຂົນສົ່ງຢູ່.

ເອກະສານຂົນສົ່ງ ປະກອບດ້ວຍ:

ໃນກໍລະນີການຂອງການຂົນສົ່ງທາງອາກາດ:

- ໃບລາຍການສິນຄ້າທີ່ຂົນສົ່ງຜ່ານທາງອາກາດ

ໃນກໍລະນີຂອງການຂົນສົ່ງທາງບົກ:

- ລາຍການຫຸ້ມຫໍ່ (Packing List)
- ລາຍການບັນທຸກ (Load List)
- ໃບເກັບເງິນ ທີ່ອອກໃຫ້ໂດຍ ຜູ້ສົ່ງອອກສິນຄ້າ
- ໃບສົ່ງສິນຄ້າທາງທະເລ ຫຼື ໃບສົ່ງສິນຄ້າທາງບົກ

ເອກະສານການຂົນສົ່ງຕ້ອງໄດ້ສົ່ງໃຫ້ດ່ານພາສີທີ່ກ່ຽວຂ້ອງພາຍໃນ 24 ຊົ່ວໂມງ ນັບຈາກສິນຄ້າມາຮອດຊາຍແດນ.

## ການກະທຳຜິດ, ການປັບໄໝ ແລະ ການອຸທອນ ກ່ຽວກັບ ພາສີອາກອນ

### ການກະທຳຜິດ

ການຝ່າຝືນ ກົດໝາຍວ່າດ້ວຍພາສີ ຫຼື ບັນດາລະບຽບຫຼັກການຕ່າງໆ ແມ່ນເປັນຄວາມຜິດ ແລະ ອາດຖືກປັບໄໝ ຫຼື ດຳເນີນຄະດີຕາມກົດໝາຍ.

ຄວາມຜິດ ແມ່ນມີ 2 ປະເພດຄື:

- ການກະທຳຜິດບໍ່ຮຸນແຮງ ຊຶ່ງອາດເປັນຄວາມຜິດຂັ້ນໜຶ່ງ, ຂັ້ນສອງ ຫຼື ຂັ້ນສາມ
- ການກະທຳຜິດຮຸນແຮງ ຊຶ່ງອາດເປັນ ຄວາມຜິດຂັ້ນໜຶ່ງ ຫຼື ຂັ້ນສອງ

ການກະທຳຜິດບໍ່ຮຸນແຮງ ປະກອບດ້ວຍ ການແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ບໍ່ສົມບູນ (ເຊັ່ນວ່າ ປະລິມານ, ລາຍລະອຽດຂອງສິນຄ້າ, ແລະອື່ນໆ), ການແຈ້ງມູນຄ່າ ຫຼື ປະເພດ ທີ່ບໍ່ຖືກຕ້ອງ ທີ່ມີຈຸດປະສົງເພື່ອຫຼີກເວັ້ນບໍ່ເສຍພາສີອາກອນ, ການເກັບ ຫຼື ການດຳເນີນການ ກ່ຽວກັບ ສິນຄ້າທີ່ຕ້ອງເສຍອາກອນ ໂດຍບໍ່ມີເອກະສານດ້ານພາສີ ທີ່ຖືກຕ້ອງສົມບູນ.

ການກະທຳຜິດຮຸນແຮງ ແມ່ນກ່ຽວຂ້ອງກັບ ການສົ່ງອອກ ຫຼື ການນຳເຂົ້າສິນຄ້າທີ່ຢູ່ພາຍໃຕ້ການຄວບຄຸມ ໂດຍບໍ່ໄດ້ຮັບອະນຸຍາດທີ່ຖືກຕ້ອງຈາກພາສີ ຫຼື ອຳນາດການປົກຄອງທີ່ກ່ຽວຂ້ອງ.

ລາຍລະອຽດຂອງການກະທຳຜິດຕ່າງໆ ທີ່ໄດ້ກ່າວມາຂ້າງເທິງນັ້ນ ແລະ ການປັບໄໝອັນເນື່ອງມາຈາກການກະທຳຜິດແມ່ນສາມາດເບິ່ງໄດ້ໃນ *ກົດໝາຍວ່າດ້ວຍພາສີ, ພາກທີ XII, ໝວດທີ 1.*

### ການອຸທອນ

ບຸກຄົນໃດໜຶ່ງອາດຍື່ນອຸທອນຕໍ່ກັບຄຳຕັດສິນຂອງພາສີ ທີ່ເຫັນຖືວ່າ ເປັນການປະຕິບັດທີ່ບໍ່ຍຸຕິທຳ. ຂັ້ນຕອນ ແລະ ກົດລະບຽບຕ່າງໆ ກ່ຽວກັບ ການຍື່ນອຸທອນ ແລະ ການໄກ່ເກ່ຍ ແມ່ນໄດ້ອະທິບາຍໄວ້ໃນ *ກົດໝາຍວ່າດ້ວຍພາສີ, ພາກທີ X, ໝວດທີ 2.*

### ສະຫຼູບການປັບໄໝ

ຂ້າງລຸ່ມນີ້ ແມ່ນບົດສະຫຼູບການປັບໄໝ ເນື່ອງຈາກການກະທຳຜິດໃນຮູບແບບຕ່າງໆ.

### ການປັບໄໝ ເນື່ອງຈາກການກະທຳຜິດບໍ່ຮຸນແຮງ ຂັ້ນໜຶ່ງ

ບຸກຄົນໃດໜຶ່ງ ທີ່ໄດ້ກະທຳຜິດບໍ່ຮຸນແຮງ ຂັ້ນໜຶ່ງ ຈະຖືກປັບໄໝ ຕາມມູນຄ່າຂອງສິນຄ້າ.

| | |
|---|---|
| ມູນຄ່າສິນຄ້າຕໍ່າກວ່າ 5,000,000 ກີບ | ຜູ້ກະທຳຜິດຈະໄດ້ຮັບການຕັກເຕືອນ |
| ມູນຄ່າສິນຄ້າແຕ່ 5,000,000 ເຖິງ 10,000,000 ກີບ | ຜູ້ກະທຳຜິດຈະຖືກປັບໄໝ 5% ຂອງມູນຄ່າສິນຄ້າ |
| ມູນຄ່າສິນຄ້າຫຼາຍກວ່າ 10,000,000 ກີບ | ຜູ້ກະທຳຜິດຈະຖືກປັບໄໝ 10% ຂອງມູນຄ່າສິນຄ້າ |

**ການປັບໄໝ ເນື່ອງຈາກການກະທຳຜິດບໍ່ຮຸນແຮງ ຂັ້ນສອງ**

ບຸກຄົນໃດໜຶ່ງ ທີ່ໄດ້ກະທຳຜິດບໍ່ຮຸນແຮງ ຂັ້ນສອງ ຈະຖືວ່າ ໄດ້ຫຼົບຫຼີກພາສີ ແລະ ຈະຖືກປັບໄໝດັ່ງລຸ່ມນີ້.

| | |
|---|---|
| ຜູ້ກະທຳຜິດຈະຕ້ອງຈ່າຍຄ່າພາສີທັງໝົດ ແລະ ຈະຖືກປັບໄໝຄື: | 30% ຂອງມູນຄ່າສິນຄ້າ |
| ຖ້າຜູ້ກະທຳຜິດ ກະທຳຄວາມຜິດເປັນເທື່ອທີສອງ, ຜູ້ກະທຳຜິດຈະຕ້ອງຈ່າຍຄ່າພາສີທັງໝົດ ແລະ ຈະຖືກປັບໄໝຄື: | 50% ຂອງມູນຄ່າສິນຄ້າ |

**ການປັບໄໝ ເນື່ອງຈາກການກະທຳຜິດບໍ່ຮຸນແຮງ ຂັ້ນສາມ**

ບຸກຄົນໃດໜຶ່ງ ທີ່ໄດ້ກະທຳຜິດບໍ່ຮຸນແຮງ ຂັ້ນສາມ ຈະຖືວ່າ ໄດ້ຫຼົບຫຼີກພາສີ ແລະ ຈະຖືກປັບໄໝດັ່ງລຸ່ມນີ້.

| | |
|---|---|
| ຜູ້ກະທຳຜິດຈະຕ້ອງຈ່າຍຄ່າພາສີທັງໝົດ ແລະ ຈະຖືກປັບໄໝຄື: | 70% ຂອງມູນຄ່າສິນຄ້າ |
| ຖ້າຜູ້ກະທຳຜິດ ກະທຳຄວາມຜິດເປັນເທື່ອທີສອງ, ຜູ້ກະທຳຜິດຈະຕ້ອງຈ່າຍຄ່າພາສີທັງໝົດ ແລະ ຈະຖືກປັບໄໝຄື: | 100% ຂອງມູນຄ່າສິນຄ້າ |

**ການປັບໄໝ ເນື່ອງຈາກການກະທຳຜິດຮຸນແຮງ ຂັ້ນໜຶ່ງ**

ການກະທຳຜິດເຫລົ່ານີ້ ແມ່ນພົວພັນກັບ ຄວາມພະຍາຍາມໃນການນຳເຂົ້າ ແລະ ສົ່ງອອກສິນຄ້າຄວບຄຸມ ໂດຍບໍ່ໄດ້ຮັບການອະນຸຍາດທີ່ຖືກຕ້ອງ ແລະ ຍັງມີຄວາມຜິດບໍ່ຮຸນແຮງ ຂັ້ນສາມ ທີ່ກະທຳຊ້ຳແລ້ວຊ້ຳອີກ. ໃນທຸກໆກໍລະນີ, ສິນຄ້າຈະຖືກຍຶດໄວ້ ແລະ ນອກຈາກນັ້ນແລ້ວ ກໍ່ຈະມີການປັບໄໝດັ່ງລຸ່ມນີ້:

| | |
|---|---|
| ທຸກໆການກະທຳຜິດຂັ້ນໜຶ່ງ | 30% ຂອງມູນຄ່າສິນຄ້າ |

**ການປັບໄໝ ເນື່ອງຈາກການກະທຳຜິດຮຸນແຮງ ຂັ້ນສອງ**

ການປັບໄໝເຫລົ່ານີ້ ຈະນຳໃຊ້ ສຳລັບ ບຸກຄົນທີ່ກະທຳຄວາມຜິດຮຸນແຮງຂັ້ນໜຶ່ງ ຫຼາຍກວ່າໜຶ່ງຄັ້ງ ພ້ອມທັງຝ່າຝືນສິດທິຊັບສິນທາງປັນຍາ ຫຼື ປອມແປງເອກະສານພາສີ.

| | |
|---|---|
| ທຸກໆການກະທຳຜິດຂັ້ນສອງ | 50% ຂອງມູນຄ່າສິນຄ້າ |

ໃນກໍລະນີຂອງການກະທຳຜິດ ທີ່ພົວພັນເຖິງ ສິນຄ້າຜິດກົດໝາຍ ເຊັ່ນວ່າ ອາວຸດ, ສານເສບຕິດ ຫຼື ສານຫວງຫ້າມ ອື່ນໆ, ພາສີຈະຢຶດສິນຄ້ານັ້ນໄວ້ເປັນຫຼັກຖານ ແລະ ຈະສົ່ງເລື່ອງດັ່ງກ່າວໃຫ້ຕຳຫຼວດ ເພື່ອສືບສວນຕໍ່ໄປ ແລະ ຈະ ກະທຳການຕາມກົດໝາຍ.

ໃນເວລາມີການກະທຳຜິດ, ພາສີອາດຢຶດສິນຄ້າ ຫຼື ພາຫະນະ ທີ່ໄດ້ນຳໃຊ້ເຂົ້າໃນການກະທຳຜິດ ເພື່ອເອົາໄວ້ເປັນຫຼັກ ຖານ ແລະ ດຳເນີນຄະດີຕາມກົດໝາຍ. ຂັ້ນຕອນຕ່າງໆ ກ່ຽວກັບ ການດຳເນີນຄະດີ ການກະທຳຜິດທາງດ້ານພາສີ ແມ່ນ ໄດ້ອະທິບາຍໄວ້ໃນ *ກົດໝາຍວ່າດ້ວຍພາສີ, ພາກທີ XII, ໝວດທີ 2.*

**ນາຍໜ້າແຈ້ງພາສີ**

ເຈົ້າຂອງສິນຄ້າທີ່ຈະນຳເຂົ້າ ຫຼື ຜູ້ໃຫ້ບໍລິການຂົນສົ່ງ ອາດຈະວ່າຈ້າງ *ນາຍໜ້າແຈ້ງພາສີ* ເພື່ອເປັນຕົວແທນໃຫ້ເຂົາເຈົ້າໃນ ການດຳເນີນການຕາມລະບຽບການຕ່າງໆທີ່ຈຳເປັນສຳລັບການແຈ້ງພາສີ.

ໃນປະຈຸບັນ ບໍ່ມີຂໍ້ກຳນົດພິເສດຫຍັງໃນການເປັນນາຍໜ້າແຈ້ງພາສີ, ນອກຈາກຂໍ້ກຳນົດປົກກະຕິສຳລັບການຈົດ ທະບຽນເປັນທຸລະກິດ ແລະ ເພື່ອຈຸດປະສົງເສຍພາສີ.  ແນວໃດກໍ່ຕາມ, ໃນແຕ່ລະຊ່ວງໄລຍະ ກະຊວງການເງິນອາດ ຈະອອກລະບຽບກ່ຽວກັບມາດຕະຖານ, ຂໍ້ກຳນົດ ແລະ ຂອບເຂດການເຄື່ອນໄຫວຂອງນາຍໜ້າແຈ້ງພາສີ.   ສະນັ້ນ ທ່ານຄວນກວດເບິ່ງເວັບໄຊນີ້ ຫຼື ຕິດຕໍ່ຫາກະຊວງການເງິນໂດຍກົງ ເພື່ອຮັບປະກັນວ່າທ່ານໄດ້ຮັບຂໍ້ມູນຢ່າງຄົບຖ້ວນ ກ່ຽວກັບຂໍ້ກຳນົດໃໝ່ຕ່າງໆ.

**ພັນທະຂອງນາຍໜ້າແຈ້ງພາສີ**

ນາຍໜ້າແຈ້ງພາສີມີຄວາມຮັບຜິດຊອບຊຳລະພາສີສິນຄ້າຢູ່ດ່ານຊາຍແດນແທນເຈົ້າຂອງສິນຄ້າ.

ນາຍໜ້າແຈ້ງພາສີອາດຈະດຳເນີນໜ້າວຽກຕໍ່ໄປນີ້ ແລະ ມີພັນທະຕໍ່ໄປນີ້.

- ດຳເນີນທຸກລະບຽບການຊຳລະພາສີທີ່ຈຳເປັນຕາມກົດລະບຽບ ລວມທັງ ການສົ່ງທຸກເອກະສານທາງພາສີ, ສົ່ງ ໃບແຈ້ງພາສີ, ຊຳລະພາສີ ແລະ ພັນທະອື່ນ ແລະ ເຄື່ອນຍ້າຍສິນຄ້າອອກຈາກສາງເກັບມ້ຽນສິນຄ້າ ຫຼື ຈຸດ ກວດ ໃນນາມຕາງໜ້າໃຫ້ເຈົ້າຂອງສິນຄ້າ
- ຕິດຕໍ່ຫາອົງການຄຸ້ມຄອງພາສີເພື່ອຈົດທະບຽນລະບົບແຈ້ງພາສີແບບອີເລັກໂທຣນິກ

- ແຈ້ງສິນຄ້າຢ່າງຖືກຕ້ອງຕໍ່ກັບອົງການຄຸ້ມຄອງພາສີ ແລະ ສົ່ງເອກະສານສະໜັບສະໜູນຕ່າງໆ ອີງຕາມກົດ ລະບຽບ ແລະ ລະບຽບການດ້ານພາສີ
- ເຊັນຊື່ໃນໃບແຈ້ງພາສີແບບລະອຽດໃນຮູບແບບອີເລັກໂທຣນິກ ແລະ/ຫຼື ຮູບແບບອື່ນ ຕາມຄວາມຈຳເປັນ ໃນນາມເຈົ້າຂອງສິນຄ້າ ເມື່ອໄດ້ຮັບອະນຸຍາດໃຫ້ເຮັດສິ່ງນັ້ນ
- ຈ່າຍພາສີ ແລະ ພັນທະອື່ນໆໃນນາມເຈົ້າຂອງສິນຄ້າ
- ເຂົ້າຮ່ວມໃນການກວດສິນຄ້າຮ່ວມກັບເຈົ້າໜ້າທີ່ພາສີ
- ມີຄວາມຮັບຜິດຊອບຕໍ່ກັບເຈົ້າໜ້າທີ່ພາສີໃນນາມເຈົ້າຂອງສິນຄ້າ ສຳລັບການລະເມີດກົດໝາຍວ່າດ້ວຍພາສີ ຫຼື ທຸກກົດໝາຍ ຫຼື ກົດລະບຽບອື່ນທີ່ກ່ຽວຂ້ອງ
- ຮັບຜິດຊອບສຳລັບຄ່າໃຊ້ຈ່າຍໃນການຂົນສົ່ງ, ການເອົາສິນຄ້າລົງ, ການເຂົ້າເກັບມ້ຽນໃນສາງ ແລະ ລາຍຈ່າຍ ອື່ນໆທີ່ເກີດຂຶ້ນ ເນື່ອງຈາການກວດສິນຄ້າ

- ເປີດຕູ້ຄອນເທັນເນີ ແລະ ກ່ອງສິນຄ້າ; ນັບຈຳນວນສິນຄ້າ; ຕິດນ້ຳໜັກ ແລະ ວັດແທກສິນຄ້າ ທີ່ອາດຈະຖືກຮ້ອງຂໍໃຫ້ເຮັດໂດຍເຈົ້າໜ້າທີ່ດ່ານພາສີ

**ການຍົກເວັ້ນພາສີ**

ສິນຄ້າສະເພາະບາງປະເພດ ແມ່ນຈະໄດ້ຮັບການຍົກເວັ້ນພາສີ. ເຊິ່ງລຸ່ມນີ້ແມ່ນລາຍລະອຽດໂດຍຫຍໍ້ຂອງບາງລາຍ ການທີ່ຖືກຍົກເວັ້ນ. ເຖິງແນວໃດກໍ່ຕາມ ພວກເຮົາຂໍແນະນຳໃຫ້ທ່ານສອບຖາມເພີ່ມເຕີ່ມອີກຢູ່ນຳດ່ານພາສີເພື່ອໃຫ້ແນ່ໃຈວ່າທ່ານສາມາດໄດ້ຮັບການຜ່ອນຜັນສິນຄ້າຂອງທ່ານໄດ້ຫຼືບໍ່.

- ສິ່ງຂອງ ແລະ ພາຫະນະສຳລັບພາລະກິດທາງການທູດ
- ສິ່ງຂອງ ແລະ ພາຫະນະທີ່ນຳເຂົ້າມາໂດຍອົງການຈັດຕັ້ງທີ່ບໍ່ສັງກັດລັດ ຫຼື ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດທີ່ໄດ້ຮັບອະນຸມັດ
- ສິ່ງຂອງບາງປະເພດ ໃນເວລາປ່ຽນບ່ອນຢູ່ອາໄສ (ຍ້າຍເຮືອນ)
- ລັດຖະກອນທີ່ເຮັດສຳເລັດພາລະກິດຂອງເຂົາເຈົ້າ, ນັກສຶກສາທີ່ຮຽນຈົບຈາກຕ່າງປະເທດ ແລະ ຄົນຕ່າງປະເທດທີ່ຕ້ອງການມາຕັ້ງຖິ່ນຖານຖາວອນ ທີ່ນຳເຂົ້າສິ່ງຂອງຕ່າງໆນອກຈາກພາຫະນະຂອງເຂົາເຈົ້າ ແມ່ນໄດ້ຮັບການຍົກເວັ້ນພາສີ ສຳລັບ ສິ່ງຂອງດັ່ງຕໍ່ໄປນີ້:

  - ສິນຄ້າສະເພາະບາງປະເພດ ແລະ ໃນຈຳນວນສະເພາະໃດໜຶ່ງ ທີ່ບໍ່ມີລັກສະນະທາງການຄ້າ

  - ເຄື່ອງໃຊ້ໃນເຮືອນ

  - ສິ່ງຂອງທີ່ໄດ້ຮັບຈາກມໍລະດົກ.

- ຂອງຂັວນຂອງຄະນະຜູ້ແທນທີ່ກັບຈາກການຢ້ຽມຢາມຕ່າງປະເທດຢ່າງເປັນທາງການ
- ການຊ່ວຍເຫຼືອດ້ານມະນຸດສະທຳ
- ການຊ່ວຍເຫຼືອລ້າຈາກຕ່າງປະເທດ, ການຢືມ ຫຼື ການຈ່າຍໜີ້ສິນຂອງລັດຖະບານ
- ສິ່ງຂອງທີ່ນຳມາໃຊ້ສຳລັບຈຸດປະສົງທາງສາສະໜາ (ຕົວຢ່າງ ພິທີທາງສາສະໜາ, ການກໍ່ສ້າງສະຖານທີ່ທາງສາສະໜາ) ທີ່ມີເອກະສານຢັ້ງຢືນຈາກອົງການພຸດທະສາສະໜາ ຫຼື *ແນວລາວສ້າງຊາດ* ຫຼື *ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ*
- ສິ່ງຂອງ, ອາວຸດ ແລະ ພາຫະນະພິເສດທີ່ຈະນຳໃຊ້ເພື່ອການປ້ອງກັນຊາດ ແລະ ຄວາມສະຫງົບພາຍໃນ
- ຕົວຢ່າງ ແລະສິ່ງຂອງສຳລັບການຄົ້ນຄວ້າວິໄຈທາງວິທະຍາສາດທີ່ບໍ່ມີລັກສະນະທາງການຄ້າ
- ພາຍໃຕ້ *ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ* ການນຳເຂົ້າສິນຄ້າສະເພາະບາງປະເພດໃດໜຶ່ງ ແມ່ນຈະໄດ້ຮັບການຍົກເວັ້ນພາສີ ຫຼື ຫຼຸດຜ່ອນພາສີ ແລະ ພັນທະອື່ນ.
- ສິນຄ້າທີ່ນຳເຂົ້າມາ ແລະ ອອກຈາກເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ
- ສິນຄ້າທີ່ຂາຍໃຫ້ນັກທ່ອງທ່ຽວທີ່ເດີນທາງອອກ ຢູ່ຮ້ານຄ້າປອດພາສີທີ່ໄດ້ຮັບອະນຸຍາດຈາກ *ກະຊວງການເງິນ (ເບິ່ງນັກທ່ອງທ່ຽວເຂົ້າ-ອອກປະເທດລາວ)*

**ຂໍ້ຕົກລົງການຄ້າເສລີ (FTA)**

ໃນນາມສະມາຊິກຂອງ ASEAN, ສປປລາວ ແມ່ນສະມາຊິກຂອງຂອບຂໍ້ຕົກລົງການຄ້າເສລີ (FTA) ຫຼາຍຂໍ້ຕົກລົງ. ຂໍ້ຕົກລົງເຫຼົ່ານີ້ແມ່ນແນໃສ່ອຳນວຍ ຄວາມສະດວກທາງດ້ານການຄ້າລະຫວ່າງບັນດາປະເທດສະມາຊິກ ASEAN

ກັບປະເທດຄູ່ເຈລະຈາຕາມຂໍ້ຕົກລົງ. ວັດຖຸປະສົງທີ່ສຳຄັນໜຶ່ງແມ່ນເພື່ອ ຫຼຸດຜ່ອນອັນຕາພາສີໃຫ້ເຫຼືອສູນ. ການຍົກເວັ້ນພາສີແບບເດັດຂາດແມ່ນຕ້ອງໄດ້ຄ່ອຍໆດຳເນີນການຜ່ານການຫຼຸດຜ່ອນພາສີເປັນໄລຍະໆ.

ສະມາຊິກ ASEAN ແຕ່ລະປະເທດມີພັນທະຕ້ອງໄດ້ຫຼຸດຜ່ອນພາສີນີ້.
ທ່ານອາດຈະກວດເບິ່ງລະອຽດຕາຕະລາງການຫຼຸດຜ່ອນພາສີຂອງຂໍ້ຕົກລົງ ການຄ້າເສລີແຕ່ລະສະບັບ ໂດຍການກົດ ເບິ່ງລີ້ງຕ່າງໆຂ້າງລຸ່ມນີ້.

ນະປັດຈຸບັນ, ສປປລາວ ເປັນສ່ວນໜຶ່ງຂອງ FTA ຕ່າງໆດັ່ງລຸ່ມນີ້.
ຫາກທ່ານສົນໃຈສຶກສາລາຍລະອຽດຂອງຂໍ້ຕົກລົງແຕ່ລະອັນ ທ່ານສາມາດກວດ ກາເບິ່ງ ຫຼືດາວໂຫລດໄດ້ ໂດຍກົງຈາກລີ້ງຕ່າງໆນີ້. ທັງໝົດນີ້ແມ່ນຢູ່ໃນຮູບແບບຂອງໄຟລ໌ PDF.

| | |
|---|---|
| *ສັນຍາການຄ້າດ້ານສິນຄ້າອາຊຽນ* | *ສັນຍາການຄ້າດ້ານສິນຄ້າອາຊຽນ*<br>*ລະບຽບແຫລ່ງກຳເນີດສິນຄ້າ ສຳລັບສັນຍາວ່າດ້ວຍການຫລຸດຜ່ອນອັດຕາພາສີທີ່ມີຜົນບັງຄັບໃຊ້ຮ່ວມກັນ (CEPT) ຂອງເຂດການຄ້າເສລີ ອາຊຽນ*<br>*_ການຢັ້ງຢືນການຈັດຕັ້ງປະຕິບັດ ກົດວ່າດ້ວຍແຫລ່ງກຳເນີດສິນຄ້າຕາມຕາຕະລາງ_CEPT ຂອງເຂດການຄ້າເສລີອາຊຽນ* |
| *ສັນຍາການຄ້າເສລີ-ອາຊຽນ, ອົສຕາລີ/ນິວຊີແລນ (AANZFTA)* | *ສັນຍາວ່າດ້ວຍການສ້າງຕັ້ງ ເຂດການຄ້າເສລີອາຊຽນ, ອົສຕາລີ/ນິວຊີແລນ*<br>*ລະບຽບແຫຼ່ງການກຳເນີດສະເພາະຜະລິດຕະພັນ*<br>*ຕາຕະລາງອັດຕາພາສີ_AANZFTA*<br>*ພັນທະການຫຼຸດຜ່ອນພາສີຂອງນິວຊີແລນ*<br>*ພັນທະການຫຼຸດຜ່ອນພາສີຂອງອົສຕຣາລີ* |
| *ສັນຍາການຄ້າເສລີອາຊຽນ-ຈີນ(ACFTA)* | *ສັນຍາວ່າດ້ວຍການຄ້າດ້ານສິນຄ້າ ພາຍໃຕ້ຂອບການຕົກລົງເປັນຄູ່ຮ່ວມມືດ້ານເສດຖະກິດຮອບດ້ານ ລະຫວ່າງອາຊຽນ ແລະ ສປ ຈີນ*<br>*ລະບຽບແຫລ່ງກຳເນີດສິນຄ້າ ສຳລັບເຂດການຄ້າເສລີອາຊຽນ-ຈີນ_*<br>*ລະບຽບແຫລ່ງກຳເນີດສະເພາະຜະລິດຕະພັນ*<br>*ຕາຕະລາງອັດຕາພາສີຂອງ_ACFTA* |

| | |
|---|---|
| | *ພັນທະການຫຼຸດຜ່ອນພາສີຂອງຈີນ* |
| *ສັນຍາການຄ້າເສລີອາຊຽນ-ອິນເດຍ(AIFTA)* | *ສັນຍາການຄ້າວ່າດ້ວຍການຄ້າດ້ານສິນຄ້າ ພາຍໃຕ້ຂອບການຕົກລົງເປັນຄູ່ຮ່ວມມື ດ້ານເສດຖະກິດ ລະຫວ່າງອາຊຽນ ແລະ ສາທາລະນະລັດ ອິນເດຍ*<br>*ແບບຟອມ_AI*<br>*ຕາຕະລາງອັດຕາພາສີຂອງ_AIFTA*<br>*ພັນທະການຫຼຸດຜ່ອນພາສີຂອງອິນເດຍ* |
| *ສັນຍາການເປັນຄູ່ຮ່ວມມືດ້ານເສດຖະກິດຮອບດ້ານອາຊຽນ-ຍີ່ປຸ່ນ (AJCEP)* | *ສັນຍາວ່າດ້ວຍການເປັນຄູ່ຮ່ວມມືດ້ານເສດຖະກິດຮອບດ້ານລະຫວ່າງອາຊຽນ ແລະ ຍີປຸ່ນ*<br>*ລະບຽບແຫລ່ງກໍາເນີດສິນຄ້າສະເພາະຜະລິດຕະພັນ*<br>*ຜະລິດຕະພັນໄອທີ*<br>*ລະບົບຂັ້ນຕອນການອອກໃບຢັ້ງຢືນແຫລ່ງກໍາເນີດສິນຄ້າ*<br>*ແຜນວຽກສໍາລັບຮ່ວມມືທາງດ້ານເສດຖະກິດ*<br>*ຕາຕະລາງອັດຕາພາສີຂອງ_AJCEP(ໃຫ້ເບິ່ງຄຽງຄູ່ກັບບົດແນະນໍາ)*<br>*ພັນທະການຫຼຸດຜ່ອນພາສີຂອງຍີ່ປຸ່ນ* |
| *ສັນຍາການຄ້າເສລີອາຊຽນ-ເກົາຫລີ(AKFTA)* | *ສັນຍາວ່າດ້ວຍການຄ້າດ້ານສິນຄ້າ ພາຍໃຕ້ຂອບການຕົກລົງເປັນຄູ່ຮ່ວມມືດ້ານເສດຖະກິດຮອບດ້ານ ລະຫວ່າງອາຊຽນ ແລະ ເກົາຫລີ*<br>*ລະບຽບແຫລ່ງກໍາເນີດສິນຄ້າ*<br>*ບົດອະທິບາຍສໍາລັບລະບຽບແຫລ່ງກໍາເນີດສິນຄ້າ*<br>*ບັນຊີລາຍການສິນຄ້າອ່ອນໄຫວ*<br>*ບັນຊີລາຍການສິນຄ້າອ່ອນໄຫວສູງ*<br>*ລະບຽບແຫລ່ງກໍາເນີດສິນຄ້າສະເພາະຜະລິດຕະພັນ*<br>*ລະບຽບຂັ້ນຕອນການອອກໃບຢັ້ງຢືນແຫລ່ງກໍາເນີດສິນຄ້າ*<br>*ຮູບແບບການຫຼຸດຜ່ອນ ແລະ ຍົກເລີກພາສີ_(ສິນຄ້າທົ່ວໄປ)*<br>*ຮູບແບບການຫຼຸດຜ່ອນ ແລະ ຍົກເລີກພາສີ_(ສິນຄ້າອ່ອນໄຫວ)*<br>*ແບບຟອມ_AK* |

| | |
|---|---|
| | *ຕາຕະລາງອັດຕາພາສີ_AKFTA*<br>*ພັນທະການຫຼຸດຜ່ອນພາສີຂອງເກົາຫລີ* |

**ຄໍາສັບທີ່ໃຊ້ທົ່ວໄປ**

| | |
|---|---|
| ລະບົບການຄຸ້ມຄອງທາງພາສີຮູບແບບໃໝ່<br>ASYCUDA | ລະບົບການຄຸ້ມຄອງທາງພາສີຮູບແບບໃໝ່ທີ່ປັດຈຸບັນກໍາລັງຢູ່ໃນຂັ້ນຕອນການຈັດຕັ້ງປະຕິບັດໂດຍກົມພາສີ ຢູ່ ສປປລາວ. |
| ເອກະສານແຈ້ງພາສີອາຊຽນ ACDD | ເອກະສານແຈ້ງພາສີອາຊຽນ. ແບບຟອມທີ່ນໍາໃຊ້ເພື່ອແຈ້ງພາສີ. ແບບຟອມດັ່ງກ່າວແມ່ນອີງຕາມຮູບແບບມາດຕະຖານຂອງອາຊຽນ. ເພື່ອເບິ່ງຂໍ້ມູນເພີ່ມເຕີມກ່ຽວກັບເອກະສານແຈ້ງພາສີອາຊຽນ. ເພື່ອເບິ່ງເອກະສານແຈ້ງພາສີອາຊຽນທີ່ນໍາໃຊ້ໃນ ສປປ ລາວ. |
| ປະຊາຄົມພາກພື້ນຕາເວັນອອກສ່ຽງໃຕ້<br>ASEAN | ປະຊາຄົມພາກພື້ນຕາເວັນອອກສ່ຽງໃຕ້ (ASEAN). ອາຊຽນເປັນອົງການຈັດຕັ້ງໜຶ່ງທີ່ມີຈຸດປະສົງເພື່ອສົ່ງເສີມການເຕີບໂຕທາງດ້ານເສດຖະກິດ, ຄວາມກ້າວໜ້າທາງສັງຄົມ, ການພັດທະນາ ແລະ ຄວາມມີສະຖຽນລະພາບຂອງ 10 ປະເທດສະມາຊິກໃນພາກພື້ນ. ເຊິ່ງປະກອບມີ: ບຣູໄນ, ມຽນມ້າ, ກໍາປູເຈຍ, ອິນໂດນີເຊຍ, ລາວ, ມາເລເຊຍ, ຟີລິບປິນ, ສິງກະໂປ, ໄທ ແລະ ຫວຽດນາມ. |
| ອັດຕາພາສີພິເສດ<br>CEPT | ອັດຕາພາສີພິເສດ. ອັດຕາພາສີສໍາລັບທຸກສິນຄ້າທີ່ມີການຄ້ານໍາກັນລະຫວ່າງບັນດາປະເທດສະມາຊິກອາຊຽນ. ທ່ານສາມາດເບິ່ງອັດຕາພາສີ CEPT ສໍາລັບທຸກຜະລິດຕະພັນໄດ້ຈາກເວບໄຊນີ້ ໂດຍເຂົ້າໄປ. |
| ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ<br>Certificate of Origin (COO) | ເອກະສານທີ່ເປັນເງື່ອນໄຂຂອງອົງການທີ່ກ່ຽວຂ້ອງຂອງປະເທດຜູ້ນໍາເຂົ້າເພື່ອຢັ້ງຢືນແຫຼ່ງກໍາເນີດຂອງສິນຄ້າ. |
| ການແຈ້ງເອກະສານ<br>Declaration | ເອກະສານທີ່ຍື່ນເຖິງໜ່ວຍງານລັດຖະບານ (ເຊັ່ນ: ພາສີ) ເພື່ອສະແດງລາຍການສິນຄ້າທີ່ຜູ້ແຈ້ງຮັບຜິດຊອບ ເພື່ອຂໍອະນຸມັດນໍາເຂົ້າ, ສົ່ງອອກ ຫຼື ຜ່ານແດນ. ການແຈ້ງເອກະສານ ແມ່ນນໍາໃຊ້ແບບຟອມທີ່ກໍານົດ ແລະ ອາດມີເອກະສານອື່ນຄັດຕິດພ້ອມ. ການແຈ້ງເອກະສານ ແມ່ນມີຜົນທາງກົດໝາຍ ແລະ ອາດນໍາໃຊ້ເປັນເອກະສານພິສູດໃນສານ. ໃນ ສປປ ລາວ ການແຈ້ງເອກະສານ ແມ່ນນໍາໃຊ້ *ແບບຟອມ ACDD* (ເບິ່ງ *ACDD ຂ້າງເທິງ*) |
| ກົມການນໍາເຂົ້າ ແລະ ສົ່ງອອກ<br>DIMEX | ກົມການນໍາເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກໍາ ແລະ ການຄ້າ |
| ຈຸດສອບຖາມ<br>Enquiry Point | ພະນັກງານ ຫຼື ຫ້ອງການ ທີ່ຕາງໜ້າລັດຖະບານທີ່ເປັນສະມາຊິກອົງການການຄ້າໂລກ ທີ່ຖືກມອບໝາຍເປັນຈຸດປະສານງານກັບສະມາຊິກອົງການການຄ້າໂລກ ແລະ ກັບພາກສ່ວນພາຍນອກ ໃນວຽກງານທີ່ຕິດພັນກັບເຕັກນິກທີ່ |

| | |
|---|---|
| | ເປັນອຸປະສັກຕໍ່ການຄ້າ ຫຼື ມາດຕະການທາງດ້ານສຸຂານາໄມ-ສຸຂານາໄມພືດ. |
| ສັນຍາການຄ້າເສລີ<br><br>FTA | ສັນຍາການຄ້າເສລີ. ສັນຍາສາກົນທີ່ມີການເຈລະຈາກັນລະຫວ່າງບັນດາປະເທດ ຫຼື ສະມາຄົມຂອງປະເທດທີ່ເປັນຕົວແທນຂອງປະເທດສະມາຊິກ (ເຊັ່ນ: ອາຊຽນ) ທີ່ມີຈຸດປະສົງເພື່ອເຮັດໃຫ້ການຄ້າຮ່ວມກັນມີຄວາມງ່າຍດາຍລະຫວ່າງບັນດາປະເທດພາຄີຂອງສັນຍາ ລວມທັງ ການຫຼຸດຜ່ອນອັດຕາພາສີຕໍ່ສິນຄ້າ ທີ່ມີການຄ້າຮ່ວມກັນລະຫວ່າງບັນດາປະເທດສະມາຊິກ. ທ່ານສາມາດເບິ່ງອັດຕາພາສີພິເສດພາຍໃຕ້ສັນຍາການຄ້າເສລີ ທີ່ ສປປ ລາວ ເປັນພາຄີ ໄດ້ໃນເວບໄຊນີ້ ໂດຍເຂົ້າໄປທີ່ *ຄົ້ນຫາຜະລິດຕະພັນ.* |
| ລະຫັດ HS<br><br>HS Code | ລະຫັດ 8 ຕົວເລກ ຂອງລະບົບເອກະພາບ ທີ່ໃຊ້ກັບຜະລິດຕະພັນ. ລະຫັດ HS ມີໂຄງສ້າງໂດຍອີງຕາມລໍາດັບຂອງລະຫັດເຄົ້າ (2 ຕົວເລກທໍາອິດ), ລະຫັດເຄົ້າຍ່ອຍ (4 ຕົວເລກທໍາອິດ), ລະຫັດຫຼັກຍ່ອຍ (6 ຕົວເລກທໍາອິດ) ແລະ ລະຫັດ (8 ຕົວເລກ). ລະຫັດ HS ນໍາໃຊ້ເພື່ອກໍານົດ ຄໍາອະທິບາຍຜະລິດຕະພັນ ເພື່ອຈຸດປະສົງການນໍາໃຊ້ອັດຕາພາສີ ຫລື ມາດຕະການສະເພາະທີ່ນໍາໃຊ້ຕໍ່ແຕ່ລະຜະລິດຕະພັນ. |
| ມາດຕະການ<br><br>Measure | ຂໍ້ກໍານົດສະເພາະທີ່ໃຊ້ຕໍ່ຜະລິດຕະພັນ. ມາດຕະການດັ່ງກ່າວນີ້ອາດເປັນການເກືອດຫ້າມຊົ່ວຄາວ ຫຼື ຖາວອນ ຂຶ້ນກັບເງື່ອນໄຂທາງດ້ານ SPS ແລະ ເຫດຜົນອື່ນໆ ຫຼື ເງື່ອນໄຂສະເພາະໃດໜຶ່ງໂດຍການປະກອບເອກະສານສະເພາະ ຫຼື ປະຕິບັດມາດຕະການໃດໜຶ່ງ. ໂດຍທົ່ວໄປ, ການກໍານົດມາດຕະການ ແມ່ນກໍານົດໂດຍການອອກລະບຽບການຂອງລັດຖະມົນຕີ ຫຼື ໂດຍມາດຕາທີ່ກໍານົດໃນກົດໝາຍ. |
| ການປະຕິບັດຕໍ່ປະເທດທີ່ໄດ້ຮັບການອະນຸເຄາະຍິ່ງ<br><br>MFN | ການປະຕິບັດຕໍ່ປະເທດທີ່ໄດ້ຮັບການອະນຸເຄາະຍິ່ງ. ຫຼັກການ MFN ແມ່ນລະບຸໃນ *ມາດຕາ I ຂອງສັນຍາທົ່ວໄປວ່າດ້ວຍການຄ້າ ແລະ ອັດຕາພາສີ ຂອງອົງການການຄ້າໂລກ* ((GATT 1947 ແລະ 1994). ທ່ານສາມາດເບິ່ງອັດຕາພາສີ MFN ສໍາລັບທຸກຜະລິດຕະພັນໄດ້ທີ່ເວບໄຊໃນ *ຄົ້ນຫາຜະລິດຕະພັນ.* |
| ການແຈ້ງການ<br><br>Notification | ເງື່ອນໄຂພັນທະຄວາມໂປ່ງໃສ ທີ່ປະເທດສະມາຊິກອົງການການຄ້າໂລກຕ້ອງລາຍງານມາດຕະການທາງການຄ້າ ຕໍ່ກັບໜ່ວຍງານທີ່ກ່ຽວຂ້ອງອົງການການຄ້າໂລກ ຖ້າຫາກວ່າມາດຕະການດັ່ງກ່າວໄດ້ກະທົບຕໍ່ປະເທດສະມາຊິກອື່ນ. |
| ເອກະສານຄຸ້ມຄອງອັນດຽວກັນ<br><br>SAD | ເອກະສານຄຸ້ມຄອງອັນດຽວກັນ. ແບບຟອມທີ່ຜູ້ຄ້າຂາຍຕ້ອງຍື່ນເພື່ອຂໍການນໍາເຂົ້າ, ສົ່ງອອກ ຫຼື ຜ່ານແດນ ຕໍ່ໜ່ວຍງານພາສີ. ໃນ ສປປ ລາວ ແມ່ນນໍາໃຊ້ແບບຟອມ ACDD *(ເບິ່ງຂ້າງເທິງ)* ທີ່ນໍາໃຊ້ມາດຕະຖານຂອງອາຊຽນ. |
| ມາດຕະການສຸຂານາໄມ-ສຸຂານາໄມພືດ (SPS)<br><br>Sanitary and Phytosanitary (SPS) measures | ມາດຕະການທີ່ຕິດພັນເຖິງຄວາມປອດໄພຂອງອາຫານ ແລະ ສຸຂະພາບສັດ ແລະ ພືດ.<br><br>• ສຸຂານາໄມ: ສໍາລັບສຸຂະພາບຄົນ ແລະ ສັດ<br>• ສຂານາໄມພືດ: ສໍາລັບພືດ ແລະ ຜະລິດຕະພັນພືດ |

| | |
|---|---|
| ສັນຍາວ່າດ້ວຍສຸຂານາໄມ-ສຸຂານາໄມພືດSPS Agreement | ລະບຽບການພາຍໃຕ້ສັນຍາອົງການການຄ້າໂລກ ກ່ຽວກັບມາດຕະການສຸຂານາໄມ-ສຸຂານາໄມພືດ. |
| ສັນຍາວ່າດ້ວຍເຕັກນິກທີ່ເປັນອຸປະສັກຕໍ່ການຄ້າTBT Agreement | ສັນຍາອົງການການຄ້າໂລກ ທີ່ຕິດພັນກັບການນຳໃຊ້ລະບຽບການທາງເຕັກນິກ, ມາດຕະຖານ, ທົດສອບ ແລະ ມາດຕະການອອກໃບຢັ້ງຢືນ, ແລະຮັບປະກັນວ່າບັນດາມາດຕະການເຫຼົ່ານີ້ ບໍ່ແມ່ນສິ່ງກີດຂວາງຕໍ່ການຄ້າ |
| ຄວາມໂປ່ງໃສTransparency | ອີງຕາມດຳລັດ, ນະໂຍບາຍທາງການຄ້າ ແລະ ຂັ້ນຕອນການຈັດຕັ້ງປະຕິບັດທີ່ໄດ້ຮັບການສ້າງຕັ້ງ ແມ່ນເປີດເຜີຍ ແລະ ສາມາດຄາດການໄດ້ |
| WTO | ອົງການການຄ້າໂລກ |

**ຂະບວນການ**

ລະບຽບການນີ້ຖືກນໍາໃຊ້ເພື່ອຂໍເອົາໃບອະນຸຍາດນໍາເຂົ້າ/ສົ່ງອອກ ຈາກກົມການນໍາເຂົ້າ ແລະ ສົ່ງອອກ (DIMEX/MOIC) ສໍາລັບສິນຄ້າທີ່ຕ້ອງການໄດ້ຮັບໃບອະນຸຍາດນໍາເຂົ້າ/ສົ່ງອອກ.

ໃບອະນຸຍາດນໍາເຂົ້າ/ສົ່ງອອກອາດເປັນແບບອັດຕະໂນມັດ ຫຼື ບໍ່ອັດຕະໂນມັດ. ໃບອະນຸຍາດແບບອັດຕະໂນມັດຈະຖືກອອກໃຫ້ໃນທຸກໆກໍລະນີ ໂດຍມີເງື່ອນໄຂວ່າຂໍ້ກໍານົດດ້ານລະບຽບກົດໝາຍປົກກະຕິຖືກຕອບສະໜອງໄດ້. ໃບອະນຸຍາດແບບບໍ່ອັດຕະໂນມັດອາດຈະຖືກອອກໃຫ້ ໂດຍຂຶ້ນກັບການພິຈາລະນາຂອງ DIMEX. ໂດຍປົກກະຕິແລ້ວນີ້ແມ່ນໃນເວລາທີ່ກ່ຽວຂ້ອງກັບໂຄຕ້າການນໍາເຂົ້າ.

ຂະບວນການຂັ້ນຕອນໃນການຂໍອະນຸຍາດແມ່ນຄືກັນ ຍົກເວັ້ນແຕ່ເອກະສານທີ່ຕ້ອງຍື່ນປະກອບນັ້ນອາດຈະແຕກຕ່າງກັນແດ່ລະຫວ່າງການນໍາເຂົ້າ ກັບ ການສົ່ງອອກ

ກະລຸນາ ເບິ່ງ *ດໍາລັດວ່າດ້ວຍການນໍາເຂົ້າສົ່ງອອກ ເລກທີ 114* ສໍາລັບກົດລະບຽບທີ່ຄວບຄຸມການອອກໃບອະນຸຍາດນໍາເຂົ້າ.




## Note 1

ໃບສະເໜີຂຽນຂຶ້ນເອງໄດ້ ແຕ່ມີຮ່າງຢູ່ກົມການນຳເຂົ້າ ແລະ ສົ່ງອອກຢູ່ ກະລຸນາ*<u>ກົດທີ່ນີ້</u>* ເພື່ອເບິ່ງຕົວຢ່າງ.

## Note 2

ເອກະສານທີ່ຈໍາເປັນໃນການຍື່ນເພື່ອໃຫ້ໄດ້ໃບອະນຸຍາດນໍາເຂົ້າ ຫຼື ສົ່ງອອກນັ້ນອາດຈະມີຄວາມ ແຕກຕ່າງ ໄປຕາມສິນຄ້າ ແລະ ບາງກໍລະນີອາດຈະຕ້ອງໄດ້ຂໍຈາກກະຊວງຫຼືໜ່ວຍງານອື່ນກໍເປັນໄດ້. *ກົດທີ່ນີ້* ເພື່ອກວດກາ ເບິ່ງບັນດາຂໍ້ກໍານົດທີ່ກ່ຽວຂ້ອງກັບລາຍການສິນຄ້າສະເພາະ ຫຼືວ່າ ທ່ານອາດຈະ ເບິ່ງລາຍລະອຽດສໍາລັບ ແຕ່ລະປະ ເພດສິນຄ້າກໍໄດ້ຕາມດັ່ງຕໍ່ໄປນີ້.

- ***ການນໍາເຂົ້າຊີມັງ ເພື່ອຮັບໃຊ້ໂຄງການ***

  ທ່ານຕ້ອງໄດ້ແຈ້ງແຜນການນໍາເຂົ້າປະຈໍາປີ ພ້ອມກັບເອກະສານອະນຸຍາດຈາກ ກະຊວງແຜນການ ແລະ ການລົງທຶນ ຕໍ່ກັບກົມການນໍາເຂົ້າ ແລະ ສົ່ງອອກ. *ກົດທີ່ນີ້* ເພື່ອກວດເບິ່ງກະບວນການ ຂັ້ນຕອນໃນ ການຂໍໃບອະນຸຍາດດັ່ງກ່າວນີ້.

- ***ການນໍາເຂົ້າເຫລັກເພື່ອຮັບໃຊ້ໂຄງການ***

  ທ່ານຕ້ອງໄດ້ແຈ້ງແຜນການນໍາເຂົ້າປະຈໍາປີ ພ້ອມກັບເອກະສານອະນຸຍາດຈາກ ກະຊວງແຜນການ ແລະ ການລົງທຶນ ຕໍ່ກັບກົມການນໍາເຂົ້າ ແລະ ສົ່ງອອກ. ເພື່ອກວດເບິ່ງກະບວນການ ຂັ້ນຕອນໃນ ການຂໍໃບອະນຸຍາດດັ່ງກ່າວນີ້.

- ***ການນໍາເຂົ້າເພັດ***

  ໃນການນໍາເຂົ້າ ຫຼື ສົ່ງອອກເພັດ ຕ້ອງໄດ້ແຈ້ງເອກະສານອ້າງອີງທີ່ສາມາດພິສູດໄດ້ແຫລ່ງທີ່ມາຂອງເພັດ ຕໍ່ກັບກົມການນໍາເຂົ້າ ແລະ ສົ່ງອອກ. ເອກະສານເຫລົ່ານີ້ໄດ້ລະບຸໄວ້ໃນ*ແຈ້ງການເລກທີ. 588/ກຄ.ກປທ.*

- ***ການນໍາເຂົ້າ ຫຼື ການສົ່ງອອກຜະລິດຕະພັນໄມ້***

  ໃນການສະເໜີຂໍໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທີ່ນອນຢູ່ໃນບັນຊີແບບບໍ່ອັດຕະໂນມັດ (ເອກະສານ *ແຈ້ງການເລກທີ 0076/ອຄກ.ຂອ*) ຜູ້ສົ່ງອອກຕ້ອງໄດ້ແຈ້ງເອກະສານຕ່າງໆເຊັ່ນ ສັນຍາຊື້ຂາຍໄມ້ ບັນຊີໄມ້ (log list) ໃບຮັບເງິນຄ່າພັນທະໄມ້.

  ໃນການສະເໜີຂໍໃບອະນຸຍາດສົ່ງອອກຜະລິດຕະພັນໄມ້ທີ່ນອນຢູ່ໃນບັນຊີແບບອັດຕະໂນມັດ (ເອກະສານ *ແຈ້ງການເລກທີ 0076/ອຄກ.ຂອ*) ຜູ້ສົ່ງອອກຕ້ອງໄດ້ແຈ້ງເອກະສານຕ່າງໆເຊັ່ນ ສັນຍາຊື້ຂາຍໄມ້ ໜັງສືຢັ້ງຢືນແຫ່ງທີ່ມາຂອງໄມ້ ຈາກກະຊວງກະສິກໍາແລະປ່າໄມ້ ບັນຊີໄມ້ (log list) ແລະໃບຕິດຕາມຕີກາປ່ອຍໄມ້.

  ໃນການສະເໜີຂໍໃບອະນຸຍາດນໍາເຂົ້າຜະລິດຕະພັນໄມ້ທີ່ນອນຢູ່ໃນບັນຊີແບບອັດຕະໂນມັດ (ເອກະສານ *ແຈ້ງການເລກທີ 0076/ອຄກ.ຂອ*)
  ຜູ້ນໍາເຂົ້າຕ້ອງໄດ້ແຈ້ງເອກະສານອະນຸຍາດສົ່ງອອກຈາກປະເທດສົ່ງອອກ ເອກະສານຢັ້ງຢືນແຫລ່ງກໍາເນີດສິນຄ້າ ໃບສະເໜີລາຄາ ແລະ/ຫຼື ສັນຍາຊື້ຂາຍ ພ້ອມທັງລາຍການສິນຄ້າ.

- ***ການນໍາເຂົ້າຍານພາຫານະເຫີງບິກ ສໍາລັບຮັບໃຊ້ໂຄງການ***

ຜູ້ນໍາເຂົ້າຕ້ອງໄດ້ແຈ້ງໃບສະເໜີລາຄາສໍາລັບຍານພາຫານະທີ່ຈະນໍາເຂົ້າ ແລະ ໜັງສືອະນຸຍາດຈາກກະຊວງແຜນການ ແລະ ການລົງທຶນ ຕໍ່ກັບກົມການນໍາເຂົ້າ ແລະ ສົ່ງອອ. ເພື່ອກວດກາເບິ່ງກະບວນການຂັ້ນຕອນໃນການຂໍໜັງສືດັ່ງກ່າວນີ້.

- ***ການນໍາເຂົ້າຜະລິດຕະພັນນໍ້າມັນເຊື້ອໄຟ ສໍາລັບຮັບໃຊ້ໂຄງການ***

ຜູ້ນໍາເຂົ້າຕ້ອງໄດ້ຍື່ນເອກະສານທີ່ໄດ້ຮັບອະນຸຍາດໃຫ້ນໍາເຂົ້າຈາກກະຊວງແຜນການ ແລະ ການລົງທຶນ ໃຫ້ແກ່ກົມການນໍາເຂົ້າ ແລະ ສົ່ງອອກ. ເພື່ອກວດເບິ່ງຂັ້ນຕອນດັ່ງກ່າວ. ຜູ້ນໍາເຂົ້າຍັງຕ້ອງໄດ້ຍື່ນປື້ມຕິດຕາມການນໍາເຂົ້າແຕ່ລະຄັ້ງ ຫຼື ໃບຢັ້ງຢືນຈາກເຈົ້າໜ້າທີ່ດ່ານ ເພື່ອປຽບທຽບການນໍາເຂົ້າຕົວຈິງກັບແຜນການນໍາເຂົ້າ. ໃນກໍລະນີຂອງການນໍາເຂົ້າ ເພື່ອຮັບໃຊ້ໂຄງການແມ່ນ ບໍ່ຈໍາເປັນຕ້ອງຍື່ນໃບແຈ້ງເສຍອາກອນ.

- ***ການນໍາເຂົ້າຜະລິດຕະພັນອາຍກາສເພື່ອຮັບໃຊ້ໂຄງການ***

ຜູ້ນໍາເຂົ້າຕ້ອງໄດ້ຍື່ນເອກະສານອະນຸມັດທີ່ອອກໂດຍກະຊວງແຜນການແລະການລົງທຶນໃຫ້ກັບກົມການນໍາເຂົ້າ ແລະ ສົ່ງອອກ. ເພື່ອກວດເບິ່ງຂັ້ນຕອນການຍື່ນເອກະສານດັ່ງກ່າວ. ຜູ້ນໍາເຂົ້າຍັງຕ້ອງໄດ້ຍື່ນປື້ມຕິດຕາມການນໍາເຂົ້າແຕ່ລະຄັ້ງ ຫຼື ໃບຢັ້ງຢືນຈາກເຈົ້າໜ້າທີ່ດ່ານ ເພື່ອປຽບທຽບການນໍາເຂົ້າຕົວຈິງກັບແຜນການນໍາເຂົ້າ. ໃນກໍລະນີຂອງການນໍາເຂົ້າເພື່ອຮັບໃຊ້ໂຄງການແມ່ນບໍ່ຈໍາເປັນຕ້ອງຍື່ນໃບແຈ້ງເສຍອາກອນ.

## Note 3

ຊື້ແບບຟອມການນໍາເຂົ້າໄດ້ທີ່ພະແນກການເງິນ ໃນລາຄາ 10,000 ກີບ ຈາກກະຊວງອຸດສາຫະກໍາ ແລະ ການຄ້າ.

## Note 4

ຮູບແບບຂອງໃບອະນຸຍາດນໍາເຂົ້າອາດຈະແຕກຕ່າງກັນໄປຕາມປະເພດຂອງຜະລິດຕະພັນ.

## Note 5

ຜູ້ນໍາເຂົ້າ ແລະ ສົ່ງອອກສາມາດດໍາເນີນການຕາມຂະບວນການປົກກະຕິໃນການຂໍອະນຸຍາດນໍາເຂົ້າ ແລະ ສົ່ງອອກປົກກະຕິ.

ເພື່ອນກວດເບິ່ງຂັ້ນຕອນການນໍາເຂົ້າຢູ່ດ່ານທ່ານາແລ້ວ ຫຼື ສໍາລັບຂັ້ນຕອນການນໍາ ເຂົ້າທົ່ວໄປຢູ່ຕາມດ່ານຕ່າງໆ.

ເພື່ອນກວດເບິ່ງຂັ້ນຕອນການສົ່ງອອກຢູ່ດ່ານທ່ານາແລ້ວ ຫຼື ສໍາລັບຂັ້ນຕອນການສົ່ງອອກ ທົ່ວໄປຢູ່ຕາມດ່ານຕ່າງໆ.

## ການແຈ້ງພາສີສໍາລັບການນໍາເຂົ້າ (ທົ່ວໄປ)

ໂດຍທົ່ວໄປແລ້ວ ລະບຽບການນີ້ນໍາໃຊ້ກັບສິນຄ້າທຸກປະເພດທີ່ນໍາເຂົ້າມາໃນປະເທດລາວສໍາລັບການບໍລິໂພກພາຍໃນປະເທດ ພາຍໃຕ້ລະບອບພາສີ **IM4.**

ແນວໃດກໍ່ຕາມ, ສິນຄ້າປະເພດຕ່າງກັນອາດຈະຕ້ອງການເອກະສານສະໜັບສະໜູນແຕກຕ່າງກັນເພື່ອສົ່ງໃຫ້ດ່ານພາສີພ້ອມກັບໃບແຈ້ງພາສີນໍາເຂົ້າ. ກະລຸນາ ກວດເບິ່ງເວັບໄຊນີ້ ຫຼື ປຶກສາກັບໜ່ວຍງານທີ່ກ່ຽວຂ້ອງ ຖ້າທ່ານມີຂໍ້ສົງໃສກ່ຽວກັບວ່າມັນຈໍາເປັນຕ້ອງມີໃບອະນຸຍາດ ຫຼື ໃບອະນຸມັດສະເພາະໃດໜຶ່ງຫຼືບໍ່.

ໃນປະຈຸບັນ ລະບຽບການນີ້ກໍາລັງນໍາໃຊ້ຢູ່ທຸກດ່ານຊາຍແດນ ຍົກເວັ້ນດ່ານທ່ານາແລ້ງ ບ່ອນທີ່ກໍາລັງນໍາໃຊ້ລະບົບຄຸ້ມຄອງພາສີແບບອັດຕະໂນມັດ *Asycuda* . ເພື່ອເບິ່ງລະບຽບການສໍາລັບການຊໍາລະພາສີສິນຄ້າຢູ່ທ່ານາແລ້ງ.


ຍື່ນເອກະສານຂົນສົ່ງໃຫ້ ກັບດ່ານພາສີຢູ່ຊາຍແດນ
Note 1
ຜູ້ຄ້າຍື່ນແລະເຊັນໃບແຈ້ງ
Note 3
Note 2
ເອກະສານການຂົນສົ່ງ
ຜູ້ຄ້າຍື່ນໃບແຈ້ງໃຫ້ແກ່ເຈົ້າໜ້າ ທີ່ພາສີ
ໃບແຈ້ງພາສີ (Form ACDD)
ອິນວອຍສ ຫຼື ສັນຍາຊື້ຂາຍ
Certificate of Origin
Packing List
ເຈົ້າໜ້າທີ່ພາສີກວດ ເອກະສານ
Note 4
ໃບອະນຸຍາດ ນຳເຂົ້າ
Note 6
ຊຳລະພາສີ
ໃບອະນຸຍາດ ອື່ນໆ
Note 5
ແກ້ໄຂໃບແຈ້ງ ຫຼື ກ້າວຕໍ່ໄປ
ຫາກ ບໍ່ຖືກຕ້ອງ
ເຈົ້າໜ້າທີ່ພາສີກວດສິນຄ້າ
ກໍລະນີ ບໍ່ປົກກະຕິ
ຫາກ ແກ້ໄຂ
ຫາກ ຖືກຕ້ອງ
ກ້າວຕໍ່ໄປ
ເຈົ້າໜ້າທີ່ພາສີອອກໃບອະນຸ ຍາດປ່ອຍສິນຄ້າ
ປ່ອຍສິນຄ້າ

Note 1

ເອກະສານການຂົນສົ່ງຕ້ອງໄດ້ສົ່ງໃຫ້ດ່ານພາສີພາຍໃນ 24 ຊົ່ວໂມງນັບຈາກສິນຄ້າມາຮອດຊາຍແດນ.

Note 2

ເອກະສານການຂົນສົ່ງແມ່ນເອກະສານທາງການຄ້າທີ່ໃຫ້ລາຍລະອຽດກ່ຽວກັບເຄື່ອງຂອງທີ່ບັນຈຸຢູ່ໃນຍານຍົນ ຫຼື ພາຫະນະທີ່ຂົນສົ່ງສິນຄ້າ ແລະ ມາຮອດດ່ານຊາຍແດນ. ສິ່ງເຫຼົ່ານີ້ສາມາດເປັນໃບລາຍການສິນຄ້າ (ໃນກໍລະນີການຂົນສົ່ງທາງອາກາດ), ໃບແຈ້ງການຂົນສົ່ງ, ລາຍການບັນທຸກ ຫຼື ລາຍການຫຸ້ມຫໍ່ ຫຼື ສໍາເນົາຂອງໃບແຈ້ງການສົ່ງອອກ ໃນກໍລະນີຂອງພາຫະນະທາງບົກ.

Note 3

ໃບແຈ້ງພາສີນໍາເຂົ້າຕ້ອງໄດ້ສົ່ງພາຍໃນ 15 ວັນນັບຈາກວັນທີຍື່ນເອກະສານການຂົນສົ່ງ.

ໃບແຈ້ງພາສີຕ້ອງໄດ້ຍື່ແຈ້ງ ໂດຍນໍາໃຊ້ *ແບບຟອມ ACDD*. ແບບຟອມ ACDD ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງສາມາດຂໍເອົາຈາກຫ້ອງການພາສີຢູ່ດ່ານຊາຍແດນ.

Note 4

ໃບອະນຸຍາດນໍາເຂົ້າແມ່ນອອກໃຫ້ໂດຍ *ກົມນໍາເຂົ້າ ແລະ ສົ່ງອອກ* ຂອງ *ກະຊວງອຸດສາຫະກໍາ ແລະ ການຄ້າ* ສໍາລັບສິນຄ້າທີ່ຈໍາເປັນຕ້ອງມີໃບອະນຸຍາດ. ເພື່ອເບິ່ງລະບຽບການສໍາລັບການຂໍເອົາໃບອະນຸຍາດນໍາເຂົ້າ.

Note 5

ຖ້າການຜິດລະບຽບນໍາໄປສູ່ການແກ້ໄຂໃບແຈ້ງພາສີ ຊາວຄ້າຂາຍອາດຈະດໍາເນີນຂະບວນການຊໍາລະພາສີ. ຖ້າການຜິດລະບຽບຖືກຖືວ່າປະກອບເປັນຄວາມຜິດທີ່ຮ້າຍແຮງ, ດ່ານພາສີອາດຈະຕັດສິນດໍາເນີນການບັງຄັບໃຊ້ກົດໝາຍຢ່າງເໝາະສົມ.

Note 6

ໃນປະຈຸບັນ ການຊໍາລະພາສີພຽງແຕ່ຊໍາລະເປັນເງິນສົດເທົ່ານັ້ນ.

## ການແຈ້ງພາສີສໍາລັບການນໍາເຂົ້າ (Asycuda)

ໃນປະຈຸບັນລະບຽບການນີ້ກໍາລັງນໍາໃຊ້ພຽງແຕ່ຢູ່ດ່ານຊາຍແດນທ່ານາແລ້ງບ່ອນທີ່ມີການຕິດຕັ້ງລະບົບຄຸ້ມຄອງພາສີແບບອັດຕະໂນມັດ/ລະບົບການຄຸ້ມຄອງທາງພາສີຮູບແບບໃໝ່*Asycuda*. ໃນອະນາຄົດ, ລະບົບ Asycudaຈະຖືກຂະຫຍາຍການໃຊ້ໄປສູ່ດ່ານຊາຍແດນອື່ນໆໃນທົ່ວປະເທດ. ຈົນກວ່າຮອດເວລານັ້ນ, ຢູ່ດ່ານຊາຍແດນເຫຼົ່ານີ້ ຈະນໍາໃຊ້*ລະບຽບການນໍາເຂົ້າທົ່ວໄປ*.

ໂດຍທົ່ວໄປແລ້ວລະບຽບການນີ້ນໍາໃຊ້ກັບທຸກປະເພດສິນຄ້າທີ່ນໍາເຂົ້າມາໃນປະເທດລາວສໍາລັບການບໍລິໂພກພາຍໃນປະເທດ ພາຍໃຕ້ລະບອບພາສີ *IM4* .

ແນວໃດກໍ່ຕາມ, ສິນຄ້າປະເພດຕ່າງໆກັນອາດຈະຕ້ອງການເອກະສານສະໜັບສະໜູນແຕກຕ່າງກັນເພື່ອສົ່ງໃຫ້ດ່ານພາສີພ້ອມກັບໃບແຈ້ງການນໍາເຂົ້າ. ກະລຸນາກວດເບິ່ງເວັບໄຊນີ້ ຫຼື ປຶກສາກັບໜ່ວຍງານທີ່ກ່ຽວຂ້ອງຖ້າທ່ານມີຂໍ້ສົງໃສວ່າມັນຈໍາເປັນຕ້ອງມີໃບອະນຸຍາດ ຫຼືໃບອະນຸມັດສະເພາະໃດໜຶ່ງຫຼືບໍ່.


Note 1
Note 3
Note 2
(Form ACDD)
Note 4
Packing List
Certificate of Origin
Note 5
Note 6
Note 7

## Note 1

ເອກະສານການຂົນສົ່ງຕ້ອງໄດ້ສົ່ງໃຫ້ດ່ານພາສີພາຍໃນ 24 ຊົ່ວໂມງນັບຈາກສິນຄ້າມາຮອດຊາຍແດນ.

## Note 2

ເອກະສານການຂົນສົ່ງແມ່ນເອກະສານທາງການຄ້າທີ່ໃຫ້ລາຍລະອຽດກ່ຽວກັບເຄື່ອງຂອງທີ່ບັນຈຸຢູ່ໃນຍານຍົນ ຫຼືພາຫະນະທີ່ຂົນສົ່ງສິນຄ້າ ແລະ ມາຮອດດ່ານຊາຍແດນ. ສິ່ງເຫຼົ່ານີ້ສາມາດເປັນໃບລາຍການສິນຄ້າ (ໃນກໍລະນີການຂົນສົ່ງທາງອາກາດ), ໃບແຈ້ງການຂົນສົ່ງ, ລາຍການບັນທຸກຫຼື ລາຍການຫຸ້ມຫໍ່ ຫຼື ສຳເນົາຂອງໃບແຈ້ງການສົ່ງອອກໃນກໍລະນີຂອງພາຫະນະທາງບົກ.

## Note 3

ໃບແຈ້ງພາສີນຳເຂົ້າຕ້ອງໄດ້ສົ່ງພາຍໃນ 15 ວັນນັບຈາກວັນທີຍື່ນເອກະສານການຂົນສົ່ງ.

ສຳລັບສິນຄ້າທີ່ຊຳລະພາສີຢູ່ດ່ານຊາຍແດນທ່ານາແລ້ງ, ພໍ່ຄ້າແມ່ຄ້າຈຳເປັນຕ້ອງໄດ້ຕື່ມຂໍ້ມູນໃບແຈ້ງພາສີຢູ່ໂຕະຄອມພິວເຕີທີ່ສະໜອງໃຫ້ຢູ່ຫ້ອງການດ່ານພາສີ. ໃບແຈ້ງພາສີທີ່ຂຽນດ້ວຍມື ໂດຍນຳໃຊ້ *ຟອມ ACDD* ແມ່ນໃຊ້ບໍ່ໄດ້ອີກຕໍ່ໄປ.

## Note 4

ໃບອະນຸຍາດນຳເຂົ້າແມ່ນອອກໃຫ້ໂດຍ *ກົມນຳເຂົ້າ ແລະ ສົ່ງອອກ* ຂອງ *ກະຊວງອຸດສາຫະກຳ ແລະ ການຄ້າ* ສຳລັບສິນຄ້າທີ່ຈຳເປັນຕ້ອງມີໃບອະນຸຍາດ. ພື່ອເບິ່ງລະບຽບການສຳລັບການຂໍເອົາໃບອະນຸຍາດນຳເຂົ້າ.

## Note 5

ຜູ້ນຳເຂົ້າ ທີ່ໃບແຈ້ງສິນຄ້າ ໄດ້ຖືກເລືອກໃຫ້ໄປຕາມ '*ຊ່ອງສີຂຽວ*' ອາດດຳເນີນການແຈ້ງສິນຄ້າ ໂດຍບໍ່ມີການກວດສິນຄ້າ ແລະພາຍຫຼັງທີ່ການແຈ້ງໄດ້ສຳເລັດແລ້ວ, ສິນຄ້າຈະສາມາດສັນຈອນຢ່າງເປັນອິດສະລະ ພາຍໃນປະເທດ.

ຜູ້ນຳເຂົ້າທີ່ໃບແຈ້ງສິນຄ້າ ໄດ້ຖືກເລືອກໃຫ້ໄປຕາມ '*ຊ່ອງສີຟ້າ*' ອາດດຳເນີນການແຈ້ງສິນຄ້າ ໂດຍບໍ່ມີການກວດສິນຄ້າ ຊຶ່ງຄ້າຍຄືກັນກັບ '*ຊ່ອງສີຂຽວ*' ແຕ່ຈະມີການກວດສອບ ການດຳເນີນທຸລະກຳໃນການແຈ້ງສິນຄ້າ.

ຜູ້ນຳເຂົ້າທີ່ໃບແຈ້ງສິນຄ້າ ໄດ້ຖືກເລືອກໃຫ້ໄປຕາມ '*ຊ່ອງສີເຫຼືອງ*' ຈະໄດ້ມີການກວດເອກະສານ. ໂດຍອີງຕາມຜົນຂອງການກວດເອກະສານ, ຖ້າວ່າບໍ່ພົບເຫັນຄວາມຜິດປົກກະຕິ, ຜູ້ປະກອບການອາດດຳເນີນການແຈ້ງສິນຄ້າ. ແຕ່ຖ້າຫາກກວດພົບເຫັນຄວາມຜິດປົກກະຕິ, ຜູ້ດຳເນີນການອາດຈະຕ້ອງໄດ້ຜ່ານຂະບວນການກວດສອບສິນຄ້າ.

ຜູ້ນຳເຂົ້າທີ່ໃບແຈ້ງສິນຄ້າ ໄດ້ຖືກເລືອກໃຫ້ໄປຕາມ '*ຊ່ອງສີແດງ*' ຈະໄດ້ມີການກວດການສິນຄ້າ. ຖ້າວ່າ ບໍ່ພົບເຫັນຄວາມຜິດປົກກະຕິ, ຜູ້ປະກອບການອາດດຳເນີນການ ແຈ້ງສິນຄ້າ.ແຕ່ຖ້າຫາກກວດພົບເຫັນຄວາມຜິດປົກກະຕິ, ພາສີດ່ານອາດສັ່ງໃຫ້ຜູ້ປະກອບການ ຕ້ອງດັດແກ້ເອກະສານແຈ້ງສິນຄ້າກ່ອນທີ່ຈະດຳເນີນການແຈ້ງສິນຄ້າ.

## Note 6

ຖ້າມີການຜິດລະບຽບໃດໜຶ່ງທີ່ຖືວ່າເປັນເປັນຄວາມຜິດທີ່ຮ້າຍແຮງ, ດ່ານພາສີອາດຈະຕັດສິນດຳເນີນການບັງຄັບໃຊ້ກົດໝາຍຢ່າງເໝາະສົມ.

## Note 7

ໃນປະຈຸບັນການຊຳລະພາສີຢູ່ດ່ານທ່ານາແລ້ງອາດຈະເຮັດຢູ່ຫ້ອງການທະນາຄານທີ່ຕັ້ງຢູ່ດ່ານຊາຍແດນ ຫຼື ຊຳລະເປັນເງິນສົດກໍ່ໄດ້. ທະນາຄານຈະອອກໃບຮັບເງິນໃຫ້ເຊິ່ງຊາວຄ້າຂາຍຈະຍື່ນໃຫ້ດ່ານພາສີເບິ່ງກ່ອນທີ່ຈະອອກໃບຊຳລະພາສີໃຫ້.

## ການແຈ້ງພາສີສຳລັບການສົ່ງອອກ (ທົ່ວໄປ)

ໂດຍທົ່ວໄປແລ້ວ ລະບຽບການນີ້ນຳໃຊ້ກັບສິນຄ້າທຸກປະເພດທີ່ສົ່ງອອກຈາກປະເທດລາວ ພາຍໃຕ້ລະບອບພາສີ EX1.

ແນວໃດກໍ່ຕາມ, ສິນຄ້າປະເພດຕ່າງກັນອາດຈະຕ້ອງການເອກະສານສະໜັບສະໜູນແຕກຕ່າງກັນເພື່ອສົ່ງໃຫ້ດ່ານພາສີພ້ອມກັບໃບແຈ້ງພາສີ. ກະລຸນາ ກວດເບິ່ງເວັບໄຊນີ້ ຫຼື ປຶກສາກັບໜ່ວຍງານທີ່ກ່ຽວຂ້ອງ ຖ້າທ່ານມີຂໍ້ສົງໃສກ່ຽວກັບວ່າມັນຈຳເປັນຕ້ອງມີໃບອະນຸຍາດ ຫຼື ໃບອະນຸມັດສະເພາະໃດໜຶ່ງຫຼືບໍ່.

ໃນປະຈຸບັນ ລະບຽບການນີ້ກຳລັງນຳໃຊ້ຢູ່ທຸກດ່ານຊາຍແດນ ຍົກເວັ້ນດ່ານທ່ານາແລ້ງ ບ່ອນທີ່ກຳລັງນຳໃຊ້ລະບົບຄຸ້ມຄອງພາສີແບບອັດຕະໂນມັດ *Asycuda* . ເພື່ອເບິ່ງລະບຽບການສຳລັບການຊຳລະພາສີສິນຄ້າຢູ່ທ່ານາແລ້ງ.


Note 1
Note 3
Note 2
Certificate of Origin
Packing List
Note 7

## Note 1

ເອກະສານການຂົນສົ່ງຕ້ອງໄດ້ສົ່ງໃຫ້ດ່ານພາສີພາຍໃນ 24 ຊົ່ວໂມງນັບຈາກສິນຄ້າມາຮອດຊາຍແດນ.

## Note 2

ເອກະສານການຂົນສົ່ງແມ່ນເອກະສານທາງການຄ້າທີ່ໃຫ້ລາຍລະອຽດກ່ຽວກັບເຄື່ອງຂອງທີ່ບັນຈຸຢູ່ໃນຍານຍົນ ຫຼື ພາຫະນະທີ່ຂົນສົ່ງສິນຄ້າ ແລະ ມາຮອດດ່ານຊາຍແດນ. ສິ່ງເຫຼົ່ານີ້ສາມາດເປັນໃບລາຍການສິນຄ້າ (ໃນກໍລະນີການຂົນສົ່ງທາງອາກາດ), ໃບແຈ້ງການຂົນສົ່ງ, ລາຍການບັນທຸກ ຫຼື ລາຍການຫຸ້ມຫໍ່ ຫຼື ສໍາເນົາຂອງໃບແຈ້ງການສົ່ງອອກ ໃນກໍລະນີຂອງພາຫະນະທາງບົກ.

## Note 3

ໃບແຈ້ງພາສີນໍາເຂົ້າຕ້ອງໄດ້ສົ່ງພາຍໃນ 15 ວັນນັບຈາກວັນທີຍື່ນເອກະສານການຂົນສົ່ງ.

ໃບແຈ້ງພາສີຕ້ອງໄດ້ຍື່ແຈ້ງ ໂດຍນໍາໃຊ້ *ແບບຟອມ ACDD*. ແບບຟອມ ACDD ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງສາມາດຂໍເອົາຈາກຫ້ອງການພາສີຢູ່ດ່ານຊາຍແດນ.

## Note 4

*ໃບຢັ້ງຢືນແຫຼ່ງກໍາເນີດ (Certificates of Origin)* ສໍາລັບບັນດາປະເທດທີ່ ສປປລາວ ມີອັດຕາພາສີພິເສດ (ເຊັ່ນວ່າ ASEAN) ຈະຕອ້ງໄດ້ຮັບຈາກ*ພະແນກ C.O (Certificate of Origin Division) ກົມການນໍາເຂົ້າ ແລະ ສົ່ງອອກ*, *ກະຊວງອຸດສາຫະກໍາ ແລະການຄ້າ*.

*ສະພາການຄ້າ ແລະອຸດສາຫະກໍາລາວ* ມີໜ້າທີ່ອອກ *ໃບຢັ້ງຢືນແຫຼ່ງກໍາເນີດ (Certificates of Origin)* ສໍາຫຼັບສິນຄ້າທີ່ຈະສົ່ງອອກໄປປະເທດອື່ນໆທັ້ງໝົດ.

## Note 5

ໃບອະນຸຍາດສົ່ງອອກແມ່ນອອກໂດຍ *ກົມການນໍາເຂົ້າ ແລະສົ່ງອອກ ກະຊວງອຸດສາຫະກໍາແລະການຄ້າ* ສໍາລັບ ລາຍການສິນຄ້າຕ້ອງໄດ້ຮັບໃບອະນຸຍາດກ່ອນ. ເພື່ອກວດເບິ່ງຂະບວນການ ແລະ ຂັ້ນຕອນໃນການຂໍໃບອະນຸຍາດສົ່ງອອກ.

## Note 6

ໃນກໍລະນີທີ່ບໍ່ປົກກະຕິ ສໍາລັບການແກ້ໄຂໃບແຈ້ງ ຜູ້ສົ່ງອອກອາດສືບຕໍ່ຂັ້ນຕອນການແຈ້ງໄດ້. ແຕ່ຫາກ ເຫດທີ່ບໍ່ປົກກະຕິນັ້ນໄດ້ຮັບການພິຈາລະນາວ່າອາດຈະກໍໃຫ້ເກີດຜົນເສຍຫາຍຮ້າຍແຮງໄດ້, ເຈົ້າໜ້າທີ່ພາສີອາດຕັດສິນໃຈ ປະຕິບັດຢ່າງໃດຢ່າງໜຶ່ງຕາມຄວາມເໝາະສົມ.

## Note 7

ການສົ່ງອອກສ່ວນໃຫຍ່ແລ້ວບໍ່ຈຳເປັນເສັຍພາສີ. ຫາກແຕ່ວ່າ, ສຳລັບສິນຄ້າບາງປະເພດກໍຕ້ອງໄດ້ເສຍພາສີຂາອອກຢູ່. ກະລຸນາ ເພື່ອກວດເບິ່ງວ່າສິນຄ້າໃດແດ່ທີ່ຕົກຢູ່ໃນຈຳພວກທີ່ຕ້ອງໄດ້ເສຍພາສີຂາອອກ. ນອກຈາກນີ້ ອາດຈະໄດ້ເສຍອາກອນ ຫຼືພັນທະອື່ນໆກໍເປັນໄດ້. ໃນປັດຈຸບັນ ການຈ່າຍພາສີຢູ່ທ່ານາແລ້ງສາມາດຈ່າຍໄດ້ທັງຢູ່ ທະນາຄານທີ່ຢູ່ກັບດ່ານ ຫຼືວ່າຈ່າຍເປັນເງິນສົດກໍໄດ້. ທະນາຄານຈະອອກໃບຮັບເງິນເຊິ່ງຜູ້ສົ່ງອອກຈະຕ້ອງ ໄດ້ແຈ້ງຕໍ່ເຈົ້າໜ້າທີ່ພາສີກ່ອນສິນຄ້າຈະຖືກປ່ອຍອອກໄດ້.

**ການແຈ້ງພາສີສຳລັບການສົ່ງອອກ (Asycuda)**

ໃນປະຈຸບັນ ລະບຽບການນີ້ກຳລັງນຳໃຊ້ຢູ່ທຸກດ່ານຊາຍແດນ ຍົກເວັ້ນດ່ານທ່ານາແລ້ງ ບ່ອນທີ່ກຳລັງນຳໃຊ້ລະບົບຄຸ້ມຄອງພາສີແບບອັດຕະໂນມັດ ***Asycuda*** **.** ໃນອະນາຄົດ, ລະບົບ Asycudaຈະໄດ້ຖືກນຳໃຊ້ຢູ່ດ່ານ ອື່ນໆ ໃນຂອບເຂດທົ່ວປະເທດ. ຈົນກວ່າເວລານັ້ນຈະມາເຖິງ, ຢູ່ຕາມແຕ່ລະດ່ານກໍຍັງຈະໄດ້ສືບ ຕໍ່ປະຕິບັດຕາມ *ຂະບວນການສົ່ງອອກທົ່ວໆໄປ* ຢູ່.

ໂດຍທົ່ວໄປແລ້ວ ລະບຽບການນີ້ນຳໃຊ້ກັບສິນຄ້າທຸກປະເພດທີ່ສົ່ງອອກຈາກປະເທດລາວ ພາຍໃຕ້ລະບອບພາສີ **EX1.**

ແນວໃດກໍ່ຕາມ, ສິນຄ້າປະເພດຕ່າງໆກັນອາດຈະຕ້ອງການເອກະສານສະໜັບສະໜູນແຕກຕ່າງກັນເພື່ອສົ່ງໃຫ້ດ່ານພາສີພ້ອມກັບໃບແຈ້ງພາສີ. ກະລຸນາ ກວດເບິ່ງເວັບໄຊນີ້ ຫຼື ປຶກສາກັບໜ່ວຍງານທີ່ກ່ຽວຂ້ອງ ຖ້າທ່ານມີຂໍ້ສົງໃສກ່ຽວກັບວ່າມັນຈຳເປັນຕ້ອງມີໃບອະນຸຍາດ ຫຼື ໃບອະນຸມັດສະເພາະໃດໜຶ່ງຫຼືບໍ່.


Note 1
Note 2
Note 3
Note 4
Note 5
Note 6
Note 7
Note 8
Certificate of Origin
Packing List

## Note 1

ເອກະສານການຂົນສົ່ງຕ້ອງໄດ້ສົ່ງໃຫ້ດ່ານພາສີພາຍໃນ 24 ຊົ່ວໂມງນັບຈາກສິນຄ້າມາຮອດຊາຍແດນ.

## Note 2

ເອກະສານການຂົນສົ່ງແມ່ນເອກະສານທາງການຄ້າທີ່ໃຫ້ລາຍລະອຽດກ່ຽວກັບເຄື່ອງຂອງທີ່ບັນຈຸຢູ່ໃນຍານຍົນ ຫຼື ພາຫະນະທີ່ຂົນສົ່ງສິນຄ້າ ແລະ ມາຮອດດ່ານຊາຍແດນ. ສິ່ງເຫຼົ່ານີ້ສາມາດເປັນໃບລາຍການສິນຄ້າ (ໃນກໍລະນີການຂົນສົ່ງທາງອາກາດ), ໃບແຈ້ງການຂົນສົ່ງ, ລາຍການບັນທຸກ ຫຼື ລາຍການຫຸ້ມຫໍ່ ຫຼື ສຳເນົາຂອງໃບແຈ້ງການສົ່ງອອກ ໃນກໍລະນີຂອງພາຫະນະທາງບົກ.

## Note 3

ໃບແຈ້ງພາສີນຳເຂົ້າຕ້ອງໄດ້ສົ່ງພາຍໃນ 15 ວັນນັບຈາກວັນທີຍື່ນເອກະສານການຂົນສົ່ງ.

ໃບແຈ້ງພາສີຕ້ອງໄດ້ຍື່ແຈ້ງ ໂດຍນຳໃຊ້ *ແບບຟອມ ACDD*. ແບບຟອມ ACDD ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ ສາມາດຂໍເອົາຈາກຫ້ອງການພາສີຢູ່ດ່ານຊາຍແດນ.

## Note 4

*ໃບຢັ້ງຢືນແຫຼ່ງກຳເນີດ (Certificates of Origin)* ສຳລັບບັນດາປະເທດທີ່ ສປປລາວ ມີອັດຕາພາສີພິເສດ (ເຊັ່ນວ່າ ASEAN) ຈະຕອ້ງໄດ້ຮັບຈາກ*ພະແນກ C.O (Certificate of Origin Division) ກົມການນຳເຂົ້າ ແລະສົ່ງອອກ*, *ກະຊວງອຸດສາຫະກຳ ແລະການຄ້າ*.

*ສະພາການຄ້າ ແລະອຸດສາຫະກຳລາວ* ມີໜ້າທີ່ອອກ *ໃບຢັ້ງຢືນແຫຼ່ງກຳເນີດ (Certificates of Origin)* ສຳຫຼັບສິນຄ້າທີ່ຈະສົ່ງອອກໄປປະເທດອື່ນໆທັ້ງໝົດ.

## Note 5

ໃບອະນຸຍາດສົ່ງອອກແມ່ນອອກໂດຍ *ກົມການນຳເຂົ້າ ແລະສົ່ງອອກ ກະຊວງອຸດສາຫະກຳແລະການຄ້າ* ສຳລັບລາຍການສິນຄ້າຕ້ອງໄດ້ຮັບໃບອະນຸຍາດກ່ອນ. _ ເພື່ອກວດເບິ່ງຂະບວນການ ແລະຂັ້ນຕອນໃນການຂໍໃບອະນຸຍາດສົ່ງອອກ.

## Note 6

ຜູ້ສົ່ງອອກ ທີ່ໃບແຈ້ງສິນຄ້າ ໄດ້ຖືກເລືອກໃຫ້ໄປຕາມ '*ຊ່ອງສີຂຽວ*' ອາດດຳເນີນການແຈ້ງສິນຄ້າ ໂດຍບໍ່ມີການກວດສິນຄ້າ ແລະພາຍຫຼັງທີ່ການແຈ້ງໄດ້ສຳເລັດແລ້ວ, ສິນຄ້າຈະສາມາດອອກຈາກປະເທດຢ່າງອິດສະລະ.

ຜູ້ສົ່ງອອກ ທີ່ໃບແຈ້ງສິນຄ້າ ໄດ້ຖືກເລືອກໃຫ້ໄປຕາມ '*ຊ່ອງສີເຫຼືອງ*' ຈະໄດ້ມີການກວດເອກະສານ. ໂດຍອີງຕາມຜົນຂອງການກວດເອກະສານ, ຖ້າວ່າບໍ່ພົບເຫັນຄວາມຜິດປົກກະຕິ, ຜູ້ປະກອບການອາດດໍາເນີນການແຈ້ງສິນຄ້າ. ແຕ່ຖ້າຫາກກວດພົບເຫັນຄວາມຜິດປົກກະຕິ, ຜູ້ດໍາເນີນການອາດຈະຕ້ອງໄດ້ຜ່ານຂະບວນການກວດສອບສິນຄ້າ.

ຜູ້ສົ່ງອອກ ທີ່ໃບແຈ້ງສິນຄ້າ ໄດ້ຖືກເລືອກໃຫ້ໄປຕາມ '*ຊ່ອງສີຟ້າ*' ຈະໄດ້ມີການກວດການສິນຄ້າ.

ຜູ້ສົ່ງອອກ ທີ່ໃບແຈ້ງສິນຄ້າ ໄດ້ຖືກເລືອກໃຫ້ໄປຕາມ '*ຊ່ອງສີແດງ*' ຈະໄດ້ມີການກວດການສິນຄ້າເຊັ່ນກັນ.

ສໍາລັບຜູ້ສົ່ງອອກທີ່ໄດ້ຖືກເລືອກໃຫ້ໄປຕາມ'*ຊ່ອງສີແດງ*' ຫຼື '*ຊ່ອງສີຟ້າ*'
ອາດຈະສະເໜີໃຫ້ເຈົ້າໜ້າທີ່ພາສີໄປກວດຢູ່ສະຖານທີ່ຂອງຜູ້ສົ່ງອອກກໍໄດ້ ພາຍຫຼັງຈາກການກວດກາແລ້ວ ຫາກວ່າບໍ່ພົບເຫັນສິ່ງຜິດປົກກະຕິ ເຈົ້າໜ້າທີ່ພາສີກໍຈະປິດລົດບັນທຸກ ແລ້ວສິນຄ້າກໍຈະຕ້ອງອອກຖືກສົ່ງອອກ. ຫາກພົບສິ່ງຜິດປົກກະຕິ ເຈົ້າໜ້າທີ່ພາສີອາດຈະແນະນໍາໃຫ້ແກ້ໄຂເອກະສານການແຈ້ງກ່ອນທີ່ຈະສາມາດແຈ້ງຕໍ່ໄປ.

## Note 7

ໃນກໍລະນີທີ່ບໍ່ປົກກະຕິ ສໍາລັບການແກ້ໄຂໃບແຈ້ງ ຜູ້ສົ່ງອອກອາດສືບຕໍ່ຂັ້ນຕອນການແຈ້ງໄດ້. ແຕ່ຫາກເຫດທີ່ບໍ່ປົກກະຕິນັ້ນ ໄດ້ຮັບການພິຈາລະນາວ່າອາດຈະກໍໃຫ້ເກີດຜົນເສຍຫາຍຮ້າຍແຮງໄດ້, ເຈົ້າໜ້າທີ່ພາສີອາດຕັດສິນໃຈປະຕິບັດຢ່າງໃດຢ່າງໜຶ່ງຕາມຄວາມເໝາະສົມ.

## Note 8

ການສົ່ງອອກສ່ວນໃຫຍ່ແລ້ວບໍ່ຈໍາເປັນເສັຍພາສີ. ຫາກແຕ່ວ່າ, ສໍາລັບສິນຄ້າບາງປະເພດກໍຕ້ອງໄດ້ເສຍພາສີຂາອອກຢູ່. ກະລຸນາ ເພື່ອກວດເບິ່ງວ່າສິນຄ້າໃດແດ່ທີ່ຕົກຢູ່ໃນຈໍາພວກທີ່ຕ້ອງໄດ້ເສຍພາສີຂາອອກ. ນອກຈາກນີ້ ອາດຈະ ໄດ້ເສຍອາກອນ ຫຼືພັນທະອື່ນໆກໍເປັນໄດ້. ໃນປັດຈຸບັນ ການຈ່າຍພາສີຢູ່ທ່ານາແລ້ງສາມາດຈ່າຍໄດ້ທັງຢູ່ ທະນາຄານທີ່ຢູ່ກັບດ່ານ ຫຼືວ່າຈ່າຍເປັນເງິນສົດກໍໄດ້. ທະນາຄານຈະອອກໃບຮັບເງິນເຊິ່ງຜູ້ສົ່ງອອກຈະຕ້ອງ ໄດ້ແຈ້ງຕໍ່ເຈົ້າໜ້າທີ່ພາສີກ່ອນສິນຄ້າຈະຖືກປ່ອຍອອກໄດ້.

**ຜ່ານແດນ**

ຫາກທ່ານຕ້ອງການເຄື່ອນຍ້າຍສິນຄ້າໂດຍຜ່ານແດນລາວກະລຸນາກວດເບິ່ງຂັ້ນຕອນ ແລະຂະບວນການດັ່ງນີ້. ຫ້າມ ນຳສິນຄ້າ ເຂົ້າມາຈໍລະຈອນຢູ່ໃນຕະຫຼາດພາຍໃນສປປລາວ ເດັດຂາດ. ສິນຄ້າຜ່ານແດນແມ່ນດຳເນີນໄປຕາມ ລະບອບພາສີ IM8

ຈະບໍ່ມີການເກັບພາສີສຳລັບສິນຄ້າຜ່ານແດນ ແຕ່ວ່າເຈົ້າຂອງສິນຄ້າ ກໍຄືຜູ້ແຈ້ງຕ້ອງໄດ້ກະກຽມສິ່ງ ຄ້ຳປະກັນເຊິ່ງ ອາດຈະແມ່ນ ແຊັກ ຫຼືວ່າເອກະສານຄ້ຳປະກັນຈາກທະນາຄານທີ່ມູນຄ່າເທົ່າກັບມູນຄ່າພາສີບວກກັບຄ່າທຳນຽມອື່ນໆ.


ສິນຄ້າມາຮອດຊາຍແດນ
ຍື່ນເອກະສານແຈ້ງພາສີຂາເຂົ້າພາຍໃຕ້ລະບອບ IM8
Note 1
Note 2
ແຈ້ງພາສີຂາເຂົ້າ (IM8)
ເອກະສານສະໜັບສະໜູນອື່ນໆ
ເອກະສານຄ້ຳປະກັນທະນາຄານ (Bank Guarantee)
ເຈົ້າໜ້າທີ່ອະນຸຍາດຜ່ານແດນ
Note 3
ການເຄື່ອນຍ້າຍສິນຄ້າຕາມເສັ້ນທາງທີ່ໄດ້ລະບຸໄວ້
ສິນຄ້າໄປຮອດຊາຍແດນ
Note 4
ແຈ້ງເອກະສານຜ່ານແດນຕໍ່ເຈົ້າໜ້າທີ່ພາສີ
Note 5
ເອກະສານຜ່ານແດນ
ເອກະສານສະໜັບສະໜູນອື່ນໆ
ເຈົ້າໜ້າທີ່ພາສີກວດເອກະສານ ແລະປ່ອຍສິນຄ້າ

## Note 1

ກ່ອນທີ່ສິນຄ້າຈະມາຮອດຊາຍແດນຂາເຂົ້າຂອງລາວ ຜູ້ຄ້າຕ້ອງຍື່ນໃບແຈ້ງພາສີ (*ແບບຟອມ ACDD*) ພາຍໃຕ້ລະບອບພາສີ IM8 ເພື່ອຈົດທະບຽນການມາຮອດຂອງສິນຄ້າ. ປະຕິບັດຕາມລະບຽບການປົກກະຕິສຳລັບການນຳເຂົ້າສິນຄ້າ.

## Note 2

ບັນດາເອກະສານທີ່ຕ້ອງຕິດຄັດມາພ້ອມໃບແຈ້ງການຂົນສົ່ງຜ່ານແມ່ນເອກະສານປົກກະຕິທີ່ຈຳເປັນຕ້ອງມີສຳລັບການແຈ້ງການນຳເຂົ້າ, ຕົວຢ່າງ

- ໃບຮຽກເກັບເງິນທາງການຄ້າ ຫຼື ສັນຍາການຂາຍ
- ໃບຂົນສົ່ງສິນຄ້າທາງທະເລ ຫຼື ໃບລາຍການຂົນສົ່ງສິນຄ້າທາງບົກ
- ລາຍການຫຸ້ມຫໍ່ (Packing List)
- ໃບອະນຸຍາດ ຫຼື ໃບອະນຸມັດສະເພາະທີ່ກ່ຽວຂ້ອງກັບສິນຄ້າທີ່ກຳລັງຂົນສົ່ງ

## Note 3

ສິນຄ້າທີ່ຂົນສົ່ງຜ່ານຕ້ອງໄປຕາມເສັ້ນທາງທີ່ທາງດ່ານພາສີກຳນົດໃຫ້.

## Note 4

ກ່ອນຮອດດ່ານຊາຍແດນຂາອອກຂອງລາວ ບັນດາຜູ້ຄ້າຂາຍຕ້ອງຍື່ນໃບແຈ້ງພາສີເພື່ອສົ່ງອອກສິນຄ້ານັ້ນ ພາຍໃຕ້ລະບອບພາສີ IM8 ໂດຍນຳໃຊ້ *ແບບຟອມ ACDD*. ປະຕິບັດຕາມລະບຽບການປົກກະຕິສຳລັບການສົ່ງອອກສິນຄ້າ

## Note 5

ນອກຈາກບັນດາເອກະສານທາງການຄ້າທັງໝົດທີ່ໄດ້ກ່າວມາຂ້າງເທິງນັ້ນແລ້ວ ບັນດາຜູ້ຄ້າຂາຍຕ່າງໆຍັງຕ້ອງໄດ້ຍື່ນສຳເນົາຂອງໃບແຈ້ງການຂົນສົ່ງຜ່ານຂາເຂົ້ານຳອີກ.

## ຂັ້ນຕອນການຈົດທະບຽນ ແລະ ສະເໜີຂໍນຳເຂົ້າຢາ

ກ່ອນການນຳເຂົ້າຢາເພື່ອຮັກສາພະຍາດເຂົ້າມາ ສປປລາວ ຜູ້ນຳເຂົ້າຕ້ອງໄດ້ຮັບໃບຢັ້ງຢືນຈາກກະຊວງສາທາລະນະສຸກເສຍກ່ອນ ອັນນີ້ກໍເພື່ອຢັ້ງຢືນວ່າຢາເຫຼົ່ານີ້ບໍ່ຂັດຕໍ່ລະບຽບຫຼັກການຕ່າງໆທີ່ກົດໝາຍໄດ້ວາງໄວ້. ຂັ້ນຕອນເຫຼົ່ານີ້ ຍັງສາມາດ ໃຊ້ໄດ້ກັບເຄື່ອງສຳອາງ ແລະຢາພື້ນເມືອງ. ແຕ່ວ່າສຳລັບ ຢາພື້ນເມືອງທ່ານຄວນກວດສອບ ກ່ອນວ່າມີພຶດຊະນິດໃດແດ່ທີ່ ຈັດເປັນຢາພື້ນເມືອງ.

ຂັ້ນຕອນຕໍ່ໄປນີ້ແມ່ນຂະບວນການຈົດທະບຽນຢາ.


Note 1
Note 3

## Note 1

ທ່ານສາມາດເອົາໃບສະເໜີໄດ້ຈາກກະຊວງສາທາລະນະສຸກ.
ເພື່ອກວດເບິ່ງແບບຟອມໃບສະເໜີ ເພື່ອກວດເບິ່ງລາຍການເອກະສານທີ່ຈໍາເປັນສໍາລັບການຈົດທະບຽນຢາ. ພາຍຫຼັງສອງປີທ່ານຕ້ອງໄດ້ສະເໜີຂໍຕໍ່ການຈົດທະບຽນຄືນໃໝ່ ເພື່ອກວດເບິ່ງຄືນລາຍການເອກະສານທີ່ຈໍາເປັນສໍາລັບການຕໍ່ທະບຽນຢາ.

## Note 2

ການສະເໜີແຜນການນໍາເຂົ້າຕ້ອງປະກອບໄປພ້ອມກັບເອກະສານສະໜັບສະໜຸນຈໍານວນໜຶ່ງ. ລາຍລະອຽດຂອງເອກະສານອາດຈະແຕກຕ່າງກັນໄປຕາມປະເພດຂອງຜະລິດຕະພັນ. ໃນກໍລະນີທີ່ມີຂໍ້ສົງໄສ ທ່ານສາມາດສອບ ຖາມເພີ່ມເຕີມໄດ້ຈາກ ກົມອາຫານແລະຢາ ກະຊວງສາທາລະນະສຸກ.

## Note 3

ກະຊວງສາທາລະນະສຸກຈະໃຫ້ຜູ້ນໍາເຂົ້າສະໜອງຕົວຢ່າງຜະລິດຕະພັນເພື່ອວິເຄາະ. ການນໍາເຂົ້າຕົວຢ່າງກໍສາມາດສະເໜີໂດຍນໍາໃຊ້ແບບຟອມທີ່ມີໃຫ້.ເພື່ອເບິ່ງຕົວຢ່າງໃບສະເໜີນໍາເຂົ້າຕົວຢ່າງຢາເພື່ອຈົດທະບຽນ.

## Note 4

ພາຍຫຼັງທີ່ແຜນການນໍາເຂົ້າໄດ້ຮັບການອະນຸມັດແລ້ວ ກະຊວງສາທາລະນະສຸກແລ້ວກໍຈະອອກໃບຢັ້ງຢືນການຈົດທະບຽນ ພ້ອມດ້ວຍເງື່ອນໄຂຂໍ້ປະຕິບັດຈໍານວນໜຶ່ງທີ່ຜູ້ນໍາເຂົ້າຕ້ອງໄດ້ປະຕິບັດທຸກໆຄັ້ງທີ່ນໍາເຂົ້າ. *ໃບຢັ້ງຢືນການຈົດທະບຽນ* ນັ້ນມີອາຍຸຢູ່ໄລຍະໜຶ່ງ. ສໍາລັບການນໍາເຂົ້າແຕ່ລະຄັ້ງ ຜູ້ນໍາເຂົ້າຕ້ອງໄດ້ສະເໜີຂໍ *ໃບອະນຸຍາດນໍາເຂົ້າ* ຈາກກະຊວງສາທາລະນະສຸກ. *ກົດທີ່ນີ້* ເພື່ອກວດເບິ່ງຂະບວນການ ຂັ້ນຕອນໃນການສະເໜີຂໍ *ໃບອະນຸຍາດນໍາເຂົ້າ*.

## ການຈົດທະບຽນອາຫານ (ເສີມ)

ຂະບວນການດັ່ງກ່າວນີ້ແມ່ນສໍາລັບຜູ້ທີ່ຕ້ອງການນໍາເຂົ້າ"ອາຫານເສີມ". ໃນກໍລະນີນີ້ທ່ານຈະຕ້ອງມີໃບຢັ້ງຢືນການຈົດທະບຽນກ່ອນທີ່ຈະດໍາເນີນການຕໍ່ຕາມຂັ້ນຕອນການນໍາເຂົ້າປົກກະຕິ.


ຜູ້ຮ້ອງຂໍຍື່ນໃບສະເໜີ
Note 1
ປະກອບເອກະສານຕາມແບບຟອມແລ້ວຍື່ນເຂົ້າກະຊວງສາທາລະນະສຸກ
Note 2
ສະເໜີຂໍຈົດທະບຽນອາຫານ
ແຜນການນຳເຂົ້າ
ເອກະສານສະໜັບສະໜູນອື່ນໆ
ກະຊວງສາທາລະນະສຸກ ກວດ ແລະ ຕັດສິນເອກະສານ
ຫາກບໍ່ອະນຸມັດ
ຫາກ ອະນຸມັດ
ຜູ້ຍື່ນສະເໜີຈະໄດ້ຮັບແຈ້ງວ່າເອກະສານບໍ່ຜ່ານ
ກະຊວງສາທາລະນະສຸກອອກໃບຢັ້ງຢືນ
Note 3
ໃບຢັ້ງຢືນການຈົດທະບຽນ
Note 4
ຜູ້ສະເໜີດຳເນີນການຕາມຂັ້ນຕອນການນຳເຂົ້າປົກກະຕິ

## Note 1

ທ່ານສາມາດຊື້ແບບຟອມໃບສະເໜີນີ້ໄດ້ຈາກກະຊວງສາທາລະນະສຸກໃນລາຄາ 2000 ກີບ.

ເພື່ອກວດເບິ່ງແບບຟອມໃບສະເໜີຂໍໃບຢັ້ງຢືນຈົດທະບຽນ.

## Note 2

ຜູ້ນຳເຂົ້າຕ້ອງຍື່ນໃບສະເໜີກັບກະຊວງສາທາລະນະສຸກພ້ອມກັນກັບແຜນການນຳເຂົ້າແລະເອກະສານະໜັບສະໜູນອື່ນໆ. ເອກະສານອື່ນໆທີ່ຕ້ອງໄດ້ຍື່ນພ້ອມກັນໄດ້ລະບຸໄວ້ໃນແບບຟອມໃບສະເໜີແລ້ວ. ເຖິງຢ່າງໃດກໍ່ຕາມ, ລາຍລະອຽດຂອງ ເອກະສານອາດຈະແຕກຕ່າງຕາມປະເພດຜະລິດຕະພັນສະເພາະ ດັ່ງນັ້ນ ທ່ານຈື່ງຄວນຂໍ ຄຳແນະນຳເພີ່ມເຕີມຈາກໜ່ວຍງານທີ່ ກ່ຽວຂ້ອງພາຍໃນກະຊວງສາທາລະນະສຸກລ່ວງໜ້າ ກ່ຽວກັບວ່າ ເອກະສານປະເພດໃດແທ້ທີ່ທ່ານຕ້ອງໄດ້ຍື່ນເພີ່ມເຕີມ.

## Note 3

ກະຊວງສາທາລະນະສຸກອອກ *ໃບຢັ້ງຢືນການຈົດທະບຽນ*. ຂັ້ນນີ້ອາດຈະກິນເວລາດົນແດ່ ສຳລັບລາຍລະອຽດແນ່ນອນກ່ຽວກັບເວລານັ້ນໃຫ້ສອບຖາມຄືນໃນເວລາທີ່ທ່ານຍື່ນຕົວຈິງ.

## Note 4

ພາຍຫຼັງທີ່ໄດ້ຮັບ *ໃບຢັ້ງຢືນການຈົດທະບຽນ* ແລ້ວ ຜູ້ນຳເຂົ້າສາມາດດຳເນີນການຕາມຂັ້ນຕອນການນຳເຂົ້າປົກກະຕິ. ການນຳເຂົ້າແຕ່ລະຄັ້ງຕ້ອງໄດ້ເຮັດສະເໜີຫາກະຊວງສາທາລະນະສຸກທຸກຄັ້ງ ກົດທີ່ນີ້ເພື່ອເບິ່ງຂັ້ນຕອນນີ້.

## ການນຳເຂົ້າອາຫານ

ຫາກທ່ານຕ້ອງການນຳເຂົ້າຜະລິດຕະພັນອາຫານ ທ່ານຄວນກວດເບິ່ງຂະບວນການນຳເຂົ້າຄືດັ່ງລຸ່ມນີ້. ຜະລິດຕະພັນອາຫານໝາຍເຖິງຜະລິດຕະພັນປະເພດສັດ ຫຼືພືດຜັກທີ່ໄດ້ຜ່ານຂະບວນການຜະລິດຫຼືຫຸ້ມຫໍ່ແລ້ວ.
ຫາກທ່ານນຳເຂົ້າສັດຫຼື ປາແຊ່ແຂງ ກະລຸນາຕິດຕາມຂະບວນການຂັ້ນຕອນຂ້າງລຸ່ມນີ້.



## Note 1

ຜູ້ນໍາເຂົ້າທີ່ຕ້ອງການຜະລິດຕະພັນອາຫານຕ້ອງສະເໜີເອກະສານຫຼາຍຊະນິດຕໍ່ກົມອາຫານແລະຢາ ກະຊວງສາທາລະນະສຸກ ເພື່ອຂໍໃບອະນຸຍາດນໍາເຂົ້າ. ຜູ້ນໍາເຂົ້າຕ້ອງຂຽນຕາມແບບຟອມທີ່ກໍານົດໄວ້.

## Note 2

*ກົດທີ່ນີ້* ເພື່ອກວດເບິ່ງແບບຟອມໃບສະເໜີ.

## Note 3

ເວລາຍື່ນໃບສະເໜີ ຕ້ອງໄດ້ຍື່ນພ້ອມກັບເອກະສານສະໜັບສະໜູນອື່ນໆ ເພື່ອໃຫ້ກະຊວງສາທາລະນະສຸກປະເມີນ ແລະ ພິຈາລະນາຜະລິດຕະພັນທີ່ຈະນໍາເຂົ້າ. ເອກະສານປະກອບເຫຼົ່ານີ້ອາດລວມເຖິງໃບຢັ້ງຢືນການວິເຄາະ ແລະ ເອກະສານ ຢັ້ງຢືນອື່ນໆ.

ໂດຍທົ່ວໄປແລ້ວລາຍລະອຽດຂອງເອກະສານທີ່ຈໍາເປັນແມ່ນຈະລະບຸຢູ່ໃນແບບຟອມໃບສະເໜີ ແຕ່ວ່າຫາກທ່ານມີຂໍ້ສົງໄສໃດໆ ກະລຸນາຕິດຕໍ່ຖາມລາຍລະອຽດເພີ່ມເຕີມໄດ້ຈາກ*ກະຊວງສາທາລະນະສຸກ*.

## Note 4

*ກະຊວງສາທາລະນະສຸກ* ເປັນຜູ້ອອກ *ໃບອະນຸຍາດນໍາເຂົ້າ* ນີ້. ທ່ານຈະຕ້ອງແຈ້ງເອກະສານນີ້ຕໍ່ເຈົ້າໜ້າທີ່ພາສີແລະເຈົ້າໜ້າທີ່ຂອງ*ກະຊວງສາທາລະນະສຸກ*ທີ່ຢູ່ປະຈໍາດ່ານໃນເວລາທີ່ນໍາເຂົ້າ.

## Note 5

ຜູ້ນໍາເຂົ້າອາດຈະດໍາເນີນຕາມຂັ້ນຕອນການນໍາເຂົ້າທົ່ວໄປຕໍ່ຈາກນີ້

## Note 6

ເມື່ອສິນຄ້າມາຮອດຊາຍແດນ ຜູ້ນໍາເຂົ້າຕ້ອງສະແຈ້ງຕໍ່ເຈົ້າໜ້າທີ່ຂອງກະຊວງສາທາລະນະສຸກ ເຊິ່ງເພິ່ນຈະກວດເອກະສານ ແລະ ກວດສິນຄ້າ ກ່ອນຈະພິຈາລະນາປ່ອຍສິນຄ້າ.

## ການນໍາເຂົ້າສິນຄ້າກະສິກໍາ

ຫາກທ່ານຕ້ອງການນໍາເຂົ້າຜະລິດຕະພັນກະສິກໍາທີ່ຕ້ອງການໃບອະນຸຍາດນໍາເຂົ້າ ກະລຸນາປະຕິບັດຕາມຂະບວນການຂັ້ນຕອນດັ່ງຕໍ່ໄປນີ້. ສິ່ງເຫຼົ່ານີ້ໝາຍເຖິງ ສານປ້ອງກັນສັດຕູພືດ ແລະຜະລິດຕະພັນອື່ນໆທີ່ໃກ້ຄຽງ. ໜ່ວຍງານທີ່ຮັບຜິດຊອບໃນການອອກໃບອະນຸຍາດ ແລະກໍແມ່ນໜ່ວຍງານທີ່ດໍາເນີນການກວດກາປະຈໍາຢູ່ດ່ານແມ່ນ *ກົມປູກຝັງ ກະຊວງກະສິກໍາ ແລະປ່າໄມ້.*


Note 1
Trader submits import plan to MAF
Note 2
Note 3
Note 4
Note 5
Note 6
Note 7

## Note 1

ຜູ້ນຳເຂົ້າຄັ້ງທຳອິດຫາກຕ້ອງການນຳເຂົ້າຜະລິດຕະພັນສະເພາະໃດໜຶ່ງທີ່ຕ້ອງໄດ້ຮັບໃບອະນຸຍາດ ຜູ້ນຳເຂົ້າຕ້ອງໄດ້ສະເໜີຕໍ່ກົມປູກຝັງ ກະຊວງກະສິກຳແລະປ່າໄມ້. ບໍ່ມີແບບຟອມໃບສະເໜີແນ່ນອນ ພຽງແຕ່ຮ່າງເປັນຈົດໝາຍໃບສະເໜີກໍໄດ້.

## Note 2

ການສະເໜີຕ້ອງປະກອບໄປພ້ອມໆກັບເອກະສານສະໜັບສະໜູນອື່ນໆທີ່ຈະຊ່ວຍເຮັດໃຫ້ກະຊວງກະສິກຳ ແລະປ່າໄມ້ພິຈາລະນາຜະລິດຕະພັນໄດ້ງ່າຍ. ກະຊວງກະສິກຳແລະປ່າໄມ້ ຈະໃຫ້ຄຳແນະນຳແກ່ທ່ານ ວ່າຄວນຈະປະກອບເອກະສານຫຍັງແດ່.

## Note 3

ກະຊວງກະສິກຳ ແລະປ່າໄມ້ ອອກ***ເງື່ອນໄຂຂອງການນຳເຂົ້າ*** ເອກະສານນີ້ຈະລະບຸເຖິງເງື່ອນໄຂສະເພາະທີ່ຜູ້ນຳເຂົ້າຕ້ອງປະຕິບັດໃນເວລານຳເຂົ້າມາ. ຜູ້ນຳເຂົ້າຕ້ອງໄດ້ແຈ້ງເອກະສານນີ້ຕໍ່ເຈົ້າໜ້າທີ່ພາສີ ແລະ ຕໍ່ເຈົ້າໜ້າທີ່ຂອງ ກະຊວງກະສິກຳ ແລະປ່າໄມ້ຢູ່ດ່ານນຳເຂົ້າພ້ອມ.

## Note 4

ຫຼັງຈາກການນຳເຂົ້າຄັ້ງທຳອິດແລ້ວ ຫາກຜູ້ນຳເຂົ້າຕ້ອງການນຳເຂົ້າສິນຄ້າດຽວກັນ ຈາກຜູ້ສະໜອງດຽວກັນ ອາດຈະສະເໜີຂໍໃບອະນຸຍາດນຳເຂົ້າໂດຍກົງດ້ວຍການສະເໜີຕາມແຜນການນຳເຂົ້າທີ່ມີຢູ່ແລ້ວ.

## Note 5

ເມື່ອຜູ້ນຳເຂົ້າໄດ້ກຽມພ້ອມສຳລັບການນຳເຂົ້າແລ້ວ ລາວຈະຕ້ອງໄດ້ຮັບໃບອະນຸຍາດຈາກກະຊວງ ກະສິກຳ ແລະ ປ່າໄມ້ສຳລັບການນຳເຂົ້າສະເພາະຄັ້ງນັ້ນ. ຂໍຈາກກະຊວງກະສິກຳແລະປ່າໄມ້ໂດຍຍື່ນໃບສະເໜີຂໍອະນຸຍາດ ພ້ອມທັງເງື່ອນໄຂການນຳເຂົ້າ ແລະ ເອກະສານທາງການຄ້າທີ່ສາມາດສະໜອງໄດ້ ເຊັ່ນ ໃບອິນວອຍສ ໃບ Bill of Lading ເປັນຕົ້ນ.

## Note 6

ຜູ້ນຳເຂົ້າອາດຈະດຳເນີນຕາມຂັ້ນຕອນການນຳເຂົ້າປົກກະຕິໄດ້ແລ້ວ

## Note 7

ເມື່ອສິນຄ້າມາຮອດຊາຍແດນແລ້ວ ຜູ້ນຳເຂົ້າຕ້ອງໄດ້ແຈ້ງຕໍ່ເຈົ້າໜ້າທີ່ກະຊວງກະສິກຳແລະປ່າໄມ້ ເຊິ່ງເພິ່ນຈະໄດ້ກວດກາເອກະສານ ຕ່າງແລະ ອາດຈະກວດສິນຄ້າໂຕຈິງກ່ອນຈະປ່ອຍໃຫ້ສິນຄ້າອອກຈາກດ່ານ. ຫາກສັດທີ່ນຳເຂົ້າມານັ້ນຈຳເປັນຕ້ອງໄດ້ຜ່ານການກັກກັນກ່ອນ ຜູ້ນຳເຂົ້າກໍຕ້ອງໄດ້ກັກບໍລິເວນສັດຢູ່ສະຖານທີ່ຂອງຕົນເອງ ຈົນກວ່າຈະຄົບຕາມກຳນົດກັກກັນທີ່ເຈົ້າໜ້າທີ່ກະຊວງກະສິກຳແລະປ່າໄມ້ໄດ້ກຳນົດໃຫ້.

## ການນໍາເຂົ້າຜະລິດຕະພັນກະສິກໍາ - ພືດ ແກ່ນ ໝາກໄມ້ ຜັກ

ຫາກທ່ານຕ້ອງການນໍາເຂົ້າຜະລິດຕະພັນກະສິກໍາ ເຊັ່ນ ພືດ ແກ່ນ ໝາກໄມ້ ຜັກ ເພື່ອບໍລິໂພກ ຫຼືປູກຝັງ ທ່ານຄວນອ່ານ ຕາມ ຂະບວນການຕໍ່ໄປນີ້.

ໜ່ວຍງານທີ່ຮັບຜິດຊອບທາງວິຊາການໃນການອອກໃບອະນຸຍາດນໍາເຂົ້າແລະກໍາກັບກວດກາຢູ່ດ່ານ ແມ່ນກົມປູກຝັງ ກະຊວງກະສິກໍາແລະປ່າໄມ້.


Note 1
Trader submits import plan to MAF
Note 2
Note 3
Note 4
Note 5
Note 6
Note 7

## Note 1

ສຳລັບການນຳເຂົ້າຄັ້ງທຳອິດ ທ່ານຕ້ອງໄດ້ຮັບໃບອະນຸຍາດເຫຼົ່ານີ້ກ່ອນ ທ່ານຈະຕ້ອງໄດ້ສະເໜີແຜນການ ນຳເຂົ້າກັບ *ກົມປູກຝັງ ກະຊວງກະສິກຳແລະປ່າໄມ້.* ໃນການສະເໜີນີ້ບໍ່ມີແບບຟອມມາດຕະຖານ ພຽງແຕ່ຮ່າງຈົດໝາຍ ສະເໜີ ກໍພຽງພໍແລ້ວ.

## Note 2

ການສະເໜີຕ້ອງປະກອບພ້ອມກັບເອກະສານສະໜັບສະໜູນອື່ນໆ ເພື່ອໃຫ້ເຈົ້າໜ້າທີ່ຂອງກະຊວງ ກະສິກຳແລະປ່າໄມ້ ສາມາດພິຈາລະນາຜະລິດຕະພັນທ່ານ. ເພິ່ນຈະແນະນຳວ່າຄວນກະກຽມເອກະສານສະເພາະໃດແດ່. ໃບແຜນນຳເຂົ້າ ຕ້ອງລະບຸໃຫ້ແຈ້ງເຖິງປະລິມານແລະຄວາມຖີ່ຂອງການນຳເຂົ້າ.

## Note 3

ກະຊວງກະສິກຳແລະປ່າໄມ້ຈະອອກ *ໃບອະນຸຍາດນຳເຂົ້າພືດ ຜະລິດຕະພັນພືດ* ທີ່ລະບຸ ລາຍລະອຽດຂອງ ເງື່ອນໄຂ ທີ່ຜູ້ນຳເຂົ້າຕ້ອງປະຕິບັດພ້ອມ. ເອກະສານນີ້ຈະລະບຸລາຍລະອຽດທີ່ຜູ້ນຳເຂົ້າຕ້ອງປະຕິບັດຕາມໃນເວລານຳເຂົ້າ. ຕ້ອງ ໄດ້ແຈ້ງເອກະສານນີ້ຕໍ່ກັບເຈົ້າໜ້າທີ່ພາສີແລະເຈົ້າໜ້າທີ່ກວດກາຂອງກະຊວງກະສິກຳແລະປ່າໄມ້ຢູ່ດ່ານຂາເຂົ້າໃນເວລາ ນຳສິນຄ້າເຂົ້າ.

## Note 4

ສຳລັບການນຳເຂົ້າທຸກໆຄັ້ງ ຜູ້ນຳເຂົ້າຕ້ອງໄດໄດ້ສະເໜີຂໍ *ໃບອະນຸຍາດນຳເຂົ້າ*ໂດຍສະແດງແຜນການ ນຳເຂົ້າໃຫ້ກັບ ເຈົ້າໜ້າທີ່ຂອງກະຊວງກະສິກຳ ແລະປ່າໄມ້.

## Note 5

ເມື່ອຜູ້ນຳເຂົ້າກຽມພ້ອມເພື່ອການນຳເຂົ້າແລ້ວ, ທ່ານກໍຕ້ອງໄດ້ຮັບ *ໃບອະນຸຍາດນຳເຂົ້າພືດ ຜະລິດຕະພັນ ພືດ*ຈາກ ກະຊວງກະສິກຳແລະປ່າໄມ້. ໃນການສະເໜີຂໍນີ້ ທ່ານກໍຕ້ອງໄດ້ເຮັດໃບສະເໜີ ພ້ອມກັບເອກະສານຫຼັກຖານ ທາງດ້ານ ການຄ້າອື່ນໆ ເຊັ່ນໃບຮຽກເກັບເງິນ ໃບຈັດສົ່ງສິນຄ້າ ຕ່າງໆເປັນຕົ້ນ.

## Note 6

ຜູ້ນຳເຂົ້າອາດຈະດຳເນີນຕາມຂັ້ນຕອນການນຳເຂົ້າທົ່ວໄປຕໍ່ຈາກນີ້

## Note 7

ເມື່ອສິນຄ້າມາຮອດຊາຍແດນແລ້ວ ຜູ້ນຳເຂົ້າຕ້ອງໄດ້ນຳສະເໜີຕໍ່ກັບເຈົ້າໜ້າທີ່ກະຊວງກະສິກຳ ແລະ ປ່າໄມ້ກ່ອນຈະໄດ້ ຮັບອະນຸຍາດໃຫ້ນຳເຂົ້າ.

ຜູ້ນຳເຂົ້າຈະຕ້ອງໄດ້ແຈ້ງ *ໃບແຈ້ງ*ໂດຍສະເພາະແມ່ນກັບເຈົ້າໜ້າທີ່ຂອງກະຊວງກະສິກຳແລະປ່າໄມ້. ຫາກສິນຄ້າຈຳເປັນ ຕ້ອງໄດ້ຮັບການກັກກັນກ່ອນ ຜູ້ນຳເຂົ້າກໍຕ້ອງໄດ້ກັກກັນກ່ອນຢູ່ທີ່ສະຖານທີ່ຂອງຜູ້ນຳເຂົ້າເອງ ໃນໄລຍະ ທີ່ເພິ່ນ ກຳນົດ ໃຫ້.

## ການນຳເຂົ້າສັດ

ຫາກທ່ານຕ້ອງການນຳເຂົ້າສັດ ກະລຸນາປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້. ກ່ອນຈະນຳເຂົ້າສັດເປັນ ທ່ານຈະຕ້ອງໄດ້ຮັບໃບຢັ້ງຢືນທາງວິຊາການ ຈາກກົມລ້ຽງສັດ ແລະການປະມົງ ກະຊວງກະສິກຳ ແລະ ປ່າໄມ້.



## Note 1

ຜູ້ນຳເຂົ້າທີ່ຕ້ອງການນຳເຂົ້າສັດເພື່ອວັດຖຸປະສົງໃນການບໍລິໂພກຕ້ອງໄດ້ແຈ້ງເອກະສານຫຼາຍຊະນິດໃຫ້ແກ່ກົມລ້ຽງສັດ ແລະການປະມົງ ເພື່ອໃຫ້ເພິ່ນອອກໃບຢັ້ງຢືນທາງວິຊາການໃຫ້. ບໍ່ມີແບບຟອມທີ່ແນ່ນອນ ພຽງແຕ່ເປັນໃບ ສະເໜີທົ່ວໄປກໍໃຊ້ໄດ້ແລ້ວ.

## Note 2

ການສະເໜີຕ້ອງປະກອບໄປພ້ອມໆກັບເອກະສານສະໜັບສະໜູນອື່ນໆທີ່ຈະຊ່ວຍເຮັດໃຫ້ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາຜະລິດຕະພັນໄດ້ງ່າຍ. ເອກະສານເຫຼົ່ານີ້ ອາດລວມເຖິງໃບຢັ້ງຢືນສຸຂະພາບສັດ ຫຼືໃບຢັ້ງຢືນການສັກຢາກັນພະຍາດ ແລະອາດຈະແຕກຕ່າງກັນໄປ ຕາມແຕ່ລະປະເພດສັດ. ກະຊວງກະສິກຳແລະປ່າໄມ້ ຈະໃຫ້ຄຳແນະນຳແກ່ທ່ານວ່າຄວນຈະປະກອບເອກະສານຫຍັງແດ່.

## Note 3

ກະຊວງກະສິກຳ ແລະປ່າໄມ້ ອອກ ***ໃບຢັ້ງຢືນທາງວິຊາການ.*** ຜູ້ນຳເຂົ້າຕ້ອງໄດ້ແຈ້ງເອກະສານນີ້ຕໍ່ເຈົ້າໜ້າທີ່ພາສີ ແລະຕໍ່ເຈົ້າໜ້າທີ່ຂອງກະຊວງກະສິກຳ ແລະປ່າໄມ້ຢູ່ດ່ານນຳເຂົ້າພ້ອມ.

## Note 4

ຜູ້ນຳເຂົ້າອາດຈະດຳເນີນຕາມຂັ້ນຕອນການນຳເຂົ້າປົກກະຕິໄດ້ແລ້ວ

## Note 5

ເມື່ອສິນຄ້າມາຮອດຊາຍແດນແລ້ວ ຜູ້ນຳເຂົ້າຕ້ອງໄດ້ແຈ້ງຕໍ່ເຈົ້າໜ້າທີ່ກະຊວງກະສິກຳແລະປ່າໄມ້ ເຊິ່ງເພິ່ນຈະໄດ້ກວດກາເອກະສານຕ່າງໆແລະ ອາດຈະກວດສິນຄ້າໂຕຈິງກ່ອນຈະປ່ອຍໃຫ້ສິນຄ້າອອກຈາກດ່ານ. ຫາກສັດທີ່ນຳເຂົ້າມານັ້ນຈຳເປັນຕ້ອງໄດ້ຜ່ານການກັກກັນກ່ອນ ຜູ້ນຳເຂົ້າກໍຕ້ອງໄດ້ກັກບໍລິເວນສັດຢູ່ສະຖານທີ່ຂອງຕົນເອງ ຈົນກວ່າຈະຄົບ ຕາມກຳນົດກັກກັນທີ່ເຈົ້າໜ້າທີ່ກະຊວງກະສິກຳແລະປ່າໄມ້ໄດ້ກຳນົດໃຫ້.

## ການນໍາເຂົ້າປາ

ຫາກທ່ານຕ້ອງການນໍາເຂົ້າປາເປັນ ສໍາລັບການບໍລິໂພກຫຼືເພື່ອຂະຫຍາຍພັນ ຫຼືນໍາເຂົ້າປາແຊ່ແຂງ ທ່ານຄວນປະຕິບັດຕາມ ຂະບວນການຂັ້ນຕອນຕໍ່ໄປນີ້.

ກ່ອນທີ່ທ່ານຈະນໍາເຂົ້າຜລິດຕະພັນປາ ທ່ານຕ້ອງມີໃບທະບຽນທຸລະກິດ ແລະທະບຽນອາກອນ ພ້ອມທັງບົດວິພາກເສດຖະ ກິດທີ່ໄດ້ອະທິບາຍວ່າການນໍາເຂົ້າຂອງທ່ານແມ່ນເພື່ອວັດຖຸປະສົງຫຍັງ (ຕົວຢ່າງ ເພື່ອຂະຫຍາຍພັນ).

ບົດວິພາກ ຫຼືແຜນທຸລະກິດນີ້ຕ້ອງໄດ້ຜ່ານການເຫັນດີຈາກກະຊວງອຸດສາຫະກໍາ ແລະການຄ້າ ແລະ ກະຊວງກະສິກໍາ ແລະປ່າໄມ້. ແຜນດັ່ງກ່າວນີ້ອາດມີກໍານົດເວລາ. ສໍາລັບການນໍາເຂົ້າແຕ່ລະຄັ້ງ ທ່ານຈະຕ້ອງໄດ້ຂໍອະນຸຍາດ ຈາກກົມລ້ຽງສັດ ແລະການປະມົງ. ທາງກົມຈະກວດກາວ່າການນໍາເຂົ້າຂອງທ່ານສອດຄ່ອງກັບແຜນທຸລະກິດ ທີ່ໄດ້ ສະເໜີກ່ອນໜ້າຫຼືບໍ່. ຫາກທ່ານຕ້ອງການປ່ຽນແປງແຜນຫຼືລາຍລະອຽດໃນແຜນທຸລະກິດທ່ານກໍຈະຕ້ອງໄດ້ຮັບ ອະນຸຍາດຄືນໃໝ່ ຈາກກະຊວງອຸດສາຫະກໍາ ແລະການຄ້າ.

ສໍາລັບການນໍາເຂົ້າທຸກໆຄັ້ງ ໃຫ້ປະຕິບັດຄືດັ່ງຕໍ່ໄປນີ້.


ຜູ້ນຳເຂົ້າສະເໜີຂໍອະນຸຍາດນຳເຂົ້າສັດຈາກກົມລ້ຽງສັດ ແລະການປະມົງ ກະຊວງກະສິກຳ ແລະປ່າໄມ້
Note 1
ໃບສະເໜີ
Note 2
ເອກະສານສະໜັບສະໜູນອື່ນໆ
ກະຊວງກະສິກຳ ແລະປ່າໄມ້ ພິຈາລະນາໃບສະເໜີ (ອາດຈະຂໍເອກະສານເພີ່ມເຕີມ)
ກະຊວງກະສິກຳແລະປ່າໄມ້ ອອກໃບຢັ້ງຢືນເຕັກນິກ
ໃບຢັ້ງຢືນເຕັກນິກ
Note 3
Note 4
ນຳເຂົ້າ
Note 5
ແຈ້ງສິນຄ້ານຳເຂົ້າໃຫ້ເຈົ້າໜ້າທີ່ກັກກັນສັດຢູ່ດ່ານຂາເຂົ້າ
ພະນັກງານຂອງກະຊວງກະສິກຳ ແລະປ່າໄມ້ ຈະດຳເນີນການກວດກາ ກ່ອນປ່ອຍສິນຄ້າອອກຈາກດ່ານ

## Note 1

ຜູ້ນຳເຂົ້າທີ່ຕ້ອງການຜະລິດຕະພັນປາເປັນ ຫຼືປາແຊ່ແຂງຕ້ອງສະເໜີເອກະສານຫຼາຍຊະນິດຕໍ່ກົມລ້ຽງສັດ ແລະ ການປະມົງ ກະຊວງກະສິກຳແລະປ່າໄມ້ເພື່ອຂໍໃບອະນຸຍາດນຳເຂົ້າ. ບໍ່ມີແບບຟອມໃບສະເໜີມາດຕະຖານ ທ່ານສາມາດ ຮ່າງຈົດໝາຍສະເໜີດ້ວຍຕົນເອງເລີຍ.

## Note 2

ເວລາຍື່ນໃບສະເໜີ ຕ້ອງໄດ້ຍື່ນພ້ອມກັບເອກະສານສະໜັບສະໜູນອື່ນໆ ເພື່ອໃຫ້ກົມ ໄດ້ປະເມີນ ແລະ ພິຈາລະນາຜະລິດຕະພັນທີ່ຈະນຳເຂົ້າ. ປະເພດຂອງເອກະສານອາດຈະແຕກຕ່າງກັນຕາມຊະນິດສິນຄ້າທີ່ນຳເຂົ້າ.

## Note 3

*ກົມລ້ຽງສັດ ແລະ ການປະມົງ ກະຊວງກະສິກຳແລະປ່າໄມ້* ເປັນຜູ້ອອກ *ໃບອະນຸຍາດນຳເຂົ້າ* ນີ້. ທ່ານຈະຕ້ອງແຈ້ງເອກະສານນີ້ຕໍ່ເຈົ້າໜ້າທີ່ພາສີແລະເຈົ້າໜ້າທີ່ຂອງ*ກະຊວງກະສິກຳແລະປ່າໄມ້* ປະຈຳດ່ານໃນເວລາທີ່ນຳເຂົ້າ.

## Note 4

ຜູ້ນຳເຂົ້າອາດຈະດຳເນີນຕາມຂັ້ນຕອນການນຳເຂົ້າທົ່ວໄປຕໍ່ຈາກນີ້ (*ກົດທີ່ນີ້*ເພື່ອກວດເບິ່ງ).

## Note 5

ເມື່ອສິນຄ້າມາຮອດຊາຍແດນ ຜູ້ນຳເຂົ້າຕ້ອງສະແຈ້ງຕໍ່ເຈົ້າໜ້າທີ່ຂອງກະຊວງສາທາລະນະສຸກ ເຊິ່ງເພິ່ນຈະກວດ ເອກະສານ ແລະ ກວດສິນຄ້າ ກ່ອນຈະພິຈາລະນາປ່ອຍສິນຄ້າ.